1. <u>ຈຸດປະສົງ ແລະເປົ້າໝາຍຂອງການສຳຫລວດ</u> :

ປະຕິບັດຕາມແຜນການດຳເນີນງານຂອງສູນສະຖິຕິແຫ່ງຊາດ ປະກອບກັບການຊ່ວຍເຫລືອທາງດ້ານງົບປະມານ ແລະວິຊາການ ຈາກອົງການສິດາ ປະເທດ ສະວີເດັນ, ສະນັ້ນ ສູນສະຖິຕິແຫ່ງຊາດ ຈຶ່ງໄດ້ກະກຽມການສຳຫລວດຄົວເຮືອນປະຈຳປີ, ຊຶ່ງຈະເລີ້ມຕົ້ນສຳຫລວດໃນທ້າຍເດືອນ 10 ຫາຕົ້ນເດືອນ 11 ປີ 2004 ເປັນຕົ້ນໄປ ກຳນົດໄລຍະການສຳຫລວດແມ່ນ 15 ມື້ ຈຶ່ງສິ້ນສຸດການສຳຫລວດຢູ່ພາກສະໜາມ.ປີນີ້ເປັນປີທີສອງຂອງການສຳຫລວດຄົວເຮືອນ ແລະ ຈະໄດ້ດຳເນີນການສຳຫລວດນີ້ທຸກໆປີ.

ເປົ້າໝາຍຂອງການສຳຫລວດ ແມ່ນບັນດາຄົວເຮືອນສ່ວນບຸກຄົນ ເພື່ອເກັບກຳ ແລະສຳພາດຫົວໜ້າ ແລະສະມາຊິກໃນຄົວເຮືອນ ກ່ຽວກັບການໃຊ້ຈ່າຍ ແລະຊົມໃຊ້ໃນຄົວເຮືອນຂອງເຂົາເຈົ້າ ຊຶ່ງອາດຈະແມ່ນໃຊ້ຈ່າຍເປັນເງິນສົດ ຫລືນຳໃຊ້ຜົນຜະລິດຂອງຕົນເອງກໍ່ຕາມ ກໍ່ແມ່ນເອົາມາຕີລາຄາເປັນມູນຄ່າ.

ຈຸດປະສົງຕົ້ນຕໍ ຂອງການສຳຫລວດຄັ້ງນີ້ ປະກອບມີ :

- ສາມາດຄິດໄລ່ເສັ້ນຄວາມທຸກຍາກ
- ຄາດຄະເນການຊົມໃຊ້ຂອງຄົວເຮືອນ
- ສຶກສາເບິ່ງເງື່ອນໄຂການດຳລົງຊີວິດຂອງປະຊາຊົນ
- ຄາດຄະເນຜົນຜະລິດຂອງຄົວເຮືອນ
- ການນຳໃຊ້ແຮງງານ

2. <u>**ໜ້າທີ່ຂອງນັກເດີນສຳຫລວດ**</u> :

ຄຸນນະພາບ ຂອງການສຳຫລວດນີ້ ແມ່ນຂື້ນກັບນັກເດີນສຳຫລວດເປັນສ່ວນໃຫ່ຍ ໃນການນຳມົດຄຸນນະພາບ ຜົນຂອງການສຳຫລວດ. ດັ່ງນັ້ນ ມັນຈຶ່ງມີຄວາມສຳຄັນຫລາຍ ທີ່ນັກເດີນສຳຫລວດ ແລະນັກກວດກາ ຈະຕ້ອງປະຕິບັດຕາມຄຳແນະນຳໃນປຶ້ມຄູ່ມືນີ້ . ບັນດານັກເດີນສຳຫລວດມີໜ້າທີ່ ແລະພັນທະຕ່າງໆກ່ອນສຳຫລວດ ໃນໄລຍະສຳຫລວດ ແລະພາຍຫລັງສຳຫລວດແລ້ວ.

**2.1. ໜ້າທີ່ກ່ອນການສຳຫລວດ :**

- ເຂົ້າຮ່ວມການຝຶກອົບຮົມ ທີ່ຄະນະຮັບຜິດຊອບການສຳຫລວດຈັດຂື້ນ.
- ກວດກາ ເອກະສານສຳຫລວດ, ໃບສອບຖາມ, ອຸປະກອນຮັບໃຊ້ການສຳຫລວດ ກ່ອນການອອກເດີນທາງ
- ສະເໜີຕົນເອງຕໍ່ກັບອຳນາດການປົກຄອງບ້ານທີ່ຕົນຈະປະຕິບັດການສຳຫລວດ
- ຂື້ນບັນຊີຄົວເຮືອນ ແລະຄັດເລືອກຄົວເຮືອນຕົວແທນ
- ນັດພົບກັບບັນດາຄົວເຮືອນຕົວແທນ ໂດຍຜ່ານຄະນະບ້ານເປັນຊີ້ກາງ

- ຈົດກ່າຍລະຫັດທີ່ຕັ້ງໃສ່ໜ້າປົກຂອງໃບສອບຖາມ ແລະປື້ມບັນທຶກປະຈຳວັນຂອງແຕ່ລະຄົວເຮືອນຕົວແທນ.

## 2.2. ໜ້າທີ່ໃນຊ່ວງໄລຍະເດີນສຳຫລວດ :

- ສຳພາດທຸກຄຳຖາມທີ່ໄດ້ມີໃນແບບໃບສອບຖາມ. ການສຳພາດຕ້ອງປະຕິບັດຕາມການແນະນຳຂອງໃບສອບຖາມ.:
  - **ແບບສອບຖາມສຳລັບຄົວເຮືອນ.**

    I. ສ່ວນປະກອບຂອງຄົວເຮືອນ

    II. ດ້ານແຮງງານ

    III. ກິດຈະກຳກໍ່ສ້າງ ໃນ 12 ເດືອນຜ່ານມາ

    IV. ທຸລະກິດຂອງຄົວເຮືອນ

    V. ດ້ານກະສິກຳ

    VI. ການຊື້ ແລະການຂາຍເຄື່ອງໃຊ້ຍາວນານໃນ 12 ເດືອນຜ່ານມາ

    VII. ລາຍຮັບ ແລະການໂອນ
- *ການຕິດຕາມ ແລະສະຫລຸບການໃຊ້ຈ່າຍ ແລະລາຍຮັບຂອງຄົວເຮືອນ*

ພາຍຫລັງນັກເດີນສຳຫລວດໄດ້ສຳພາດຄົວເຮືອນໃນມື້ທຳອິດຄືບທຸກໆຄົວເຮືອນຕົວແທນແລ້ວ. ຈະຕ້ອງກັບຄືນໄປກວດກາການຈົດຈ່າຍຂອງຄົວເຮືອນກ່ຽວກັບການໃຊ້ຈ່າຍ, ການຊົມໃຊ້ ແລະລາຍຮັບປະຈຳວັນຂອງບັນດາຄົວເຮືອນຕົວແທນ. ການລົງໄປຕິດຕາມ ແລະກວດກາການຈົດກ່າຍຂອງຄົວເຮືອນ ແມ່ນຂຶ້ນກັບນັກເດີນສຳຫລວດ. ສຳຫລັບຄົວເຮືອນທີ່ຈົດກ່າຍເຂົ້າປື້ມໄດ້ເອງນັກເດີນສຳຫລວດຈະຕ້ອງໄປກວດກາ 2 ມື້ຕໍ່ນຶ່ງຄັ້ງ ເພື່ອສັກຖາມຄືນບາງອັນທີ່ຂຽນບໍ່ແຈ້ງ ແລະໃສ່ລະຫັດຄືນຕາມຄົວເຮືອນຈົດກ່າຍໄວ້ແລ້ວໃນປື້ມຕິດຕາມປະຈຳວັນ.

***ກໍລະນີ :*** ຄົວເຮືອນບໍ່ສາມາດຈົດກ່າຍໄດ້ເອງເຂົ້າປື້ມຕິດຕາມປະຈຳວັນນັ້ນ, ນັກເດີນສຳຫລວດຈະຕ້ອງໄດ້ໄປຈົດກ່າຍເອງທຸກໆ ວັນ ພ້ອມທັງໃສ່ລະຫັດເຂົ້າປື້ມເລີຍ.

## 2.3. ໜ້າທີ່ພາຍຫລັງສຳເລັດການສຳຫລວດ :

- ສົ່ງບັນດາເອກກະສານທີ່ໄດ້ສຳພາດແລ້ວ ໃຫ້ນັກກວດກາ ລວມມີ :
  1. ໃບສອບຖາມທີ່ສຳພາດແຕ່ລະຄົວເຮືອນຕົວແທນແລ້ວ
  2. ປື້ມບັນທຶກຕິດຕາມການຊົມໃຊ້ ແລະໃຊ້ຈ່າຍປະຈຳວັນ
  3. ບັນຊີຄົວເຮືອນ
- ສົ່ງຂ່າວ ກ່ຽວກັບບັນຫາຫຍຸ້ງຍາກຕ່າງໆ ຫລືຂໍ້ສັງເກດຕ່າງໆໃຫ້ນັກກວດກາ

## 2.4. ການຝຶກອົບຮົມ ນັກເດີນສຳຫລວດ :

ຜູ້ທີ່ຖືກຄັດເລືອກ ຈະມາເຮັດວຽກເປັນນັກເດີນສຳຫລວດ ຈຳເປັນຕ້ອງໄດ້ຜ່ານການຝຶກອົບຮົມຢ່າງລະອຽດຄັກແນ. ການຝຶກອົບຮົມປະກອບມີ ການຝຶກອົບຮົມຢູ່ໃນຫ້ອງຮຽນ ແລະຝຶກອົບຮົມຕົວຈິງ (ພາກສະໜາມ). ນັກເດີນສຳຫລວດ ຈະຕ້ອງອ່ານ ແລະຄົ້ນຄວ້າ ທຸກຄຳເວົ້າໃນປື້ມຄູ່ມື ແລະບັນດາໃບສອບຖາມ, ວິທີການຈົດກ່າຍທຸກຂັ້ນຕອນ, ນັກເດີນສຳຫລວດສາມາດຊັກຖາມໄດ້ທຸກເວລາໃນເວລາຝຶກອົບຮົມ ເພື່ອຫລີກເວັ້ນການເຮັດຜິດພາດໃນເວລາປະຕິບັດວຽກງານຕົວຈິງ.

ການຝຶກອົບຮົມນັກເດີນສຳຫລວດ ຈະໃຊ້ເວລາຢູ່ 5 ວັນ, ບໍ່ນັບການເດີນທາງໄປ - ກັບຂອງນັກເດີນສຳຫລວດ ຄື :

1. ຮຽນພາກທິດສະດີຕ່າງໆ 3 ວັນ
2. ລົງຝຶກຫັດຕົວຈິງຢູ່ບ້ານ 1ວັນ (ຮັບຜິດຊອບຢ່າງໜ້ອຍ 2 ຄົວເຮືອນ)
3. ທົບທວນຄືນ ແລະແຜນການປະຕິບັດຕົວຈິງ 1 ວັນ.

## 3. ບັນດານິຍາມ :

### 3.1. ນິຍາມຄົວເຮືອນ ສ່ວນບຸກຄົນ :

1. ຄົວເຮືອນທີ່ມີຄົນຜູ້ດຽວ ແມ່ນຄົນຜູ້ໜຶ່ງ ທີ່ຢູ່ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງເຮືອນຢູ່, ຊອກຫາອາຫານສຳລັບຕົວລາວເອງ ແລະສິ່ງຂອງທີ່ຈຳເປັນອື່ນໆສຳຫລັບການດຳລົງຊີວິດ ໂດຍປັດສະຈາກການຊອກຫາຮ່ວມກັນກັບຄົນອື່ນໆ
2. ຄົວເຮືອນມີຫລາຍຄົນ ແມ່ນກຸ່ມຄົນທີ່ມີສອງ ຫຼືຫລາຍກ່ວານັ້ນ ທີ່ຢູ່ທັງໝົດ ຫຼືສ່ວນໜຶ່ງຂອງເຮືອນຢູ່, ຊອກຫາອາຫານ ແລະສິ່ງຂອງຕ່າງໆທີ່ຈຳເປັນໃນການດຳລົງຊີວິດຮ່ວມກັນ. ປົກກະຕິແລ້ວຄົວເຮືອນແບບນີ້ປະກອບມີຜົວ,ເມັຽ ແລະລູກນ້ອຍ, ພີ່ນ້ອງ, ຄົນຮັບໃຊ້ ທີ່ອາໃສຢູ່ນຳ. ຜູ້ໃຫ້ເຊົ່າເຮືອນ ຈະຕ້ອງເອົາອອກຕ່າງຫາກ ບໍ່ນັບປັນສະມາຊິກຂອງຄົວເຮືອນ (ຄົວເຮືອນ ມັນແຕກຕ່າງກັນກັບຄອບຄົວ)

<u>ຕົວຢ່າງ 1</u>: ຄົວເຮືອນຂອງທ່ານຄຳມີ, ມີສາມຄອບຄົວຢູ່ນຳກັນຄື:1) ຄອບຄົວຂອງທ່ານ ຄຳມີ ຜົວ, ເມັຍ, ລູກຜູ້ບໍ່ທັນແຕ່ງງານ ແລະພີ່ນ້ອງ. 2) ຄອບຄົວລູກສາວ ຜົວ (ລູກເຂີຍ), ເມຍ ແລະລູກຂອງເຂົາເຈົ້າ. 3) ຄອບຄົວຂອງລູກຊາຍ ຜົວ, ເມຍ (ລູກໃພ້). ເຮືອນຫລັງນີ້ເອີ້ນວ່າຄົວເຮືອນໜຶ່ງ ໂດຍແມ່ນທ່ານຄຳມີເປັນຫົວໜ້າຄົວເຮືອນ

<u>ຕົວຢ່າງ 2</u>: ຄົວເຮືອນຂອງທ່ານ ບຸນຕາ ຊຶ່ງມີຜົວ, ເມຍ, ລູກຊາຍ ແລະພີ່ນ້ອງ (ນ້ອງຊາຍຂອງເມຍ) ດຳລົງຊີວິດຢູ່ຮ່ວມກັນໃນເຮືອນຫລັງດຽວກັນ ກໍລະນີນີ້ເອີ້ນວ່າຄົວເຮືອນນຶ່ງ.

### 3.2. ການໃຊ້ຈ່າຍຂອງຄົວເຮືອນ :

ການໃຊ້ຈ່າຍຂອງຄົວເຮືອນແມ່ນ:

ກ. ການໃຊ້ຈ່າຍເປັນເງິນສົດ ໃນການຊື້ສິນຄ້າ ແລະບໍລິການຮັບໃຊ້ ຊີວິດການເປັນຢູ່.

ຂ. ມູນຄ່າຂອງສິນຄ້າ ແລະບໍລິການຮັບໃຊ້ ເພື່ອການໃຊ້ຈ່າຍຕາມພາກສ່ວນຜະລິດຕະພັນຕ່າງໆ ຂອງຄົວເຮືອນ ແລະການຊົມໃຊ້ (ນັບທັງມູນຄ່າເຊົ່າເຮືອນ) ຫຼືໄດ້ໃຫ້ຜູ້ອື່ນລ້າ.

ຄ. ການໃຊ້ຈ່າຍເປັນມູນຄ່າ ຫຼືເປັນວັດຖຸສໍາລັບພາສີ, ບໍລິຈາກ, ດອກເບັ້ຍຂອງເງິນກູ້ຢືມ ແລະອື່ນໆ ທີ່ບໍ່ໃຊ້ເຂົ້າໃນການຊົມໃຊ້ .

## 3.3. ຖານະຕໍາແໜ່ງງານ :

- ລູກຈ້າງ: ແມ່ນໝາຍເຖິງຜູ້ທີ່ໄດ້ເຮັດວຽກໃນຖານະທີ່ເປັນລູກຈ້າງ ໄດ້ຮັບຄ່າຈ້າງຈາກນາຈາງ, ມັນອາດເປັນຄ່າແຮງງານ (ເງິນເດືອນທີ່ເປັນເງິນສົດ ຫລືເປັນວດັຖຸ ). ລູກຈ້າງເລົ່ານີ້ປະກອບມ ມີ: ຜູ້ອອກແຮງງານໃຫ້ລັດ, ຜູ້ອອກແຮງງານໃຫ້ລັດວິສາຫະກິດ, ລັດ - ເອກະຊົນ ແລະເອກະ ຊົນ.

ຕົວຢ່າງ: ພະນັກງານລັດຖະກອນ, ກໍາມະກອນໃນໂຮງຈັກໂຮງງານ, ຫົວໜ່ວຍທຸລະກິດ, ຫ້າງຮ້ານ ຫລືຜູ້ອອກແຮງງານຮັບຈ້າງອື່ນໆ

- ຜູ້ອອກແຮງງານໃຫ້ລັດ: ໝາຍເຖິງຈໍາພວກເຮັ່ດວຽກຢູ່ໃນພາກສ່ວນບໍລິຫານ, ຕຸລາການ ທີ່ບໍ່ມີລັກ ສະນະເປັນຫົວໜ່ວຍທຸລະກິດ ແລະແມ່ນລັດເປັນຜູ້ເບີກຈສ່າຍເງິນເດືອນໃຫ້

- ຜູ້ອອກແຮງງານໃຫ້ລັດວິສາຫະກິດ: ຫມາຍເຖິງຈໍາພວກທີ່ເຮັດວຽກ ແລະໄດ້ຮັບເງິນເດືອນຢູ່ ໃນບັນດາຫົວຫນ່ວຍທຸລະກິດຂອງລັດ.

- ຜູ້ອອກແຮງງານໃຫ້ລັດ - ເອກກະຊົນ: ຫມາຍເຖິງຜູ້ອອກແຮງງານທີ່ເຮັດວຽກນໍາບັນດາຫົວຫນ ວ່ຍວິສາຫະກິດປະສົມລະຫວາງລັດ ກັບເອກະຊົນ.

- ຜູ້ອອກແຮງງານໃຫ້ເອກກະຊົນ: ຫມາຍເຖິງຜູ້ທີ່ເຮັດວຽກໃຫ້ຜູ້ໃຊ້ແຮງງານ (ນາຍຈ້າງ) ແລະໄດ້ ຮັບຄ່າເປັນເງິນເດືອນ,ບໍາເນັດ,ເບ້ຍມື້, ຫລືໄດ້ຮັບຄ່າແຮງງານຕາມວຽກທີ່ມີບາງຄັ້ງຄາວ ຫລືວັດຖຸຕ່າງໆ ຈາກຜູ້ໃຊ້ແຮງງານ.

- ນາຍຈ້າງ : ຫມາຍເຖິງບຸກຄົນທີ່ດໍາເນີນການຜະລິດ, ທຸລະກິດຂອງຕົນເອງ ແລະໄດ້ວາຈ້າງ ຜູ້ ອອກແຮງງານນັ້ນ ແຕ່ນື່ງຄົນຂື້ນໄປ.
- ເຮັດວຽກໃຫ້ຕົນເອງ: ຫມາຍເຖິງຜູ້ທີ່ເຮັດວຽກໃຫ້ຕົນ (ນອກຈາກເຮັດໄຮ່, ເຮັດນາ, ເຮັດສວນ, ລ້ຽງ ສັດ ແລະວຽກອື່ນໆທີ່ກາວກັບກະສິກໍາ) ເຊັ່ນ: ພໍ່ຄ້ານ້ອຍ, ຊ່າງໄມ້, ແຕ່ບໍ່ໄດ້ວ່າຈ້າງຜູ້ອອກແຮງ ງານເຮັດວຽກໃຫ້ຕົນເອງ ຫລືເພື່ອກໍາໄລ.
- ຜູ້ທີ່ເຮັດວຽກໃຫ້ຄອບຄົວ: ຫມາຍເຖິງບັນດາສະມາຊິກໃນຄົວເຮືອນທີ່ເຮັດວຽກໃນວິສາຫະກິດ ຫລື ການຜະລິດ - ທຸລະກິດຂອງຄອບຄົວໂດຍທີ່ບໍ່ໄດ້ຮັບຄ່າຈ້າງ ຫລືກໍາໄລ
- ຊາວກະຊີກອນ: ແມ່ນນັບລວມຜູ້ທີ່ເຮັດໄຮ, ເຮັດນາ, ເຮັດສວນ, ລ້ຽງສັດ ທີ່ກ່ຽວກັບການຜະລິດກະ ສິກໍາ ແຕ່ບໍ່ແມ່ນຮູບແບບທຸລະກິດ.

- ຜູ້ຫວ່າງງານ: ແມ່ນບຸກຄົນທີ່ສາມາດເຮັດວຽກໄດ້ ແຕ່ບໍ່ໄດ້ເຮັດວຽກງານຢ່າງໃດເລີຍ ຫລືກຳລັງຊອກວຽກເຮັດຢູ່.
- ນັກຮຽນ/ນັກສຶກສາ: ທຸກຄົນທີ່ເຂົ້າໂຮງຮຽນເປັນປົກກະຕິ ໃນສະຖາບັນສຶກສາລັດ ຫຼືເອກະຊົນ, ລາວຕ້ອງເປັນນັກຮຽນຕາມເວລາທີ່ປົກກະຕິ ບໍ່ໄດ້ປະກອບກິດຈະກຳເສດຖະກິດເປັນປະຈຳ.
- ແມ່ເຮືອນ: ໝາຍເຖິງຜູ້ທີ່ເຮັດວຽກ, ອາດນັບທັງແມ່ຍິງ ຫຼືຜູ້ຊາຍ ເຊິ່ງເຮັດວຽກບ້ານ ການເຮືອນຢູ່ໃນຄົວເຮືອນຂອງຕົນ ແລະບໍ່ໄດ້ເຮັດເພື່ອຄ່າຈ້າງ ຫຼືກຳໄລ. ຖ້າຫາກບຸກຄົນເຮັດວຽກໃນທຸລະກິດຂອງຄົວເຮືອນ, ລາວຕ້ອງຖືກນັບເປັນປະເພດເຮັດວຽກໃຫ້ຕົນເອງ ຫຼືປະເພດເຮັດວຽກໃຫ້ຄົວເຮືອນໂດຍບໍ່ມີຄ່າຈ້າງ. ຜູ້ທີ່ເຮົາດວຽກບ້ານການເຮືອນ ເພື່ອຈ້າງ ບໍ່ຕ້ອງຈົດເຂົ້າປະເພດນີ້ ໃຫ້ຈົດຢູ່ປະເພດຜູ້ອອກແຮງງານໃນພາກສ່ວນເອກະຊົນ.
- ເບັ້ຽບຳນານ ຫຼືແກ່ສາລາ: ໝາຍເຖິງຜູ້ທີ່ບອກວ່າໃນ 12 ເດືອນຜ່ານມາ ສ່ວນຫລາຍແລ້ວ ລາວບໍ່ໄດ້ເຮັດກິດຈະກຳເສດຖະກິດຍ້ອນວ່າ ລາວລາອອກຈາກການ ແລ້ວມີເບັ້ຍບຳນານ, ເຖົ້າແກ່ ຫຼືສະມັກໃຈພັກຜ່ອນລ້າໆ.
- ພິການ ຫຼືເຈັບປ່ວຍດົນ: ໝາຍເຖິງຜູ້ທີ່ບອກວ່າໃນ 12 ເດືອນຜ່ານມາ ສ່ວນຫລາຍແລ້ວລາວບໍ່ໄດ້ເຮັດກິດຈະກຳເສດຖະແກິດ ຍ້ອນວ່າລາວເຈັບເປັນດົນນານ ຫຼືພິການ ບໍ່ສາມາດທີ່ຈະເຮັ່ດວຽກໄດ້.

## 4. ການຂຶ້ນບັນຊີຄົວເຮືອນ :

### 4.1. ຫົວໜ້າຄົວເຮືອນ :

ຫົວໜ້າຄົວເຮືອນ ແມ່ນຜູ້ມີບົດບາດ ແລະເຄົາລົບນັບຖືຈາກບັນດາສະມາຊິກຂອງຄົວເຮືອນ, ສ່ວນຫລາຍລາວຈະເປັນຜູ້ຫາລາຍຮັບມາໃຫ້ຄົວເຮືອນຫລາຍກ່ວາສະມາຊິກຂອງຄົວເຮືອນ ທັງເປັນຜູ້ເບິ່ງແຍງສະວັດດີການຂອງຄົວເຮືອນ. ຫົວໜ້າຄົວເຮືອນອາດແມ່ນເພດຊາຍຜູ້ເປັນຜົວ ຫລື ອາດຈະແມ່ນເພດຍິງຜູ້ເປັນເມັຍ.

4.**ການຂຶ້ນບັນຊີຄົວເຮືອນ** :

**ແມ່ນຄັດເລືອກເອົາ 10 ຄົວເຮືອນຈາກ 15 ຄົວເຮືອນໃນການສຳຫລວດການຊົມໃຊ້ ແລະ ໃຊ້ຈ່າຍຄົວເຮືອນ2002-2003 Lecs3.**

- **ການກວດສອບບ້ານໃຫ້ຖືກຕ້ອງ**

ກ່ອນຈະເລີ່ມສ້າງບັນຊີ, ທ່ານຕ້ອງໝັ້ນໃຈວ່າທ່ານໄດ້ໄປຖືກບ້ານແລ້ວ. ໃຫ້ສັງເກດຮູບພາບຂອງບ້ານ ແລ້ວ ກວດກາເບິ່ງແຜນວາດຂອງບ້ານ ວ່າມັນຖືກຕ້ອງສອດຄ່ອງກັນບໍ່. ນາຍບ້ານຈະເປັນຜູ້ຮູ້ດີ ກ່ຽວກັບຄົວເຮືອນໃດຢູ່ໃນຄວາມຮັບຜິດຊອບຂອງລາວເອງ.

ບາງຄັ້ງ, ທ່ານອາດພົບສະພາບຂອງບ້ານມີການປ່ຽນແປງ:

- ຫາກບ້ານໄດ້ປ່ຽນຊື່ໃໝ່, ການເດີນສຳຫຼວດຖືວ່າປົກກະຕິ. ບັນທຶກຊື່ບ້ານໃໝ່ໃສ່.

- ຖ້າບ້ານແຍກອອກເປັນ 2 ບ້ານໃໝ່, ໃຫ້ລວມເອົາທັງສອງບ້ານເລີຍ.

- ຖ້າບ້ານຫາກລວມເຂົາກັບບ້ານອື່ນແລ້ວຕັ້ງເປັນບ້ານນຶ່ງໃໝ່. ນັກເດີນສຳຫລວດຕ້ອງເລືອກເອົາແຕ່ຈຳນວນຄົວເຮືອນໃນບ້ານເດີມ.

ຖ້າ ທ່ານ ພົບຄວາມຫຍຸ້ງຍາກ ໃນການກຳນົດເຂດແດນບ້ານ, ພະຍາຍາມຕິດຕໍ່ພົບກັບນັກກວດກາຂອງ ທ່ານໂດຍດ່ວນ. ຜົນທີ່ໄດ້ຮັບຈາກການສຳຫຼວດຈະມີຄ່າສູງ ກໍຕໍ່ເມື່ອວ່າ ທຸກຄົວເຮືອນ ໄດ້ຂື້ນບັນຊີລາຍຊື່ໝົດ ແລະກໍ່ເປັນການຊ່ວຍແກ້ໄຂບັນຫາໃຫ້ວ່ອງໄວ.

## 5. ວິທີການຄັດເລືອກຕົວແທນ :

ການຄັດເລືອກຕົວແທນໃນການສຳຫລວດຄັ້ງນີ້ ໄດ້ອີງໃສ່ຜົນຂອງການສຳຫລວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນຄັ້ງທີ່ 3 ໃນສົກປີ 2002-2003, ໂດຍມາປະເມີນຄ່າຜິດພາດຂອງແຕ່ລະຕົວຊີ້ບອກຜ່ານມາ ແລະຊອກຫາ ຄວາມເປັນໄປໄດ້ຂອງຂໍ້ມູນ. ຜ່ານການຄິດໄລ່ ແລະ ຕີລາຄາຜ່ານມານັ້ນ ຈື່ງສະເໜີການສຳຫລວດການຊົມໃຊ້ ແລະໃຊ້ຈ່າຍຂຶ່ງຄົວເຮືອນປະຈຳປີຄັ້ງທີ 1 ນີ້ ມີ 2.400 ຄົວເຮືອນ ແລະ 240 ບ້ານຕົວແທນໃນຂອບເຂດທົ່ວປະເທດ.ການສຳຫລວດນີ້ໄດ້ໄຊ້ເວລາ 1 ເດືອນເຕັມໂດຍການຈັດແບ່ງການສຳຫລວດເປັນສອງໄລຍະຄື:ສຳຫລວດ 120 ບ້ານໃນສອງອາທິດທຳອິດ ແລະ ອີກ 120 ບ້ານໃນສອງອາທິດສຸດທ້າຍ(1ບ້ານໃຊ້ເວລາສຳຫລວດ 15 ວັນ).

- ຂັ້ນຕອນການຄັດເລືອກຄົວເຮືອນຕົວແທນ :

- ອີງຕາມບັນຊີຄົວເຮືອນທີ່ໄດ້ຄັດເລືອກຈາກການສຳຫລວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນສົກປີ2002-2003(ໂດຍການສຸ່ມເອົາ10 ຄົວເຮືອນ ຈາກ15 ຄົວເຮືອນ)

ວິການຄັດເລືອກ:

- ໃຫ້ນັກເດີນສຳຫລວດຈີກເຈ້ຍນ້ອຍ3ໃບ ແລ້ວຂຽນນຳ້ເບີ 1,2,3.ຫັລງຈາກນັ້ນຈົກສະຫລາກເອົາ1ໃບ,ຖ້າຈັບຖືກເບີໃດໃຫ້ໝາຍເອົາເລກນັ້ນເປັນຄົວເຮືອນທຳອິດ ແລະ ໃຫ້ຖືເອົາເລກນັ້ນເປັນໄລຍະຫ່າງເລີຍ.

ຄົວຢ່າງ:ຈົກໄດ້ເລກ3ແມ່ນຄົວເຮືອນທີ3ເປັນຄົວເຮືອນຕົວແທນທຳອິດ,ຈາກນັ້ນບວກໃຫ້ໄລຍະຫ່າງ 3,ໝາຍຄວາມວ່າ ຄົວເຮືອນທີ 6 ແມ່ນຄົວເຮືອນທີ2,

ຄົວເຮືອນທີ 9 ແມ່ນຄົວເຮືອນທີ3,

ຄົວເຮືອນທີ12 ແມ່ນຄົວເຮືອນທີ4,

ຄົວເຮືອນທີ15 ແມ່ນຄົວເຮືອນທີ5,

ຈາກນັ້ນໃຫ້ຈົກສະຫລາກໃໝ່ອີກບາດນຶ່ງລະຫ່າງເລກ 1 ກັບເລກ 2 ,ຖ້າຈົກໄດ້ເລກໃດເລກນຶ່ງກໍເຮັດຄືກັນກັບການຈົກສະຫລາກຄັ້ງທຳອິດ.ກໍລະນີຈົກຖືກຄົວເຮືອນທີ 2 ແມ່ນຄົວເຮືອນທີ 6 ທີ່ຈະສຳພາດ,ແລ້ວບວກໃຫ້ 2 ໝາຍວ່າຄົວເຮືອນທີ 4 ແມ່ນຄົວເຮືອນທີ 7.ຄົວເຮືອນຕໍ່ໄປຈະຖືກຄົວເຮືອນທີ6 ເປັນຄົວເຮືອນທີ່ຖືກເລືອກ ເນື່ອງຈາກໄດ້ຖືກເລືອກແລ້ວ,ສະນັ້ນເຮົາຕ້ອງຍ້າຍໄປເອົາຄົວເຮືອນທີ 7 ເປັນຄົວເຮືອນຕົວແທນ.ເຮັດແນວນີ້ຕໍ່ໄປຈົນໄດ້ຄົບ 10ຄົວເຮືອນ.

## ການຈົດກ່າຍໃສ່ໃບສອບຖາມ ໜ້າປົກ :

ໃບສອບຖາມ ເພື່ອສຳພາດນາຍບ້ານ ແມ່ນໃຫ້ສຳພາດ ໃນອາທິດທຳອິດຂອງເດືອນ. ກ່ອນການສຳພາດ ນັກເດີນສຳຫລວດຈະຕ້ອງໄດ້ກະກຽມຈົດກ່າຍຂໍ້ມູນທີ່ຈຳເປັນເຂົ້າກ່ອນໃນໜ້າປົກໃບສອບຖາມດັ່ງນີ້

ລະຫັດທີ່ຕັ້ງ : ນັກເດີນສຳຫລວດຕ້ອງໄດ້ຂຽນຊື່ ແຂວງ, ເມືອງ, ບ້ານ ພ້ອມທັງໃສ່ລະຫັດ ໃນບ່ອນທີ່ກຳນົດໄວ້ ໃຫ້ຖືກຕ້ອງຕາມບັນຊີລາຍຊື່ບ້ານທີ່ນັກກາວດກາຂອງທ່ານໄດ້ຈັດໄວ້ໃຫ້ ໃນເວລາຝຶກອົບຮົມ. ຈາກນັ້ນ ຈຶ່ງກຳນົດບ້ານນີ້ ແມ່ນເປັນບ້ານເຂດຕົວເມືອງ ຫລືຊົນນະບົດ ຊຶ່ງນັກເດີນສຳຫລວດ ຈະເຫັນໃນບັນຊີລາຍຊື່ບ້ານ ແລ້ວ ແຕ່ນັກເດີນສຳຫລວດ ຈະຕ້ອງໄດ້ຖາມນາຍບ້ານຕື່ມ ດັ່ງນີ້ :

ການກຳນົດບ້ານເປັນບ້ານຕົວເມືອງ ຫລືບ້ານຊົນນະບົດ ແມ່ນຂຶ້ນກັບ 5 ມາດຖານ ຂ້າງລຸ່ມນີ້ :

1. ເປັນທີ່ຕັ້ງຂອງທີ່ວ່າການປົກຄອງເມືອງ ຫລືແຂວງ.
2. ມີເສັ້ນທາງລົດໃຫ່ຍ ທ່ຽວໄດ້ຕະຫລອດປີ.
3. ມີນ້ຳປະປາໃຊ້ໃນບ້ານ.
4. ມີໄຟຟ້າໃຊ້.
5. ມີຕະຫລາດຊື້ຂາຍຕະຫລອດວັນ.

ຖ້າບ້ານໃດຫາກມີ 3 ໃນ 5 ມາດຖານ ໃຫ້ຖືວ່າບ້ານນີ້ ແມ່ນບ້ານຕົວເມືອງ ແລະໃຫ້ຈົດກ່າຍ ລະຫັດ "1" ເຂົ້າໃນຮູບ 4 ແຈ ທີ່ກຳນົດໄວ້.ຈາກນັ້ນ ກໍຈົດກ່າຍວັນເດືອນ ທີ່ສຳພາດນາຍບ້ານຕົວຈິງ.

ຈຳນວນຄົວເຮືອນທັງໝົດໃນບ້ານ ແມ່ນໝາຍເຖິງຈຳນວນຄົວເຮືອນຕົວຈິງ ທີ່ດຳລົງຊີວິດໃນບ້ານໂດຍອີງໃສ່ນິຍາມການຢູ່ອາໃສ່ຂອງພົນລະເມືອງ.

## ການແນະນຳ ແລະວິທີຈົດກ່າຍ ການບັນທຶກປະຈຳວັນ :

ນັກເດີນສຳຫລວດຕ້ອງລົງໄປຢ້ຽມຢາມບັນດາຄົວເຮືອນຕົວແທນທີ່ເລືອກໄດ້ ແລະຊ່ວຍເຫຼືອເຂົາເຈົ້າໃນການຈົດກ່າຍ. ຖ້າທ່ານບໍ່ແນ່ໃຈຕໍ່ລະຫັດຂອງກິດຈະກຳການຊື້ຂາຍ, ໃຫ້ທ່ານເບິ່ງຕົວຢ່າງ ເພື່ອເປັນການຊ່ວຍເຫຼືອ ທ່ານເອງ, ການຊື້ ຂາຍ ໝາຍຄວາມວ່າ ສະມາຊິກຂອງຄົວເຮືອນໄດ້ຊື້ສິ່ງຂອງຢ່າງໃດຢ່າງ

ໜື່ງ, ຫຼືໄດ້ຊົມໃຊ້ຜະລິດຕະພັນຂອງ ( ພືດ, ສັດລ້ຽງ, ສັດປີກ, ປາ, ສັດປ່າ ຫຼື ເຄື່ອງປ່າຂອງດົງ ) ຫຼືການຂາຍ ຜະລິດຕະພັນຂອງຕົນເອງຈາກທຸລະກິດນີ້, ຫຼື ການແຈກຢາຍ ມອບໃຫ້ ແລະການໄດ້ຮັບຄືນສິ່ງຂອງຕ່າງໆ. ຈະບັນທຶກອັນໃດ

- ຊື້ມາຊົມໃຊ້ທັງໝົດແມ່ນຈົດເຂົ້າໃນການໃຊ້ຈ່າຍ, ບັນທຶກ ລາຍຮັບ ແລະ ການຊົມໃຊ້ທັງໝົດ ຂອງຜະລິດຕະພັນທີ່ເກີດຂຶ້ນໃນຮອບໜື່ງເດືອນ
- ການບັນທຶກຫົວໜ່ວຍ ແມ່ນເປັນ ( ມັດ, ກິໂລກຣາມ, ກ້ອນ, ຖົງ ...) ແລະຈຳນວນປະລິມານ ຂອງລາຍການອາຫານນັ້ນ
- ບັນທຶກມູນຄ່າທັງໝົດຂອງການຊື້ຂາຍ
- ບໍ່ນັບພາສີ ຖ້າຊື້ຢູ່ຕ່າງປະເທດ
- ຈະບັນທຶກອັນໃດກັບການມອບໃຫ້ ຫຼື ການໄດ້ຮັບ, ການແລກປ່ຽນ
- ທັງໝົດການຊື້ ຂາຍ ແມ່ນໄດ້ແບ່ງອອກເປັນສາມໝວດຄື: ສຳຫລັບການຊົມໃຊ້ຄົວເຮືອນ (ຄ), ສຳຫລັບກະສິກຳ, ການປ່າໄມ້ ແລະການປະມົງ (ກ) ສຳຫລັບການທຸລະກິດຂອງຄົວເຮືອນ (ທ) ແລະ ປ ແມ່ນການທັງ3ຢ່າງ:ຕົວຢ່າງ:ຄົວເຮືອນທ້າວ ທິບສະຫວັນ ມີລົດຕ໊ອກໆ1ຄັນ ຮັບໃຊ້ເຂົ້າ ໃນການຜະລິດກະສິກຳຂອງຄົວເຮືອນ,ຮັບຈ້າງເຮັດໃຫ້ຄົວເຮືອນອື່ນ,ຮັບໃຊ້ບັນທຸກສິນຄ້າຫລື ໂດຍສານຕ່າງໆເຫລົ່ານີ້ເປັນຕົ້ນ.
- ການບັນທຶກລາຍຮັບ ແລະ ໃຊ້ຈ່າຍທັງໝົດຂອງການກະສິກຳ, ການປ່າໄມ້, ການປະມົງ ເປັນ ທັງເງິນສົດ ແລະ ວັດຖຸສິ່ງຂອງຈາກການແລກປ່ຽນ.
- ການບັນທຶກລາຍຮັບ ແລະ ໃຊ້ຈ່າຍ ຂອງທຸລະກິດຄົວເຮືອນ ເປັນທັງເງິນສົດ ແລະວັດຖຸສິ່ງ ຂອງຈາກການແລກປ່ຽນ.
- ບັນທຶກລາຍຮັບທັງໝົດຂອງຄົວເຮືອນ ( ຄ່າຈ້າງ, ຂອງຂັວນ ແລະ ອື່ນໆ) ເປັນທັງເງິນສົດ ແລະ ວັດຖຸສິ່ງຂອງຈາກການແລກປ່ຽນ.
- ການໃຊ້ຈ່າຍສຳລັບຜະລິດຕະພັນ, ແມ່ນບັນທຶກ ຢູ່ໃນລາວ ຫຼື ຢູ່ຕ່າງປະເທດ
- ສຳຫລັບການຊື້ສິນເຊື່ອ, ແມ່ນບັນທຶກເອົາຈຳນວນມູນຄ່າທັງໝົດ ທີ່ໄດ້ມອບຮັບໃນເດືອນນັ້ນ
- ສຳຫລັບການສຳລະ, ບັນທຶກເອົາພຽງດອກເບັ້ຽເທົ່ານັ້ນ

<u>ການໃສ່ລະຫັດຂອງການຊື້ຂາຍ</u>

ລະຫັດຂອງການຊື້ຂາຍທັງໝົດແມ່ນແບ່ງອອກເປັນສີ່ປະເພດ:

ກ) ການຊື້ຂາຍ ແມ່ນເປັນວັດຖຸສິ່ງຂອງ, ເປັນເງິນສົດ ຫຼື ເປັນການແລກປ່ຽນ

ຂ) ບັນດາສິນຄ້າ ຜະລິດຢູ່ໃນລາວ ແລະ ຢູ່ຕ່າງປະເທດ (ໃຫ້ບັນດາທ່ານສັງເກດປະເພດ ສິນຄ້າຕ່າງໆເຊັ່ນ:ແປ້ງນົວ,ນ້ຳປາ-ສະອິ໋ວຕ່າງໆ,ເຖິງແມ່ນຈະຊື້ຢູລາວກໍຕາມ ແຕ່ມັນແມ່ນສິນຄ້າທີ່ຜະລິດຢູ່ ຕ່າງປະເທດນັບທັງວັດສະດຸສິ່ງຂອງຕ່າງໆ...)

ຄ) ການຊື້ ຂາຍສິນຄ້າ ແມ່ນອີງໃສ່ຈຸດປະສົງຂອງຄົວເຮືອນ ເພື່ອການຊົມໃຊ້ຄົວເຮືອນ, ເພື່ອການກະສິກຳ ຫຼື ເພື່ອທຸລະກິດຄົວເຮືອນ

ງ) ລາຍການ ປະເພດລະຫັດຂອງສິ່ງຂອງ

<u>ແມ່ນໃຜເປັນຜູ້ບັນທຶກ?</u>

ຫົວໜ້າຄົວເຮືອນເປັນຜູ້ຈົດກ່າຍບັນດາລາຍການຊື້ຂາຍ ແລະການຊົມໃຊ້ຂອງຄົວເຮືອນເຂົ້າຕາຕະລາງ ແລະຕ້ອງຂຽນໃຫ້ຈະແຈ້ງສະອາດ ກ່ຽວກັບລາຍການນັ້ນ, ການບັນທຶກຫົວໜ່ວຍແມ່ນເປັນ ( ກິໂລກຣາມ, ມັດ, ກ້ອນ, ຖົງ ), ການຊື້ ຂາຍ ຫຼືກ ານຊົມໃຊ້ຜະລິດຕະພັນຂອງຕົນເອງ ແມ່ນເປັນຈຳນວນແລະ ປະລິມານ, ມູນຄ່າຂອງການຊື້ຂາຍ ແລະການຊົມໃຊ້ ເຖິງຈະເປັນເງິນ, ເປັນວັດຖຸ ຫຼື ເປັນການແລກປ່ຽນ ແມ່ນໃຫ້ຄິດໄລ່ແລ້ວປ່ຽນມາເປັນມູນຄ່າເງິນກີບ.

ບັນດາລາຍການໃຊ້ຈ່າຍ ແລະ ຊົມໃຊ້ ນັ້ນ ມັນອາດເປັນເງິນສົດ ຫຼື ເປັນວັດຖຸ ຫຼືເປັນການແລກປ່ຽນ ຫົວໜ້າຄົວເຮືອນຕ້ອງໄດ້ຂີດວົງມົນອ້ອມລະຫັດ 1, 2 ຫຼື 3 ຕາມຄວາມຈິງ.

ນັກເດີນສຳຫລວດຈະເປັນຜູ້ເຮັດໃຫ້ເຕັມ ແລະຄົບຖ້ວນ ສຳຫລັບບັນດາລາຍການຊື້ຂາຍສິນຄ້າ, ການຊົມໃຊ້ຜະລິດຕະພັນຢູ່ໃນລາວ ຫຼື ສິນຄ້ານຳເຂົ້າຈາກຕ່າງປະເທດ ແລະຊີ້ແຈງຈຸດປະສົງຂອງການຊື້ຂາຍ ແລະຊົມໃຊ້ຂອງຄົວເຮືອນ. ພຽງແຕ່ທ່ານຂີດວົງມົນອ້ອມລະຫັດຄຳຕອບທີ່ຖືກຕ້ອງ ( 1, 2 ແລະ ກ, ຄ,ທ ) ພ້ອມດຽວກັນນັ້ນທ່ານຕ້ອງໃສ່ລະຫັດສຳລັບບັນດາລາຍການເຫຼົ່ານັ້ນ ໂດຍອີງໃສ່ບັນຊີລະຫັດຕ່າງໆທີ່ຕິດຄັດຢູ່ໃນເອກະສານສະບັບນີ້.

ໃນພຶດຕິກຳຕົວຈິງ ສຳຫລັບການຊົມໃຊ້ຜະລິດຕະພັນຂອງຕົນເອງມີຄວາມຫຍຸ້ງຍາກ, ເພາະມີບັນຫາດ້ານລາຄາ, ກ່ຽວກັບຂໍ້ມູນດ້ານລາຄາ ທ່ານສາມາດເລືອກ ແລະນຳໃຊ້ລາຄາຢູ່ໃນທ້ອງຖິ່ນນັ້ນ ຫຼື ຢູຕະຫລາດທີ່ໃກ້ຄຽງສຸດ

<u>ລະຫັດສຳຫລັບລາຍການຕ່າງໆມີຄື:</u>

- ສິນຄ້າທີ່ພົວພັນເຖິງການໃຊ້ຈ່າຍຂອງຄົວເຮືອນ ( ເປັນເງິນສົດ ແລະວັດຖຸ) ຈະແມ່ນລະຫັດແຕ່ 1 ເຖິງ 357 ຢູ່ໃນນີ້ ມີທັງການຊົມໃຊ້ພະລິດຕະພັນຂອງຕົນເອງ.
- ສິນຄ້າທີ່ພົວພັນກັບການຊົມໃຊ້ຜະລິດຕະພັນທີ່ຕົນເອງຜະລິດໄດ້, ລະຫັດແມ່ນແຕ່ 127 ເຖິງ 155
- ສິນຄ້າທີ່ຕົນເອງຜະລິດໄດ້ ແລະມີຄວາມພົວພັນເຖິງການມອບໃຫ້ ຫຼື ການແລກປ່ຽນ ລະຫັດແມ່ນ 156 ເຖິງ 161
- ການຊື້ຂາຍທີ່ພົວພັນເຖິງລາຍຮັບ ແລະ ການສິ້ນເປືອງ (ລາຍຈ່າຍ) ສຳຫລັບການກະສິກຳ, ການປ່າໄມ້ ແລະການປະມົງ ແມ່ນໃຊ້ລະຫັດແຕ່ 401 ເຖິງ 471. ລະຫັດແຕ່ 400 ຫາ 422 ສຳຫລັບລາຍຮັບ ແລະ ລະຫັດແຕ່ 451 ເຖິງ 471 ສຳຫລັບລາຍຈ່າຍ

- ການຊື້ຂາຍທີ່ພົວພັນເຖິງທຸລະກິດຂອງຄົວເຮືອນ, ລະຫັດແມ່ນແຕ່ 501 ເຖິງ 566. ລະຫັດແຕ່ 501 ເຖິງ 512 ສຳຫລັບລາຍຮັບ ແລະ ລະຫັດແຕ່ 551 ເຖິງ 566 ສຳຫລັບລາຍຈ່າຍ
- ການຊື້ຂາຍທີ່ກ່ຽວຂ້ອງກັບການລົງທຶນ ທີ່ດິນ ແລະ ການກໍ່ສ້າງ ມີລະຫັດແຕ່ 600 ເຖິງ 611

ຈົ່ງພະຍາຍາມບັນລະຍາຍ, ຊີ້ແຈງໃຫ້ລະອຽດ ກ່ຽວກັບຈຸດປະສົງໃນການຊື້ຂາຍ - ກວດກາຄືນອີກຄັ້ງໃນເມື່ອໄດ້ໃສ່ລະຫັດລົງໄປແລ້ວ.

ຕາມທຳມະດາ ມັນສາມາດສັງເກດເຫັນໄດ້ຢ່າງງ່າຍໆ ລະຫວ່າງ ສາມຈຸດປະສົງຄື: ສຳຫລັບຄົວເຮືອນ, ສຳຫລັບກະສິກຳ ແລະ ສຳຫລັບທຸລະກິດ

**ການບັນທຶກປະຈຳວັນ ແລະການຢັ້ງມຢາມ ສຳພາດເທື່ອສຸດທ້າຍ**

ການສຳພາດຄົວເຮືອນເທື່ອສຸດທ້າຍ ແມ່ນທຸກອາທິດໃນທ້າຍເດືອນ, ການສຳພາດຈະລວບລວມຂໍ້ມູນຢູ່ໃນສາມແບບສອບຖາມ, ການຊື້ຂາຍເຄື່ອງໃຊ້ຍາວນານໃນລະຫວ່າງ 12 ເດືອນ. ເບື້ອງຕົ້ນແມ່ນລາຍຮັບ (ເງິນເດືອນ) ແລະ ການໂອນໃນລະຫວ່າງເດືອນສຸດທ້າຍ ແລະການກໍ່ສ້າງ... ການບັນທຶກປະຈຳວັນກໍ່ເຊັ່ນດຽວ. ການຊື້ເຄື່ອງໃຊ້ຍາວນານທັງໝົດໃນໜຶ່ງເດືອນ ແລະ 12 ເດືອນ ແມ່ນມີລະຫັດອັນດຽວກັນ. ເພື່ອຄວາມແນ່ນອນ ໃນການບັນທຶກກ່ຽວກັບການຊື້ຂາຍ, ລາຍຮັບ ແລະການໂອນ ແມ່ນໄດ້ເລືອກຢູ່ໃນຕາຕະລາງສະເພາະ. ນັກເດີນສຳຫລວດອາດຈະເຮັດ ແລະສຳພາດຄັ້ງລ້າສຸດ ກ່ຽວກັບລາຍຮັບຂອງເຂົາເຈົ້າ ພ້ອມທັງກວດເບິ່ງການບັນທຶກປະຈຳວັນ, ມັນອາດມີບາງຊຸດຂໍ້ມູນຂອງການຊື້ຂາຍເລັກນ້ອຍ ທີ່ພົວພັນເຖິງລາຍຮັບ ແລະການໂອນເບື້ອງຕົ້ນ. ນຳໃຊ້ຂໍ້ມູນລາຍຮັບ ແລະການໂອນເບື້ອງຕົ້ນນັ້ນ ເພື່ອສອບຖາມບຸກຄົນຢູ່ໃນຄົວເຮືອນພ້ອມກັບການຈັດແບ່ງໃຫ້ເປັນລາຍຮັບ ຫຼື ການໂອນຂອງເຂົາເຈົ້າ. ຮູບແບບໃນການກໍ່ສ້າງ ແມ່ນບໍ່ມີປະເພດລະຫັດການໃຊ້ຈ່າຍ.

ໃນພາກປະຕິບັດຕົວຈິງ ມັນມີຄວາມສຳຄັນຫລາຍ ທີ່ນັກເດີນສຳຫລວດ (ຜູ້ສຳພາດ) ຕ້ອງໄດ້ກວດກາຄືນ ການໃຊ້ຈ່າຍທັງໝົດ ທີ່ພົວພັນເຖິງການໄປຫາທ່ານໝໍ, ນາງພະຍາບານ,ນາງປະດຸງຄັນ, ແພດອາສາສະມັກ ແລະໝໍຢາພື້ນເມືອງ)

*ຈົ່ງພະຍາຍາມ ແລະເອົາໃຈໃສ່ເຖິງຄວາມຈິງຂອງການຊື້ທີ່ດິນ ຊຶ່ງມີລະຫັດ 601, ແລະ ການຊື້ເຮືອນ ລະຫັດ 602 ຢູ່ໃນການບັນທຶກປະຈຳວັນ*

**ການບັນທຶກຕົ້ນທຶນ**

ການຊື້ເຄື່ອງບາງຢ່າງຢູ່ໃນຄົວເຮືອນ ແມ່ນອີງໃສ່ຕົ້ນທຶນ ແລະ ສິ່ງຂອງເຫຼົ່ານັ້ນ ມັນແມ່ນພາກສ່ວນໜຶ່ງຂອງການກະສິກຳ ຫຼື ການທຸລະກິດ. ຖ້າສະມາຊິກຂອງຄົວເຮືອນໄດ້ຊື້ຣົດຕຸກ - ຕຸກ, ອັນນີ້ ມັນແມ່ນເປັນການຊົມໃຊ້ ແລະ ເປັນທຸລະກິດການຂົນສົ່ງ. ມັນຈະໄດ້ຈົດເຂົ້າໃນລາຍການທີ 555 ແລະເປັນຕົ້ນທຶນທາງທຸລະກິດ. ໃນຄະນະດຽວກັນນັ້ນ ມັນຍັງເປັນໄປໄດ້ທັງສອງຢ່າງ ຄື ສິນຄ້າຊົມໃຊ້ ແລະສິນຄ້າຕົ້ນທຶນ.

ຣົດຄັນດັ່ງກ່າວ ສ່ວນໃຫ່ຍແລ້ວ ແມ່ນຊື້ມາເພື່ອຈຸດປະສົງທາງທຸລະກິດ ສະນັ້ນມັນຈຶ່ງຖືກຈົດເຂົ້າລາຍການ 555 ແລະເປັນຕົ້ນທືນທາງທຸລະກິດ. ຍານພະຫານະ ຫຼື ເຄື່ອງຈັກອື່ນໆ ທີ່ມີ ຕົ້ນທືນຫລາຍໆ ແລະໄດ້ນຳໃຊ້ຢູ່ໃນການກະສິກາ ລະຫັດແມ່ນ 463. ເຄື່ອງມື ແລະອຸປະກອນທີ່ນ້ອຍກ່ວາ ລາຍການລະຫັດແມ່ນ 464 ເຖິງ 466 ສຳລັບການກະສິກກຳ ແລະ 556 ສຳລັບທຸລະກິດຄົວເຮືອນ. ເຄື່ອງເຟີນີເຈີທີ່ຊື້ສຳລັບຈຸດປະສົງທຸລະກິດ ລະຫັດ ແມ່ນ 556. ອັນນີ້ແມ່ນອະທິບາຍໃຫ້ຄົວເຮືອນໃນເມື່ອທ່ານສຳພາດເທື່ອສຸດທ້າຍ ແລະ ກວດກາຄືນການບັນທຶກປະຈຳວັນ.

ໃນທຸລະກິດຕົນເອງ ເຂົາເຈົ້າສາມາດຂາຍຕູ້ນ້ຳກ້ອນເກົ່າຂອງເຂົາ ຫຼື ກໍ່ຊື້ອັນໃໝ່, ລາຍຮັບທີ່ໄດ້ຂາຍນັ້ນ ແມ່ນຈົດເຂົ້າໃນລາຍການລະຫັດ 511 ແລະສຳຫລັບອັນໃໝ່ ແມ່ນລາຍການ ລະຫັດ 555.

**<u>ການບັນທຶກຂອງການມອບຮັບ ແລະ ການມອບໃຫ້ ເປັນເງິນສົດ</u>**

ການມອບໃຫ້ອາດເປັນສອງປະເພດ, ເປັນເງິນສົດ ຫຼື ເປັນວັດຖຸ. ຖ້າເປັນການມອບຮັບຜ່ານມາເປັນເງິນສົດ ແມ່ນໃຫ້ບັນທຶກເປັນເງິນສົດ. ຢ່າງໃດກໍ່ຕາມໃນຫລາຍໆເລື້ອງມັນອາດເປັນການຊົມໃຊ້ຂອງຄົວເຮືອນ, ແຕ່ວ່າມັນກໍ່ອາດເປັນການສະໜຳສະໜູນໃຫ້ການກະສິກຳ ຫຼື ການທຸລະກິດຂອງຄົວເຮືອນອີກດ້ວຍ. ຖ້າຫາກນອກເໜືອຈາກຈຸດປະສົງທີ່ກ່າວມາຂ້າງເທິງແລ້ວ ມັນຈະເປັນການບັນທຶກຕາມຈຸດປະສົງຂອງຄົວເຮືອນ.

ຕົວຢ່າງ:

| ວັນທີ | ລາຍການ | ຫົວໜ່ວຍ | ຈຳນວນ | ມູນຄ່າ | ຫົວໜ່ວຍມູນຄ່າ | .ເງິນສົດ<br>.ວັດຖຸ<br>.ແລກປ່ຽນ | ຈຸດປະສົງ:<br>. ຄົວເຮືອນ<br>. ກະສິກຳ<br>. ທຸລະກິດ<br>.ປະສົມ | . ຜະລິດຢູ່ລາວ<br>. ຕ່າງປະເທດ | ລາຍການລະຫັດ |
|---|---|---|---|---|---|---|---|---|---|
| 1 | ມອບຮັບ | | | 50.000 | | (1) 2 3 | ກ (ຄ) ທ ປ | (1) 2 | 808 |
| 24 | ມອບຮັບ | | | 95.000.000 | | (1) 2 3 | ກ ຄ (ທ) ປ | 1 (2) | 809 |
| 30 | ມອບໃຫ້ | | | 30.000 | | (1) 2 3 | ກ (ຄ) ທ ປ | (1) 2 | 355 |

ໃນເບື້ອງຕົ້ນຫົວໜ້າຄົວເຮືອນໄດ້ບອກວ່າ ພວກເຮົາໄດ້ຮັບເງິນສົດ 50.000 ກີບ ຈາກການເຮັດວຽກຢູ່ວຽງຈັນ. ມັນມີຄວາມສຳຄັນຫລາຍໃນການບັນທຶກ " ເງິນສົດ" ແລະ ການໃສ່ລະຫັດອັນແທ້ຈິງ. ໃນມື້ 24 ຄົວເຮືອນໄດ້ຖືກມອບຮັບດ້ວຍຈຳນວນເງິນທີ່ຫລາຍກ່ວາ ແລະ ຫົວໜ້າຄົວເຮືອນໄດ້ບອກວ່າ ວົງເງິນນີ້ແມ່ນເພື່ອເປັນທືນຮອນໃນການເຮັດທຸລະກິດ. ການບັນທຶກ ເປັນເງິນສົດ, ຈຸດປະສົງ (ທຸລະກິດ), ຈາກຕ່າງ

ປະເທດ ພ້ອມການໃສ່ລະຫັດ ທີ່ເໝາະສົມບັນທຶກການມອບຮັບ ຫຼື ການມອບໃຫ້ ແມ່ນຈະຕ້ອງໄດ້ສັງລວມຢູ່ໃນການຢ້ຽມຢາມ ແລະ ສຳພາດຄົວເຮືອນຄັ້ງສຸດທ້າຍ

**<u>ການມອບຮັບ ແລະການມອບໃຫ້ ທີ່ເປັນວັດຖຸ</u>**

ຖ້າຄົວເຮືອນຊາວກະສິກອນໜຶ່ງ ໄດ້ເອົາເຂົ້າມອບໃຫ້ຄົວເຮືອນອື່ນ. ການມອບຮັບນັ້ນມັນເປັນການແບ່ງປັນຄ່າເຈົ້າຂອງດິນ, ການໃສ່ລາຍການລະຫັດສຳຫລັບການຜະລິດ ຜະລິດຕະພັນຂອງຕົນເອງ ແມ່ນນອນຢູ່ໃນພາກ ການມອບໃຫ້ຄົນອື່ນ. ສຳຫລັບຄົວເຮືອນທີ່ໄດ້ຮັບເຂົ້ານີ້, ແມ່ນບັນທຶກເປັນການຊື້ເຂົ້າ.

ເຂົ້າ ຫຼື ສິ່ງຂອງອື່ນໆ ທີ່ໄດ້ມອບໃຫ້ວັດ ແມ່ນບໍ່ບັນທຶກປະຈຳວັນ, ຫຼືໃນເລື້ອງທີ່ຄົວເຮືອນໄດ້ຊື້ສິ່ງຂອງມາໄວ້ ແລ້ວເອົາມອບໃຫ້ຄົນອື່ນ ກໍ່ບໍ່ຈົດເຊັ່ນດຽວ, ພຽງແຕ່ວ່າການຊື້ຂາຍເທື່ອທຳອິດ ຈະເປັນການບັນທຶກເທົ່ານັ້ນ.

| ມື້ | ລາຍການ | ຫົວໜ່ວນ | ຈຳນວນ | ມູນຄ່າ | ຫົວໜ່ວຍມູນຄ່າ | .ເງິນສົດ<br>.ວັດຖຸ<br>.ແລກປ່ຽນ | ຈຸດປະສົງ:<br>. ຄົວເຮືອນ<br>. ກະສິກຳ<br>. ທຸລະກິດ<br>.ປະສົມ | . ຜະລິດຢູ່ລາວ<br>. ຕ່າງປະເທດ | ລາຍການລະຫັດ |
|---|---|---|---|---|---|---|---|---|---|
| 2 | ການມອບໃຫ້ຜົນຜະລິດເຂົ້າຂອງຕົນ | ກິໂລກຣາມ | 50 | 100.000 | | 1 (2) 3 | ກ (ຄ) ທ ປ | (1) 2 | 156 |
| 2 | ໄດ້ຮັບເຂົ້າ | ກິໂລກຣາມ | 50 | 100.000 | | 1 (2) 3 | ກ (ຄ) ທ ປ | (1) 2 | 1 |

**<u>ການເອົາຜະລິດຕະພັນຈາກ ທຸລະກິດຂອງຕົນເອງມາຊົມໃຊ້</u>**

ຖ້າຄົວເຮືອນມີຮ້ານຂາຍເຄື່ອງ ແລະມີສະມາຊິກຂອງຄົວເຮືອນໄດ້ເອົາຜະລິດຕະພັນນັ້ນມາຊົມໃຊ້, ມູນຄ່າຂອງມັນຈະຖືກບັນທຶກເຂົ້າຄ້າຍຄືກັບການຂາຍ. ມັນນອນຢູ່ໃນລາຍການຂອງ “ ລາຍຮັບທຸລະກິດ “ ໃຫ້ຂຽນຊື່ “ ການຊົມໃຊ້ຜະລິດຕະພັນຕົນເອງ” ການໃຊ້ລະຫັດກໍ່ຈະໄດ້ໃສ່ເຊັ່ນກັນ. (ສິ່ງເຫຼົ່ານີ້ ມັນຈະບໍ່ກວມເອົາຜະລິດຕະພັນຈາກກະສິກຳ, ແຕ່ມັນກໍ່ເປັນໜ້າເຊື່ອວ່າ ມັນມີ ໜ້ອຍ ທີ່ສຸດ ພວກເຮົາບໍ່ສາມາດກຳນົດເຈາະຈົງໂດຍສະເພາະ)

**<u>ການບັນທຶກລາຍຮັບຈາກທຸລະກິດຄົວເຮືອນ.</u>**

ມີບາງຄົວເຮືອນໄດ້ເຮັດທຸລະກິດນ້ອຍເຊັ່ນ: ຄົວເຮືອນໜຶ່ງໄດ້ເຮັດຮ້ານຂາຍເຄື່ອງ ຫຼື ຮ້ານອາຫານ, ມັນຈະມີລາຍຮັບທຸກໆວັນ ແລະ ສິ້ນມື້ມາ ຄົວເຮືອນນີ້ ຈະໄດ້ນັບ ແລະສະຫລູບລາຍໄດ້ຂອງຕົນ. ດ້ວຍເຫດນີ້ ຄົວເຮືອນຈະຕ້ອງໄດ້ລາຍງານ.

| ມື້ | ່າຍການ | ຫົວໜ່ວນ | ຈຳ ນວນ | ມູນຄ່າ | ຫົວ ໜ່ວຍ ມູນຄ່າ | .ເງິນສົດ .ວັດຖຸ .ແລກປ່ຽນ | ຈຸດປະສົງ: . ຄົວເຮືອນ . ກະສິກຳ . ທຸລະກິດ | . ຜະລິດ ຢູ່ລາວ . ຕ່າງປະ ເທດ | ລາຍ ການ ລະຫັດ |
|---|---|---|---|---|---|---|---|---|---|
| 1 | ລາຍໄດ້ຈາກ ຮ້ານຂາຍ ເຄື່ອງ | - | - | 800.000 | | (1) 2 3 | ກ ຄ (ທ) ປ | 1 2 | 501 |
| 2 | ລາຍໄດ້ຈາກ ຮ້ານຂາຍ ເຄື່ອງ | | | 500.000 | | (1) 2 3 | ກ ຄ (ທ) ປ | 1 2 | 501 |
| ອື່ນ | | | | | | | | | |
| 2 | ຊື້ເຄື່ອງເພື່ອ ຂາຍ | | | 300.000 | | (1) 2 3 | ກ ຄ (ທ) ປ | | 551 |

ຖ້າເຈົ້າຂອງຮ້ານຂາຍເຄື່ອງ ມັກບັນທຶກລາຍໄດ້ຂອງຕົນຕໍ່ ອາທິດໜຶ່ງ, ເຂົາເຈົ້າກໍ່ສາມາດເຮັດໄດ້ເຊັ່ນກັນ, ພຽງແຕ່ຖາມເຂົາເຈົ້າວ່າເຮັດແນວໃດມັນຈະສະດວກກ່ວາ. ລາຍໄດ້ຈາກທຸລະກິດອື່ນອາດຈະບໍ່ໄດ້ຮັບທຸກໆມື້, ກໍລະນີດັ່ງກ່າວ ແມ່ນບັນທຶກໃນເວລາທີ່ເຂົາເຈົ້າໄດ້ຮັບ.

## ລະຫັດສຳຫລັບການໃສ່ໃນບັນທຶກປະຈຳວັນ

| **ລາຍການ** | **ລະຫັດ** |
|---|---|
| VIII. ປະເພດອາຫານ | |
| IX. ເຂົ້າ ແລະທາດແປ້ງ | |
| ເຂົ້າຫນຽວ | 1 |
| ເຂົ້າຈ້າວ | 2 |
| ສາລີເມັດ | 3 |
| ແປ້ງສາລີ | 4 |
| ແປ້ງເຂົ້າຈີ່ ຫລື ແປ້ງທີ່ສາມາດເຮັດເປັນເຂົ້າໜົມ | 5 |
| ເຂົ້າຈີ່ອື່ນໆ,ແຕ່ບໍ່ແມ່ນເຂົ້າໜົມປັງ | 6 |
| ເສັ້ນເຝີແຫ້ງ / ຫມີ່ແຫ້ງ(ບະໝີ່ເປັນຊອງ) | 7 |
| ເສັ້ນເຂົ້າປູ້ນ | 8 |
| ເສັ້ນອື່ນໆ(ເສັ້ນກ້ວຍຈັບ,ເສັ້ນເຂົ້າຊອຍ,ເສັ້ນລ້ອນ,ສະປາແກັດຕີ້,ໝາກກຣໍນີ...) | 9 |
| ເຂົ້າຫນົມເຄັກ ແລະເຂົ້າຫນົມປັງ(ເຂົ້າໜົມທີ່ມີລົດຫວານ ຫລື ມີໄສ້ຫວານແຕ່ບໍ່ແມ່ນເຂົ້າຈີ່ | 10 |

| **ລາຍການ** | **ລະຫັດ** |
|---|---|
| ອື່ນໆ(ຂຽບກຸ້ງ,ເຂົ້າໜົມທອດ ຫລື ຈືນດ້ວຍແປງ) | 11 |
| X. ປະເພດ ຊີ້ນ | |
| ຊີ້ນຫມູ/ກະດູກ | 12 |
| ຊີ້ນ ງົວ, ຊີ້ນຄວາຍ/ກະດູກ/ໜັງ | 13 |
| ໄກ່(ໄກ່ລາດ,ໄກ່ພັນ) | 14 |
| ເປັດ, ໄກ່ງວງ,ໄກ່ຕ໊ອກ,ຫ່ານ, ນົກລ້ຽງອື່ນໆ | 15 |
| ໃສ້ກອກ,ໃສ້ອົ່ວ | 16 |
| ຊີ້ນສັດປ່າທຸກຊະນິດ(ໄກ່ປ່າ,ນົກ,ງູ,ນັບທັງກົບຂຽດອື່ງ, ຕັກກະແຕນ ,ໄຂ່ມົດແດງເຫລົ່ານີ້ເປັນຕົ້ນ...) | 17 |
| ເຄື່ອງໃນສັດທຸກຊະນິດ | 18 |
| ຊີ້ນອື່ນໆ/ຊີ້ນກະປ໋ອງ,ຊີ້ນສົ້ມ,ຊີ້ນໝໍ້,ລູກຊີ້ນ,ຊີ້ນແບ້,ຊີ້ນແກະ, ຊີ້ນມ້າ... | 19 |
| **ປະເພດ ປາ(ນັບທັງອາຫານທະເລ)** | |
| ປາສົດ | 20 |

| ລາຍການ | ລະຫັດ |
|---|---|
| ປາກະປ໋ອງ | 21 |
| ປາແຊ່ແຂງ(ໝາຍເຖິງປາແຊ່ແຂງເປັນແທ່ງເຊັ່ນ: ປາທູ,ປາມຶກເຫລົ່ານີ້ເປັນຕົ້ນ) | 22 |
| ປາແຫ້ງ ແລະປາຢ້າງ | 23 |
| ກຸ້ງ, ປູ, ຫອຍ,ອ່ຽນ | 24 |
| ປາແດກ, ປາເຄັມ,ປາວ້ຳ | 25 |
| ປາດອງ,ປາສົ້ມ,ປາຈາວ,ປາຈ່ອມ,ປາໝ້ຳ | 26 |
| ປາອື່ນໆ(ລູກຮວກ,ແມງດາ,ແມງຊອນ,ແມງໜ້າງ້ຳ | 27 |
| **ປະເພດ ນົມ, ເນີຍ ແລະໄຂ່** | |
| ນົມປອ໋ງຊຸ້ນ | 28 |
| ນົມຝຸ່ນ | 29 |
| ນົມສົດ,ນົມກ່ອງ | 30 |
| ເນີຍ, ນ້ຳທິວກະທິໝາກພ້າວ, ນົມສົ້ມ | 31 |
| ໄຂ່ | 32 |
| ອື່ນໆ | 33 |
| **ປະເພດ ນ້ຳມັນພືດ ແລະນ້ຳມັນສັດ** | |
| ນ້ຳມັນສັດ(ນ້ຳມັນໝູ,ນ້ຳມັນຫອຍ...) | 34 |
| ນ້ຳມັນພືດ(ນ້ຳມັນຖົ່ວເຫລືອງ,ນ້ຳມັນງາ,ນ້ຳມັນ ໝາກພ້າວ...) | 35 |
| ນ້ຳມັນອື່ນໆ | 36 |
| **ປະເພດ ຫມາກໄມ້** | |
| ຫມາກກ້ວຍ | 37 |
| ຫມາກຫຸ່ງ | 38 |
| ຫມາກກ້ຽງ/ໝາກສົ້ມໂອ | 39 |
| ຫມາກນັດ | 40 |
| ຫມາກນາວ | 41 |
| ຫມາກລຳໄຍ | 42 |
| ຫມາກພ້າວອ່ອນ | 43 |
| ຫມາກແຕງຫອມ | 44 |
| ຫມາກພິລາ | 45 |
| ຫມາກຄາຍ | 46 |
| ຫມາກຍົມ | 47 |
| ຫມາກອາໂວກາໂດ ( Avocado ) | 48 |
| ຫມາກຂຽບ | 49 |
| ຫມາກສີດາ | 50 |
| ຫມາກຂາມ | 51 |
| ຫມາກທັນ | 52 |
| ຫມາກມີ້ | 53 |
| ຫມາກໄມ້ດອງ/ໝາກໄມ້ກະປ໋ອງ | 54 |
| ຫມາກໄມ້ອື່ນໆ(ໝາກເງາະ,ໝາກຖົ່ວລຽນ,ໝາກ ມ່ວງ,ໝາກຕ້ອງ...) | 55 |

| ລາຍການ | ລະຫັດ |
|---|---|
| **ປະເພດ ຜັກທີ່ກິນຫມາກ** | |
| ຫມາກໂມ | 56 |
| ຫມາກເຜັດ | 57 |
| ຫມາກແຕງ | 58 |
| ຫມາກເຂືອ | 59 |
| ຫມາກບວບ/ໝາກລອຍ,ໝາກຊູ ຫລື ໝາກສະເວີ | 60 |
| ຫມາກຝັກ/ໝາກໂຕ່ນ | 61 |
| ຫມາກອຶ | 62 |
| ຫມາກເລັ່ນ/ໝາກເອີກ | 63 |
| ຫມາກອື່ນໆ(ໝາກສະລອຍ,ໝາກສາລີ...) | 64 |
| **ປະເພດ ຜັກທີ່ກິນໃບອື່ນໆ** | |
| ຜັກກະລ່ຳປີ/ຜັກຊູ | 65 |
| ຜັກກາດຂາວ,ຜັກກາດຊອມ,ຜັກກາດນາ | 66 |
| ໃບຫມາກອຶ ແລະ ຕະກຸນໃບຫມາກອຶ | 67 |
| ຜັກກາດຂິວ/ຜັກກາດຕີນໝີ | 68 |
| ຜັກສະຫລັດ | 69 |
| ຜັກຫອມຫົ້(ຫອມໃສ່ກ້ອຍ ຫລື ລາບ) | 70 |
| ຜັກຊີ | 71 |
| ຜັກຫອມປ້ອມ | 72 |
| ຜັກແພວ,ຜັກຄາວທອງ,ຜັກຫູເສືອ | 73 |
| ຜັກບົວລະພາ,ຜັກອີ່ຕູ່,ຜັກກະເພົາ | 74 |
| ຜັກຫອມເປ ( ຜັກຫອມຈີນ ) | 75 |
| ຜັກຕັງສ້າຍ(ແຊນເລີລີ) | 76 |
| ຜັກທຽມ(ນັບທັງຜັກທຽມແຫ້ງ) | 77 |
| ຜັກບົ່ວ(ນັບທັງຜັກບົ່ວແຫ້ງ) | 78 |
| ຫມາກຖົ່ວຍາວ | 79 |
| ຫນໍ່ໄມ້/ໜໍ່ສົ້ມ | 80 |
| ຜັກຫົມ/ຜັກຕຳນິນ | 81 |
| ຫມາກພິກໄທຂຽວ | 82 |
| ຜັກບົ້ງ | 83 |
| ຜັກອື່ນໆ(ຜັກຂະແຍງ,ຫົວສີໄຄ,ໃບຂີ້ຫູດ,ຜັກກະ ໂດນ,ຜັກຕິ້ວ...) | 84 |
| XI. ປະເພດພືດ ຕະກຸນຖົ່ວ | |
| ຖົ່ວຂຽວ(ຖົ່ວອາລິສີງ) | 85 |
| ພືດຖົ່ວເຊັ່ນ : ຖົ່ວດຳ,ຖົ່ວແດງ | 86 |
| ຖົ່ວອື່ນໆ | 87 |
| **ປະເພດ ຫມາກໄມ້ຈຳພວກເປືອກແຂງ** | |
| ຫມາກພ້າວ | 88 |
| ຫມາກຖົ່ວດິນ ແລະຫມາກໄມ້ທີ່ມີກາບ ຢູ່ໃນດິນ | 89 |
| ອື່ນໆ(ໃນແຕງໂມ,ໃນດອກຕາເວັນ...) | 90 |
| **ປະເພດ ພືດກິນຮາກ ແລະຫົວ** | |

| ລາຍການ | ລະຫັດ |
|---|---|
| ຫົວມັນຝັ່ຣງ | 91 |
| ຫົວມັນດ້າງ | 92 |
| ຫົວມັນຕົ້ນ | 93 |
| ຫົວມັນເພົາ | 94 |
| ມັນຝັ່ຣງທອດ ແລະມັນທີ່ແປຮູບ | 95 |
| ຫົວພືດອື່ນໆ(ຫົວຄ່າ,ຫົວຊິງດຫົວສະຄູ...) | 96 |
| **ນ້ຳຕານ ແລະຂອງຫວານ** | |
| ນ້ຳຕານ/ນ້ຳອ້ອຍ | 97 |
| ຂອງຫວານ(ເຂົ້າໜົມອົມທຸກຊະນິດ) | 98 |
| ນ້ຳເຜີ້ງ/ນ້ຳມິ້ມ | 99 |
| ກະແລມ | 100 |
| ຂອງຫວານອື່ນໆ(ນ້ຳຫວານເປັນຖົງ ຫລື ຖ້ວຍ, ເຂົ້າຕົ້ມ,ເຂົ້າປາດ,ເຂົ້າໜົມໝໍ້ແກງ...) | 101 |
| **ປະເພດ ກະເຟ, ຊາ ແລະອື່ນໆ** | |
| ກາເຟ | 102 |
| ຊາ | 103 |
| ນ້ຳໄຊໂກແລັດ, ຕົວຢ່າງ:ໂອລ່ຽງ, ໂອວັນຕິນ, | 104 |
| ອື່ນໆ | 105 |
| **ປະເພດ ອາຫານອື່ນໆ** | |
| ເກືອ | 106 |
| ນ້ຳປາ | 107 |
| ນ້ຳຫມາກເລັ່ນ | 108 |
| ນ້ຳສະອີ່ວ | 109 |
| ເຄື່ອງເທບ ແລະເຄື່ອງປຸ່ງອາຫານ/ແປ້ງນົວ | 110 |
| ແປ້ງທີ່ສາມາດປຸງແຕ່ງເປັນອາຫານໄດ້ | 111 |
| ນ້ຳສົ້ມ | 112 |
| ອື່ນໆ ( ບອກແຈ້ງ ) | 113 |
| **ປະເພດ ເຄື່ອງດື່ມທີ່ບໍ່ມີທາດມຶນເມົາ** | |
| ນ້ຳອັດລົມ,ນ້ຳຫມາກໄມ້ປ໋ອງ, ນ້ຳຫມາກໄມ້ບິດ,ນ້ຳໝາກກ້ຽງ,ນ້ຳໝາກນາວ | 114 |
| ນ້ຳດື່ມ( ນ້ຳດື່ມບໍລິສຸດ )/ນ້ຳກ້ອນ | 115 |
| ນ້ຳຫວານອື່ນໆ | 116 |
| **ປະເພດ ເຄື່ອງດື່ມທີ່ມີທາດມຶນເມົາ** | |
| ເບຍ ( ຊື້ອອກຈາກຮ້ານ) | 117 |
| ເບຍ ( ຊື້ດື່ມຢູ່ຮ້ານກິນດື່ມ ) | 118 |
| ເຫລົ້າລາວ ( ຊື້ອອກຈາກຮ້ານ ) | 119 |
| ເຫລົ້າລາວ ( ຊື້ດື່ມຢູ່ຮ້ານກິນດື່ມ ) | 120 |
| ເຫລົ້າອື່ນໆ ( ຊື້ອອກຈາກຮ້ານ ) | 121 |
| ເຫລົ້າອື່ນໆ ( ຊື້ດື່ມຢູ່ຮ້ານກິນດື່ມ ) | 122 |
| **ປະເພດ ຢາສູບ** | |
| ຢາພັນ ( ພັນເປັນກອກ ) | 123 |

| ລາຍການ | ລະຫັດ |
|---|---|
| ຢາຊອງ(ມີຝິ່ນເຕີກັ່ນກອງ) | 124 |
| ຢາເສັ້ນ | 125 |
| ຢາສູບອື່ນໆ(ຢາຝິ່ນ...) | 126 |
| XII. ການຊົມໃຊ້ເອງຜະລິດຕະພັນຂອງຕົນເອງ ຫລືເອົາໃຫ້ຄົນອື່ນ | |
| ເຂົ້າຫນຽວ | 127 |
| ເຂົ້າຈ້າວ | 128 |
| ສາລີເມັດ | 129 |
| ພືດເປັນເມັດອື່ນໆ(ໝາກເດືອຍ,ໝາກງາ...) | 130 |
| ມັນຕົ້ນ | 131 |
| ມັນດ້າງ | 132 |
| ພືດກິນຮາກ ແລະຫົວອື່ນໆ(ຫົວເຜືອກ,ຫົວສະຄູ) | 133 |
| ຜັກທີ່ປູກ(ທຸກຊະນິດຜັກທີ່ໄດ້ປູກ,ໃຫ້ເບິ່ງໃນລາຍການພາກຊື້ນັບແຕ່ລະຫັດທີ56-96) | 134 |
| ຜັກທີ່ຫາມາຈາກທຳມະຊາດ(ຜັກ ແລະ ໜໍ່ໄມ້ຕ່າງໆທີ່ເກີດເອງຈາກທຳມະຊາດ) | 135 |
| ຫມາກໄມ້ ທີ່ປູກ(ເບິ່ງຕາມລະຫັດພາກຊື້ປະເພດໝາກໄມ້ນັບແຕ່ລະຫັດທີ37-55) | 136 |
| ຫມາກໄມ້ທີ່ຫາມາຈາກທຳມະຊາດ(ໝາກໄຟ, ໝາກແງວ,ໝາກຜຸ ,ໝາກຜາງ...) | 137 |
| ສັດປີກ ແລະ ຜະລິດຕະພັນຂອງສັດປີກ(ເປັດ,ໄກ່ທຸກຊະນິດ,ຫ່ານ,ນົກທຸກຊະນິດນັບທັງໄຂ່...) | 138 |
| ຫມູຂອງຕົນເອງ ( ຫມົດຕົວ ຫລືເປັນສ່ວນ) | 139 |
| ງົວ, ຄວາຍຂອງຕົນເອງ (ຫມົດຕົວ ຫລືເປັນສ່ວນ ) | 140 |
| ແບ້,ແກະຂອງຕົນເອງ ( ຫມົດຕົວ ຫລືເປັນສ່ວນ ) | 141 |
| ສັດລ້ຽງອື່ນໆ ( ກະຕ່າຍ,ໝູກະເພົາ,ມ້າ...) | 142 |
| ສັດປ່າ(ນັບແຕ່ກົບ,ຂຽດ,ອື່ງ,ງູ,ນົກ,ນົກເປັດ,ຕັກແຕນແມງໄມ້ອື່ນໆທີ່ຢູ່ເທິງບົກທຸກຊະນິດທີ່ນຳມາເປັນອາຫານຈົນຮອດສັດໃຫຍ່ເຊັ່ນ:ໝູປ່າ,ກວາງ, ຟານເຫລົ່ານີ້ເປັນຕົ້ນ...) | 143 |
| ປາລ້ຽງທຸກຊະນິດ | 144 |
| ປາ ທີ່ຫາມາຈາກທຳມະຊາດ(ນັບທັງລູກຮອກ,ກະປູ,ຫອຍ ແລະ ແມງໄມ້ທີ່ຢູ່ໃນນ້ຳທີ່ສາມາດນຳມາເປັນອາຫານໄດ້...) | 145 |
| ໝາກກາເຟ | 146 |
| ໃບຊາ | 147 |
| ຫມາກພ້າວ | 148 |
| ຫມາກຖົ່ວເຫລືອງ | 149 |
| ຫມາກແຫນ່ງ | 150 |
| ຫົວສີໄຄ | 151 |
| ຫມາກ ຄ້ຽວ | 152 |

| ລາຍການ | ລະຫັດ |
|---|---|
| ຊີ້ງ/ຄ່າ | 153 |
| ພືດອຸດສະຫະກຳອື່ນໆ(ໃບຢາ...) | 154 |
| ຜົນຜະລິດອື່ນໆຂອງດິນເອງ(ເຫລົ້າທຸກຊະນິດ,ຫັດຖະກຳ,ຕໍ່າແຜ່ນ ແລະ ຈັກສານຕ່າງໆ...) | 155 |
| ເອົາອາຫານທີ່ຜະລິດເອງໃຫ້ຜູ້ອື່ນ | |
| ເຂົ້າໜຽວ | 156 |
| ເຂົ້າຈ້າວ | 157 |
| ຜົນຜະລິດອື່ນໆ(ເບິ່ງໃນລະຫັດທີ155...) | 158 |
| ຜັກ ແລະໝາກໄມ້(ເບິ່ງຄືນຈາກລະຫັດ129/136) | 159 |
| ຜະລິດຕະພັນຈາກສັດລ້ຽງ(ເບິ່ງຄືນຈາກລະຫັດ139-142...) | 160 |
| ສັດປີກ(ເບິ່ງຄືນໃນລະຫັດ138) | 161 |
| **ເຄື່ອງນຸ່ງຫົ່ມ ແລະ ເກີບ** | |
| **ເຄື່ອງນຸ່ງຜູ້ຊາຍ** | |
| ສົ້ງຢີນ | 162 |
| ສົ້ງຂາຍາວອື່ນໆທົ່ວໄປ | 163 |
| ເສື້ອໃຫຍ່/ເສື້ອກັນຝົນ,ກັນໜາວ | 164 |
| ເຄື່ອງຫລິ້ນກິລາ/ຊຸດນຸ່ງກິລາ | 165 |
| ຊຸດແວັດ/ຊຸດຊັບຟລີ/ຊຸດເຂົ້າໂຮງຮຽນ | 166 |
| ເສື້ອຢືດບໍ່ມີຄໍ | 167 |
| ເສື້ອຢືດມີຄໍ | 168 |
| ເຄື່ອງນຸ່ງຊ້ອນໃນ(ເສື້ອທ້ອຍ,ລອງເທົ້າ,ສົ້ງຊ້ອນໃນ...) | 169 |
| ເຄື່ອງນຸ່ງອື່ນໆ(ສາຍແອວ,ໝວກ,ກາລະແວັດ..) | 170 |
| **ເຄື່ອງນຸ່ງຜູ້ຍິງ** | |
| ສິ້ນໄໝລາວ/ສິ້ນຝ້າຍລາວ | 171 |
| ສິ້ນອື່ນໆ(ກະໂປ່ງ,ສິ້ນແຕ້ມ...) | 172 |
| ຊຸດ ( ເສື້ອໃຫຍ່ນຸ່ງຄູ່ກັບສິ້ນ ແລະສົ້ງ ) | 173 |
| ເສື້ອຢືດບໍ່ມີຄໍ | 174 |
| ເສື້ອຢືດມີຄໍ | 175 |
| ສົ້ງຢີນ | 176 |
| ສົ້ງຂາສັ້ນຂາຍາວອື່ນໆທົ່ວໄປ(ສົ້ງຊ້ອນໃນ,ເສື້ອຊ້ອນໃນ...) | 177 |
| ອື່ນໆ(ຜ້າມັດຄໍ,ໂບຜູກຜົມ.,..) | 178 |
| **ເຄື່ອງນຸ່ງສຳລັບເດັກ** | |
| ສົ້ງຂາສັ້ນ | 179 |
| ສົ້ງຂາຍາວ | 180 |
| ສິ້ນ | 181 |
| ເສື້ອຢືດບໍ່ມີຄໍ | 182 |

| ລາຍການ | ລະຫັດ |
|---|---|
| ເສື້ອມີຄໍ | 183 |
| ກະໂປ່ງ,ສິ້ນ | 184 |
| ເສື້ອເດັກຍິງ | 185 |
| ອື່ນໆ(ສົ້ງຊ້ອນໃນຕ່າງໆ...) | 186 |
| **ຄ່າຕັດເຄື່ອງ** | **187** |
| XIII. ເຄື່ອງນຸ່ງຫົ່ມ,ຜ້າແພ ສຳລັບຕັດເຄື່ອງ | **188** |
| XIV. ເກີບ, ຖົງຕີນ | **189** |
| ໄຟຟ້າ, ນ້ຳປະປາ ແລະການບຳລຸງຮັກສາ ເຮືອນ | |
| ຄ່າເຊົ່າ(ເຮືອນ ຫລືຫ້ອງແຖວ ເຊິ່ງປະກອບມີເຄື່ອງ ເຟີນິເຈີຫລືບໍ່ປະກອບ ) | 190 |
| ວັດຖຸອຸປະກອນທີ່ຊື້ມາສຳລັບສ້ອມແປງເຮືອນ | 191 |
| ຄ່າແຮງງານສຳລັບສ້ອມແປງເຮືອນ / ການບົວລະບັດຮັກສາເຮືອນ | 192 |
| ຖ້າແຍກບໍ່ໄດ້ແມ່ນເອົາລວມທັງແຮງງານ ແລະວັດຖຸ | 193 |
| ຄ່ານ້ຳປະປາ | 194 |
| ຄ່າໄຟຟ້າ | 195 |
| ນ້ຳມັນກາດ(ໃຫ້ຄິດໄລ່ເປັນລິດ) | 196 |
| ຖ່ານຫີນ/ແກັດສ | 197 |
| ຟືນ ຫລື ຖ່ານດັງໄຟ ( ຊື້ເອົາ )ໃຫ້ຄິດໄລ່ເປັນກິໂລ | 198 |
| ຟືນ ຫລື ຖ່ານດັງໄຟ( ຜະລິດເອງ ຫລືຫາເອົາເອງ ) ໃຫ້ຄິດໄລ່ເປັນກິໂລ | 199 |
| ອື່ນໆ(ໝໍ້ໄຟ,ຖ່ານໄຟສາຍ...) | 200 |
| **ເຟີນີເຈີ, ເຄື່ອງຕົບແຕ່ງເຮືອນ ແລະການບຳລຸງຮັກສາ** | |
| **ເຟີນີເຈີ** | **ເຄື່ອງໃຊ້ຍາວນານ** |
| ຕຽງ | 201 |
| ຕູ້ໂຊ(ຕູ້ໃຫຍ່ທີ່ໃສ່ເສື້ອຜ້າ ຫລື ໃສ່ປຶ້ມວາລະສານຕ່າງໆ,ຕັ້ງໂທລະທັດ-ເທັບອື່ນໆ) | 202 |
| ຕູ້ໃສ່ຈອກ | 203 |
| ຊຸດໂຕະອາຫານ(ຊຸດນັ່ງກິນເຂົ້າ) | 204 |
| ຊຸດຊາລົງ | 205 |
| ໂຕະ ແລະ ຕູ້ໃສ່ຖ້ວຍຊາມໃນຫ້ອງກິນເຂົ້າ | 206 |
| ຕັ່ງມ້ານັ່ງ (ຕັ່ງຍາວ) | 207 |
| ອື່ນໆ | 208 |
| **ສ້ອມແປງເຄື່ອງເຟີນີເຈີ** | |
| ສ້ອມແປງເຄື່ອງເຟີນີເຈີ | 209 |
| **ສາດ, ຜ້າພົມປູພື້ນ ແລະຜ້າປູ** | |
| ສາດປູ(ສາດຢາງ ຫລື ສາດຜື) | 210 |

| ລາຍການ | ລະຫັດ |
|---|---|
| XV. ປະເພດ ເຄື່ອງຖັກແສ່ວ | |
| ຜ້າປູບ່ອນ/ໝອນ | 211 |
| ຜ້າຫົ່ມ/ມຸ້ງ | 212 |
| ຜ້າເຊັດໜ້າ/ຜ້າເຊັດໂຕ | 213 |
| ຜ້າກັ້ງ | 214 |
| ຜ້າປູໂຕະ, ຜ້າເຊັດມື / ຜ້າເຊັດປາກ | 215 |
| ຜ້າອື່ນໆ | 216 |
| ຄ່າສອັມແຊມຜ້າດັ່ງກ່າວ | 217 |
| **ເຄື່ອງຕົບແຕ່ງເຮືອນ, ພົມປູພື້ນ,ຜ້າປູພື້ນອື່ນໆ ແລະຄ່າສ້ອມແປງເຄື່ອງດັ່ງກ່າວ** | |
| ຜົມປູພື້ນເຮືອນ | 218 |
| ກະຕ່າ(ກະຕ່າໄປຕະຫລາດ,ກະຕ່າໃສ່ນຸ່ງທີ່ກຽມ ຊັກ,ກະຕ່າໃສ່ຂີ້ເຫຍື້ອ,ຂອງເຂ່ຍຂີ້ຢາ) | 219 |
| ໂຖປູກດອກໄມ້ ຫລື ເຕົ້າປູກຕົ້ນໄມ້ | 220 |
| ດອກໄມ້, ໂຖໃສ່ດອກໄມ້(ແຈກັນ) | 221 |
| ຄ່າສ້ອມແປງເຄື່ອງໃຊ້ສອຍດັ່ງກ່າວ | 222 |
| ດອກໄຟທຸກຊະນິດ, ຮູບພາບໂຊຕິດຝາເຮືອນ | 223 |
| ອື່ນໆ | 224 |
| **ປະເພດ ເຄື່ອງໃຊ້ໃນຄົວເຮືອນ** | **ເຄື່ອງໃຊ້ຍ າວນານ** |
| ຫມໍ້ຫນື້ງເຂົ້າ/ໝໍ້ແຕ່ງກິນ(ໝໍ້ດິນ ຫລື ໝໍ້ໂລ) | 225 |
| ຫມໍ້ຫຸງເຂົ້າໄຟຟ້າ | 226 |
| ຫມໍ້ຕົ້ມນ້ຳໄຟຟ້າ | 227 |
| ແອບເຂົ້າ (ບໍ່ແມ່ນເຄື່ອງໃຊ້ຍາວນານ) | 228 |
| ຄຸຕັກນ້ຳ (ບໍ່ແມ່ນເຄື່ອງໃຊ້ຍາວນານ) | 229 |
| ເຕົາໄຟບໍ່ມີເຕົາອົບ ( ເຕົາແກັດ, ເຕົາໄຟຟ້າ,...... ) | 230 |
| ຕູ້ເຢັນ / ຕູ້ນ້ຳກ້ອນ | 231 |
| ເຕົາລີດ ( ໃຊ້ໄຟຟ້າ, ບໍ່ໃຊ້ໄຟຟ້າ )/ໂຕະລີດຜ້າ | 232 |
| ແອເຢັນ | 233 |
| ພັດລົມ | 234 |
| ຈັກຫຍິບ | 235 |
| ຈັກຊັກຜ້າ | 236 |
| ອື່ນໆ ( ບອກແຈ້ງ ) | 237 |
| ຄ່າສ້ອມແປງເຄື່ອງດັ່ງກ່າວ | 238 |
| **ເຄື່ອງທີ່ເຮັດດ້ວຍແກ້ວ ແລະເຄື່ອງໃຊ້ໃນຄົວເຮືອນ ຕ່າງໆ** | |
| ມີດ, ພ້າ ,ຄົກ-ສາກ,ຈອງ,ຊຽງ,ພາເຂົ້າ,ຫວດໜື້ງ ເຂົ້າ,ກະດົ້ງຝັດເຂົ້າ,ພາເຂົ້າ | 239 |
| ເຄື່ອງທີ່ເຮັດດ້ວຍແກ້ວ ( ຈອກແກ້ວ, ຖ້ວຍແກ້ວ ໝໍ້ແກ້ວ,ໂຖແກ້ວ ) | 240 |
| ຈານ ແລະ ຈອກ(ຈອກຢາງ-ຈອກດິນ,ຈານຢາງ- ຈານດິນ) | 241 |

| ລາຍການ | ລະຫັດ |
|---|---|
| ຊຸດດື່ມນ້ຳຊາ-ກາເຟ | 242 |
| ຊຸດກິນອາຫານ ( ຖ້ວຍ,ຈານ,ບ່ວງ,ສ້ອມ,ໄມ້ທູ່...) | 243 |
| ອື່ນໆ | 244 |
| **ເຄື່ອງມື ແລະ ອຸປະກອນການສ້ອມແປງສຳລັບຄົວ ເຮືອນແລະສວນຄົວ** | |
| ອຸປະກອນສຳຫລັບເຮັດສວນ(ຈົກ,ຊວ້ານ.ສຽມ, ຄາດ,ບົວຫົດນ້ຳ,ທໍ່ນ້ຳ | 245 |
| ເຄື່ອງມືແລະອຸປະກອນອື່ນໆ(ເສົາໄມ້ ຫລື ເສົາເບ ຕົງ,ໄມ້ລ້ອມ ຫລື ເຫລັກລວດລ້ອມສວນ) | 246 |
| **ກິດຈະກຳຕ່າງໆໃນຄົວເຮືອນ** | |
| ສ້ອມແປງເຮືອນຄົວກິນ | 247 |
| ດອກໄຟ, ຫລອດໄຟ/ສາຍໄຟ ຫລື ກໍ້ປັກສຽບ | 248 |
| ທຽນໄຂ | 249 |
| ໄຟສາຍ | 250 |
| ໄມ້ຖູເຮືອນ,ຟອຍ ແລະແປງຖູ | 251 |
| ໄມ້ຂີດໄຟ/ໄຟແຊັກ | 252 |
| ເຂັມ ແລະເຂັມຂັດ | 253 |
| ສີສະແລກ ( ເຟີນີເຈີ, ພື້ນເຮືອນ, ໂລຫະ ) | 254 |
| ແປງຖູເກີບ ແລະສີລາພັດເກີບ | 255 |
| ສະບູກ້ອນຊັກເຄື່ອງ/ແຟບ | 256 |
| ຖ່ານໄຟສາຍ ຫລື ຖ່ານວິທະຍຸ | 257 |
| ເຊົ່າເຄື່ອງເຟີນີເຈີ ແລະເຄື່ອງເຮືອນອື່ນໆ | 258 |
| ເຄື່ອງໃຊ້ອື່ນໆໃນຄົວເຮືອນ | 259 |
| **ຄ່າບໍລິການພາຍໃນ** | |
| ຈ່າຍຄ່າແຮງງານໃຫ້ຄົນໃຊ້ເປັນວັດຖຸ | 260 |
| ຈ່າຍຄ່າແຮງງານໃຫ້ຄົນໃຊ້ເປັນເງິນສົດ | 261 |
| ຄ່າບໍລິການອື່ນໆຂອງຄົວເຮືອນ | 262 |
| **ການຮັກສາສຸຂະພາບ** | |
| ຢາປົວພະຍາດຕ່າງໆ | 263 |
| ຄ່າອຸປະກອນການແພດ(ການກວດຫາເຊື້ອພະ ຍາດ) | 264 |
| ຈ່າຍຄ່າທຳນຽມ ແລະ ບໍລິການດ້ານການແພດ | 265 |
| ຄ່າໃຊ້ຈ່າຍໃນການເດີນທາງແລະການກິນຢູ່ ສຳ ລັບການປິ່ນປົວໂດຍສະເພາະ | 266 |
| ຈ່າຍຄ່າປະກັນໄພດ້ານການຮັກສາສຸຂະພາບ | 267 |
| ອື່ນໆ | 268 |
| **ຄົມມະນາຄົມຂົນສົ່ງ** | |
| **ການຊື້ພາຫະນະ** | |
| ລົດໃຫຍ່ ແລະ ລົດບັນທຸກ | 269 |
| ລົດຈັກ | 270 |

| ລາຍການ | ລະຫັດ |
|---|---|
| ລົດຖີບ | 271 |
| ອື່ນໆ ( ບອກແຈ້ງ ) | 272 |
| **ກິດຈະກຳກ່ຽວກັບອຸປະກອນການຂົນສົ່ງຂອງສ່ວນບຸກຄົນ** | |
| ຢາງນອກ ແລະຢາງໃນ | 273 |
| ເຄື່ອງອາໄຫລ່ ແລະເຄື່ອງປະກອບລົດລວມທັງຫມໍ້ໄຟ | 274 |
| ຄ່າສ້ອມແປງລົດ | 275 |
| ນ້ຳມັນກາຊວນ | 276 |
| ນ້ຳມັນແອັດຊັງ | 277 |
| ນ້ຳມັນເຄື່ອງ ແລະນ້ຳມັນອື່ນໆ | 278 |
| ຄ່າບໍລິການລົດ(ຄ່າປະກັນໄພລົດ,ຄ່າທາງ,ຄ່າຕໍ່ທະບຽນລົດ,ຄ່າຝາກລົດເລົ່ານີ້ເປັນຕົ້ນ) | 279 |
| ຄ່າຕ່າງໆກ່ຽວກັບລົດ(ກໍລະນີສຸກເສີນ ຫລື ເກີດອຸປະຕິເຫດ) | 280 |
| **ການໃຊ້ບໍລິການທາງດ້ານຄົມມະນາຄົມ** | |
| ຄ່າລົດເມ (ບໍ່ລວມຄ່າ ລົດໂຮງຮຽນ ) | 281 |
| ຄ່າ ຕັກຊີ ແລະຕຸກຕຸກ | 282 |
| ຄ່າເຮືອ | 283 |
| ຄ່າປີ້ຍົນ ພາຍໃນ | 284 |
| ຄ່າປີ້ຍົນ ໄປຕ່າງປະເທດ | 285 |
| ຄ່າຄົນສົ່ງສິນຄ້າ | 286 |
| ອື່ນໆ | 287 |
| **ໂທລະຄົມ ມະນາຄົມ** | |
| ຄ່າໄປສະນີ | 288 |
| ຄ່າໂທລະສັບ (ຕັ້ງໂຕະ ) | 289 |
| ຄ່າໂທລະສັບມືຖື | 290 |
| ໂທລະເລກ ແລະໂທລະສານ(ແຟັກສ) | 291 |
| **ການພັກພ່ອນຢ່ອນອາລົມ** | |
| **ເຄື່ອງຫລິ້ນ ແລະອາໄລ່ ລວມທັງການສ້ອມແປງເຄືອງຫລິ້ນ** | |
| ວິທະຍຸ ຫລື ເທັບ, ວີຊີດີ, ເຄື່ອງຫລິ້ນ ດີວີດີ | 292 |
| ໂທລະພາບ ເປັນຊຸດ | 293 |
| ຈານດາວທຽມ | 294 |
| ເຄື່ອງຫລິ້ນວີດີໂອ | 295 |
| ກ້ອງຖ່າຍຮູບ,ກ້ອງຖ່າຍທຳວີດີໂອ | 296 |
| ເຄື່ອງຫລິ້ນດົນຕີຣທຸກຊະນິດເຊັ່ນ:ກີຕາ,ສີຊໍ,ແຄນ... | 297 |
| ວິທະຍຸສື່ສານ(ໂຟນີ) | 298 |
| ໂທລະສັບ ເປັນຊຸດ | 299 |
| ຄອມພິວເຕີ | 300 |

| ລາຍການ | ລະຫັດ |
|---|---|
| ຄ່າສ້ອມແປງເຄື່ອງຫລິ້ນເຊັ່ນ:ເທັບ,ຊີດີ,ດີວີດີ,ວີຊີດີນັບແຕ່ລະຫດ292-300. | 301 |
| ຟີມ ແລະ ການລ້າງຟີມ(ອັດຮູບ) | 302 |
| ອຸປະກອນອື່ນໆທີ່ນຳໃຊ້ເຂົ້າກັບລະຫັດ302 | 303 |
| ເຄື່ອງປະກອບ ແລະອາໄຫລ່ ຂອງເຄື່ອງຫລິ້ນດັ່ງກ່າວ(ການຕໍ່ເຕີມເສີມແຕ່ງໄປນຳຍຸກສະໃໝ) | 304 |
| ການສ້ອມແປງເຄື່ອງຫລິ້ນດັ່ງກ່າວແຕ່ລະຫັດ 292-304. | 305 |
| **ຄ່າບໍລິການໃນການພັກຜ່ອນຢ່ອນອາລົມ** | |
| ຄ່າປີ້ຊົມຮູບເງົາ / ລະຄອນ/ລຳເລື້ອງ/ກາຍະສິນ | 306 |
| ຈ່າຍຄ່າການກິລາຕ່າງໆ(ດອກປີກໄກ່,ເທັດນິດສຫລິ້ນຢາງບ້ວງ,ຍິງກັນຖຸນ,ຍິງທະນູ,ຍິງປືນລົມ.) | 307 |
| ຫວຍຕ່າງໆ | 308 |
| ຄ່າເຊົ່າມ້ວນວີດີໂອ,ແຜ່ນວີຊີດີ | 309 |
| ສັດຕະວະແພດ ແລະ ການບໍລິການອື່ນສຳລັບລຽ້ງສັດ(ສັກຢາປ້ອງກັນໂຣກ) | 310 |
| ພິທີທາງສາດສະໜາ(ທຸກຢ່າງທີ່ມີຈຸດປະສົງນຳໄຊ້ເຂົ້າທາງດ້ານສາດາໜາ) | 311 |
| ການໃຊ້ຈ່າຍໃນການພັກຜ່ອນ ແລະການເຄື່ອນໄຫວດ້ານວັດທະນະທຳອື່ນໆ | 312 |
| **ໜັງສືພິມ, ປຶ້ມອ່ານ ແລະເຄື່ອງຂຽນ** | |
| ປຶ້ມຂຽນ/ປຶ້ມອ່ານ | 313 |
| ວາລະສານ ແລະໜັງສືພິມ | 314 |
| ບິກ, ປາກກາ,ບັນທັດ,ສໍສີ ແລະສໍດຳ | 315 |
| ເຄື່ອງຂີດຂຽນອື່ນໆ | 316 |
| XVI. ການທ່ອງທ່ຽວ | |
| **XVII. ຄ່າໃຊ້ຈ່າຍໃນການທ່ອງທ່ຽວ** | 317 |
| **ການສຶກສາ** | |
| ຄ່າທຳນຽມໂຮງຮຽນ ( ບໍ່ລວມ ຄ່າອາຫານ, ເຄື່ອງດື່ມ ແລະທີ່ພັກ ) | 318 |
| ຄ່າຮຽນເພີ້ມ | 319 |
| ເຄື່ອງແບບນັກຮຽນ ( ນັບທັງເກີບ ) | 320 |
| ເຄື່ອງນຸ່ງຫລີ້ນກິລາຂອງນັກຮຽນ | 321 |
| ຈ່າຍຄ່າອຸປະກອນການຮຽນ | 322 |
| ຄ່າທຳນຽມຜ່ານແດນ | 323 |
| ການປະກອບສ່ວນໃຫ້ໂຮງຮຽນ ເປັນເງິນສົດ | 324 |
| ການປະກອບສ່ວນໃຫ້ໂຮງຮຽນ ເປັນວັດຖຸ | 325 |
| ການໃຊ້ຈ່າຍໃນການສຶກສາອື່ນໆ(ຈ່າຍຄ່າປຶ້ມແບບຕຳລາຮຽນ,ອັດເອກະສານການຮຽນຕ່າງໆ.) | 326 |
| **ຮ້ານອາຫານ ແລະໂຮງແຮມ** | |

| **ລາຍການ** | **ລະຫັດ** |
|---|---|
| XVIII. ຮ້ານອາຫານ ແລະຮ້ານກິນດື່ມ | |
| ກິນອາຫານ ຫລືເຄື່ອງດື່ມຢູ່ໃນຮ້ານອາຫານ | 327 |
| ຊື້ອາຫານ ຫລືເຄື່ອງດື່ມມາຈາກຮ້ານອາຫານ | 328 |
| **ໂຮງແຮມ** | |
| ການໃຊ້ຈ່າຍໃນໂຮງແຮມ | 329 |
| **ເຄື່ອງໃຊ້ສ່ວນຕົວ ແລະການບໍລິການ** | |
| **ການບໍລິການສ່ວນຕົວ** | |
| ຄ່າຕັດຜົມ / ຄ່າເຮັດຜົມ/ມັດແຖໜວດ | 330 |
| ຄ່າເສີມສວຍ ,ຕົບແຕ່ງ ອາບອົບນວດ ແລະອື່ນໆ | 331 |
| **ເຄື່ອງໃຊ້ສ່ວນຕົວ** | |
| ສະບູອາບນ້ຳ | 332 |
| ຢາສະຜົມ,ຢານວດຜົມ | 333 |
| ເຈ້ຍອານາໄມ | 334 |
| ຜ້າອ້ອມເດັກນ້ອຍ | 335 |
| ຄຣີມທາຜິວໜັງ | 336 |
| ຟອຍຖູແຂ້ວ | 337 |
| ຢາສີແຂ້ວ | 338 |
| ແປ້ງຫອມ/ນ້ຳຫອມ | 339 |
| ເຄື່ອງໃຊ້ພາຍໃນຫ້ອງນ້ຳອື່ນໆ | 340 |
| **ເຄື່ອງເອ້ສ່ວນຕົວ** | |
| ໂມງ | 341 |
| ເພັດ,ພອຍ,ແຫວນ,ສາຍສ້ອຍ,ປລັກແຂນ ແລະວັດຖຸມີຄ່າທຸກຢ່າງ | 342 |
| ຈ່າຍຄ່າສ້ອມແປງເຄື່ອງດັ່ງກ່າວ | 343 |
| ເຄື່ອງໃຊ້ສຳລັບການທ່ອງທ່ຽວ(ຖົງພາຍ,ຖົງເປ້,ກະເປົ໋າ,ຫີບ) | 344 |
| ຄັນຫົ່ມ/ຄັນຈ້ອງ | 345 |
| ເຄື່ອງໃຊ້ສ່ວນຕົວອື່ນໆ | 346 |
| **ການບໍລິການຂອງສະຖາບັນການເງິນ ແລະກົດໝາຍຕ່າງໆ** | |
| ຄ່າທຳນຽມບໍລິການດ້ານກົດໝາຍ ແລະຄ່າປັບໃໝເປັນເງິນສົດ(ຕົວຢ່າງ:ການຢ່າຮ້າງ,ການທຳລາຍຮ່າງກາຍ,ພາສີ-ອາກອນ...) | 347 |
| ຄ່າທຳນຽມບໍລິການດ້ານກົດໝາຍ ແລະຄ່າປັບໃໝເປັນວັດຖຸ(ຕົວຢ່າງ:ການຢ່າຮ້າງ,ການທຳລາຍຮ່າງກາຍ,ພາສີ-ອາກອນ...)ຕີລາຄາວັດຖຸມາເປັນເງິນສົດ | 348 |
| ດອກເບ້ຍທີ່ໄດ້ເສຍເປັນເງິນສົດ | 349 |
| ບໍລິການຂອງສະຖາບັນການເງິນອື່ນໆ(ການປະກອບສ່ວນຊຸກຍູ້ໃນຂະບວນການຕ່າງໆເຊັ່ນ:ຂະ | 350 |

| **ລາຍການ** | **ລະຫັດ** |
|---|---|
| ບວນການກິລາ,ສິນລະປະ,ສຶກສາ...) | |
| **ການບໍລິການອື່ນໆ** | |
| ຄ່າທຳນຽມຂອງສະມາຊິກຂອງສະມາຄົມ(ສະມາຄົມຂົນສົ່ງທາງບົກ ຫລື ທາງນ້ຳ,ສະມາຄົມຊາວໜຸ່ມ,ສະມາຄົມຫວຽດ,ສະມາຄົມຈີນ...) | 351 |
| ຄ່າສີເຂົ້າ/ສີກາເຟ | 352 |
| ການປະກອບສ່ວນເຂົ້ານຳສາດສະໜາເປັນເງິນສົດ(ການແຜ່ປັດໃຈສ້າງສິມ,ສ້າງຫໍແຈກ,ສ້າງປະຕູໂຂງ-ທາດຕ່າງໆ...) | 353 |
| ສົ່ງເງິນສົດໃຫ້ຄົນອື່ນທີ່ບໍ່ແມ່ນສະມາຊິກຂອງຄົວເຮືອນ(ສົ່ງໃຫ້ໝູ່ເພື່ອນ ຫລື ນ້ອງຮັກ-ນ້ອງແພງຕ່າງໆ...) | 354 |
| ໃຊ້ຈ່າຍເງິນຕາຢູ່ຕ່າງປະເທດ(ຈ່າຍໃນເວລາໄປທ່ອງທ່ຽວໃດນຶ່ງ ຫລື ໄປທັດສະນະສຶກສາຕ່າງໆ..) | 355 |
| ອື່ນໆ ( ບອກແຈ້ງ ) | 356 |
| **ກະສິກຳປ່າ,ໄມ້ແລະການປະໂມງ** | |
| **ການຂາຍ,ຂາຍຄືນ ຫລືແລກປ່ຽນວັດຖຸສິ່ງຂອງ ແລະເຄື່ອງຂອງທີ່ໃຫ້ຄົນອື່ນໄປຖືເປັນເງິນເດືອນ ແຕ່ເປັນວັດຖຸ ແຕ່ບໍ່ແມ່ນການຊົມໃຊ້ເອງ** | |
| ເຂົ້າໜຽວ | 401 |
| ເຂົ້າຈ້າວ | 402 |
| ສາລີເມັດ | 403 |
| ປະເພດເຂົ້າອື່ນໆ(ເຂົ້າເປືອກ...) | 404 |
| ພືດທີ່ຜະລິດພາຍໃນຄອບຄົວ(ເບິ່ງຄືນນັບແຕ່ລະຫັດທີ 56-87ປະເພດພືດຜັກຕ່າງໆທີ່ໄດ້ປູກເອງ) | 405 |
| ອາຫານສັດ(ຫົວອາຫານ,ຮຳ,ເຂົ້າປຽນ) | 406 |
| ພືດອຸສະຫະກຳ(ໃບຢາ,ອ້ອຍ,ປໍ,ປ່ານ,ຝ້າຍ,ໃບຊາ,ໝາກເດືອຍ) | 407 |
| ຜັກຕ່າງໆ(ແມ່ນຜັກທີ່ຫາມາຈາກທຳມະຊາດ ຫລືຈາກພູຜາ-ປ່າເຂົາ | 408 |
| ພືດກິນຫົວ ແລະຮາກຕ່າງໆ(ເບິ່ງຄືນໃນລະຫັດ 91 -96.) | 409 |
| ໝາກໄມ້(ເບິ່ງຄືນປະເພດໝາກໄມ້ໃນລະຫັດທີ 37-55) | 410 |
| ສັດລ້ຽງ(ປາ,ງົວ,ຄວາຍ,ໝູ,ໝາ,ແບ້,ຊ້າງ,ມ້າ...) | 411 |
| ສັດປີກ(ເປັດ,ຫ່ານ,ໄກ່ທຸກຊະນິດ,ນົກທຸກຊະນິດ..) | 412 |
| ຜະລິດຕະພັນນົມ(ນົມສົດ,ນົມງົວ) | 413 |
| ໄຂ່ (ໄຂ່ເປັດ,ໄຂ່ໄກ່,ໄຂ່ນົກ) | 414 |
| ສັດປ່າ(ນັບແຕ່ກົບ,ຂຽດ,ອື່ງ,ແມງໄມ້ຕ່າງໆທີ່ສາມາດນຳມາເປັນອາຫານໄດ້ຈົນຮອດສັດໃຫຍ່ກະຮອກ,ກະແຕ,ກວາງ,ຟານເຫົລ່ານີ້ເປັນຕົ້ນ) | 415 |
| ປາລ້ຽງ(ປານິນ,ປາໃນ,ປຸກພັນ,ປາປາກ,ປາເກັດ | 416 |

| ລາຍການ | ລະຫັດ |
|---|---|
| ແລບ,ປາສະຫວາຍ...) | |
| ປາທຳມະຊາດ (ນັບທັງລູກຮວກ,ກະປູ,ຫອຍ ແລະ ແມງໄມ້ທີ່ຢູ່ໃນນໍ້າທີ່ສາມາດນຳມາເປັນອາຫານໄດ້...) | 417 |
| ໄມ້, ໄມ້ທ່ອນ,ໄມ້ແປຮູບ, ໄມ້ຟືນ | 418 |
| ເຄື່ອງຂອງທີ່ໄດ້ຂາຍ(ວັດຖຸສິ່ງຂອງຕ່າງໆໃນຄົວເຮືອນ ແລະ ຂອງມີຄ່າເຂອງຕົນທີ່ເຊົາຊົມໃຊ້ແລ້ວເຊັ່ນ:ເຄື່ອງນຸ່ງຂອງຖີ,ເຄື່ອງເຮືອນຂອງຊານ...) | 419 |
| ລາຍຮັບອື່ນໆເປັນເງິນສົດ(ນອກຈາກລະຫັດທີ 401-419)ເວົ້າແຈ້ງ | 420 |
| ລາຍຮັບອື່ນໆເປັນວັດຖຸ(ນອກຈາກລະຫັດທີ 401-419)ເວົ້າແຈ້ງ | 421 |
| **ມູນຄ່າ( ການໃຊ້ຈ່າຍ,ການແລກປ່ຽນ ແລະການຜະລິດຂອງຕົນເອງ )** | |
| ແນວພັນເຂົ້າພື້ນເມືອງ | 451 |
| ແນວພັນເຂົ້າປັບປຸງ | 452 |
| ແນວພັນອື່ນໆ(ແນວພັນການປູກຝັງທຸກຢ່າງ) | 453 |
| ອາຫານສັດ (ຫົວອາຫານ,ຮຳ,ເຂົ້າປຽນ) | 454 |
| ສັດລ້ຽງ(ປາ,ງົວ,ຄວາຍ,ໝູ,ໝາ,ແບ້,ຊ້າງ,ມ້າ...) | 455 |
| ສັດປີກ(ເປັດ,ຫ່ານ,ໄກ່ທຸກຊະນິດ,ນົກທຸກຊະນິດ..) | 456 |
| ຫຍ້າສຳລັບລ້ຽງສັດ | 457 |
| ຝຸ່ນ, ປຸຍ | 458 |
| ຢາຂ້າສັດຕູພືດ, ສານກຳຈັດພືດ,ຢາວັກຊີນ | 459 |
| ໄຟຟ້າ(ນັບທັງໄຟຈັກ ແລະ ໄຟປັ່ນນໍ້າຂອງຕົນເອງ) | 460 |
| ນໍ້າມັນເຊື້ອໄຟ(ກາຊວນ,ແອັດຊັງ,ກາດ ແລະ ນໍ້າມັນເຄື່ອງຕ່າງໆ) | 461 |
| ມູນຄ່າການຂົນສົ່ງອື່ນໆ(ຈ່າຍຄ່າຂົນສົ່ງຕ່າງໆເຂົ້າໃນການແລກປ່ຽນ ແລະ ການຜລິດ) | 462 |
| ພາຫະນະ (ລົດຈັກ,ລົດເກັ່ງ,ລົດກະບະ,ລົດບັນທຸກລົດແທັກເຕີ,ລົດເກດ-ລົດໄລຕ່າງໆ...) | 463 |
| ເຄື່ອງມື ແລະອຸປະກອນຂະໜາດນ້ອຍຮັບໃຊ້ໃນການເຮັດກະສິກຳ(ລົດໄຖນາເດີນຕາມ,ຈັກຟາດເຂົ້າ....) | 464 |
| ເຄື່ອງມື ແລະອຸປະກອນຂະໜາດນ້ອຍຮັບໃຊ້ເຂົ້າໃນການປ່າໄມ້(ເລື່ອຍມື,ຈັກສະຕິນ..) | 465 |
| ເຄື່ອງມື ແລະອຸປະກອນຂະໜາດນ້ອຍຮັບໃຊ້ເຂົ້າໃນການປະມົງ(ແຫ,ມອງ,ເບັດ,ລູກແຫ-ລູກມອງສາຍຢາງ-ສາຍເອັນ,ລອບ-ໄຊ-ຈັ່ນ...) | 466 |
| ການສ້ອມແປງອຸປະກອນດັ່ງກ່າວຈາກລະຫັດ460 -466) | 467 |
| ອຸປະກອນການກໍ່ສ້າງ(ປຸກສ້າງຄອກສັດ,ລ້ອມຮົ້ວ) | 468 |

| ລາຍການ | ລະຫັດ |
|---|---|
| ຄ່າແຮງງານ ແລະເງິນເດືອນເປັນເງິນສົດ | 469 |
| ຄ່າແຮງງານ ແລະເງິນເດືອນເປັນວັດຖຸ | 470 |
| ການໃຊ້ຈ່າຍອື່ນໆ | 471 |
| **ທຸລະກິດຂອງຄົວເຮືອນ** | |
| **ລາຍຮັບ** | |
| ຂາຍຄືນເຄື່ອງຂອງທີ່ໄດ້ຊື້ມາເພື່ອຂາຍທຸກຢ່າງ | 501 |
| ຂາຍເຄື່ອງທີ່ຫາມາໄດ້(ເຄື່ອງປ່າຂອງນາ,ເສດເຫລັກເສດທອງເປັນຕົ້ນ) | 502 |
| ຂາຍເຄື່ອງທີ່ໄດ້ຜະລິດ ຫລື ປຸງແຕ່ງ ( ອຸດສະຫະກຳ ຫລື ຫັດຖະກຳ ) ຂາຍເຝີ-ເຂົ້າປຽກ,ນໍ້າໝາກໄມ້ປັ່ນ,ຂອງກິນສຸກຕ່າງໆລວມທັງເຫລົ້າລາວທຸກຊະນິດ.ເຄື່ອງເຟີນີເຈີ,ຕໍ່າຫູກຫໍ່ໃໝ,ຈັກສານ-ແກະສະລັກທຸກຢ່າງ. | 503 |
| ລາຍຮັບຈາກ ການບໍລິການຂົນສົ່ງ(ກໍລະນີມີເຮືອແພ ຫລື ລົດໂດຍສານ ແລະ ລົດບັນທຸກອື່ນໆ) | 504 |
| ລາຍຮັບຈາກຊັບສິນບັດ ( ຄ່າເຊົ່າ ດິນ,ເຊົ່າເຮືອນ,ເຊົ່າລົດ...) | 505 |
| ລາຍຮັບຈາກການບໍລິການອື່ນໆ(ຕັດຜົມ,ເສີມສວຍ,ຕັດຫຍິບເຄື່ອງນຸ່ງຮົ່ມ,ສ້ອມແປງລົດນ້ອຍ-ໃຫຍ່,ຕາບຢາງລົດ, ສາກໝໍ້ໄຟເຫລົ່ານີ້ເປັນຕົ້ນ) | 506 |
| ການຊົມໃຊ້ຜະລິດຕະພັນຕົນເອງ ສຳຫລັບຂາຍ ( | 507 |
| ມູນຄ່າຜະລິດຕະພັນທີ່ໄດ້ໃຫ້ເປັນເງິນເດືອນ,ແຕ່ໃຫ້ເປັນວັດຖຸແທນ | 508 |
| ມູນຄ່າສິນຄ້າທີ່ໄດ້ແລກປ່ຽນ | 509 |
| ມູນຄ່າທີ່ໄດ້ຮັບເປັນເງິນສົດສຳລັບການບໍລິການ ຫລື ວຽກເຮັດແລ້ວ(ການຮັບເໝົາກິດຈະການ ຫລື ການກໍ່ສ້າງໃດນຶ່ງເຊັ່ນ:ຮັບເໝົາຂຸດນໍ້າສ້າງ,ກຳມະກອນແບກຫາບ-ຍູ້ລໍ້,ລາຍຮັບນີ້ອາດຈະໄດ້ເປັນປະຈຳ ລຫື ບາງຄັ້ງຄາວ) | 510 |
| ລາຍຮັບຈາກການຂາຍ ລວມທັງຕົ້ນທຶນ(ຕົວຢ່າງ: ຕົ້ນທຶນນໍ້າປາແກ້ວ 6.500ກີບ,ຂາຍ 7.000ກີບ. ໝາຍຄວາມວ່າເຮົາຈົດເອົາ 7.000ກີບ) | 511 |
| ລາຍຮັບທຸລະກິດອື່ນໆ ( ບອກແຈ້ງ ) | 512 |
| **ມູນຄ່າການດຳເນີນທຸລະກິດ(ເປັນທຸລະກິດທີ່ມີໃບທະບຽນອະນຸຍາດດຳເນີນກິດຈະການໃດນຶ່ງ)** | |
| ສິນຄ້າທີ່ໄດ້ຊື້ສຳລັບຂາຍ(ເຊັ່ນ:ເຄື່ອງອຸປະໂພກ-ບໍລິໂພກຕ່າງໆ,ລົດ-ຍົນຕ່າງໆເຄື່ອງອາໄລ່ຕ່າງໆ,ເຄື່ອງກໍ່ສ້າງຕ່າງໆ,ຢາປົ່ນປົວພະຍາດຕ່າງໆ...) | 551 |
| ວັດຖຸດິບ ສຳລັບມາປຸງແຕ່ງ(ໝາກກາເຟ,ໝາກແໜ່ງ,ໃບຊາ,ໃບຢາ,ອ້ອຍ,ໃບມອນ,ຝ້າຍ...) | 552 |
| ມູນຄ່າເຊົ່າ,ເຊົ່າຫ້ອງ ຫລື ສາງມຽນເຄື່ອງ | 553 |
| ນໍ້າມັນເຊື້ອໄຟ,ໄຟຟ້າ,ອາຍແກັສ,ນໍ້າ(ຕົ້ນທຶນໃດ | 554 |

| ລາຍການ | ລະຫັດ |
|---|---|
| ນຶ່ງ ຫລື ຫລາຍກົ່ວໃນການປະກອບທຸລະກິດ(ເຊັ່ນ:ໂຮງງານນ້ຳດື່ມບໍລິສຸດ,ປ້ຳນ້ຳມັນເຊື້ອໄຟ-ອາຍແກັດສຕ່າງໆເຫລົ່ານີ້ເປັນຕົ້ນ) | |
| ເຄື່ອງປະກອບທາງດ້ານການຂົນສົ່ງ ( ພາຫະນະ ຮັບໃຊ້ເຂົ້າໃນທຸລະກິດໂດຍສະເພາະ ) | 555 |
| ເຄື່ອງມື ແລະອຸປະກອນຂະຫນາດນ້ອຍທີ່ຮັບໃຊ້ເຂົ້າໃນການບໍລິຫານທຸລະກິດ | 556 |
| ເຊົ່າ ແລະສ້ອມແປງອຸປະກອນ | 557 |
| ຄ່າຂົນສົ່ງ | 558 |
| ສ້ອມແປງອາຄານ (ຄ່າແຮງງານ ແລະວັດຖຸ) | 559 |
| ການເອົາສິນຄ້າໃຫ້ຄົນອື່ນ(ການປະກອບສ່ວນຊຸກຍູ້ຂະບວນການຕ່າງໆ ຫລື ໃຫ້ເປັນຂອງຂວັນ...) | 560 |
| ຄ່າແຮງງານ ແລະເງິນເດືອນເປັນເງິນສົດ | 561 |
| ຄ່າແຮງງານ ແລະເງິນເດືອນເປັນວັດຖຸ | 562 |
| ພາສີທຸລະກິດ, ໃບອະນຸຍາດ | 563 |
| ຄ່າທຳນຽມການບັນຊີ ແລະຄ່າບໍລິການອື່ນໆ | 564 |
| ຈ່າຍດອກເບ້ຍເງິນກູ້ສຳລັບທຸລະກິດ | 565 |
| ມູນຄ່າທຸລະກິດອື່ນໆ | 566 |
| **ການລົງທຶນຂອງຄົວເຮືອນ(ໃນປີທີ່ສຳຫລວດ)** | |
| ການຊື້ດິນ | 601 |
| ການຊື້ເຮືອນຢູ່ | 602 |
| ວັດສະດຸກໍ່ສ້າງ / ການກໍ່ສ້າງເຮືອນຢູ່ | 603 |
| ແຮງງານກໍ່ສ້າງ ສຳລັບກໍ່ສ້າງເຮືອນຢູ່ | 604 |
| ວັດສະດຸກໍ່ສ້າງ / ການກໍ່ສ້າງສຳລັບວຽກງານກະສິກຳເຊັ່ນ:ຄອກສັດ ຫລື ຟາມສັດຕ່າງໆ,ຮົ້ວສວນ...) | 605 |
| ແຮງງານກໍ່ສ້າງ ສຳລັບວຽກງານກະສິກຳ | 606 |
| ວັດສະດຸກໍ່ສ້າງ / ການກໍ່ສ້າງ ເພື່ອວຽກງານທຸລະກິດ | 607 |
| ແຮງງານກໍ່ສ້າງ ສຳລັບວຽກງານທຸລະກິດ | 608 |
| ຖ້າແຍກບໍ່ໄດ້ແມ່ນເອົາລວມທັງ ວັດສະດຸກໍ່ສ້າງ ແລະ ຄ່າແຮງງານ ສຳລັບການກໍ່ສ້າງ ເພື່ອຢູ່ອາໃສ | 609 |
| ຖ້າແຍກບໍ່ໄດ້ແມ່ນເອົາລວມທັງ ວັດສະດຸກໍ່ສ້າງ ແລະ ຄ່າແຮງງານ ສຳລັບການກໍ່ສ້າງທີ່ກ່ຽວກັບວຽກງານກະສິກຳ | 610 |
| ຖ້າແຍກບໍ່ໄດ້ແມ່ນເອົາລວມທັງ ວັດສະດຸກໍ່ສ້າງ ແລະ ຄ່າແຮງງານ ສຳລັບການກໍ່ສ້າງເພື່ອທຸລະກິດ | 611 |

## <u>ວິທີຈົດກ່າຍແບບສອບຖາມສຳລັບຄົວເຮືອນ.</u>

- <u>ໜ້າປົກ</u> :

**<u>ລະຫັດທີ່ຕັ້ງ</u>** :

**ແຂວງ:** ໃຫ້ຂຽນຊື່ ແຂວງ ແລະ ໃສ່ລະຫັດແຂວງຕາມບັນຊີທີ່ ສູນສະຖິຕິໄດ້ກຳນົດ ໃຫ້.

**ເມືອງ:** ໃຫ້ຂຽນຊື່ ເມືອງ ແລະໃສ່ລະຫັດເມືອງຕາມບັນຊີທີ່ ສູນສະຖິຕິໄດ້ກຳນົດ ໃຫ້.

**ບ້ານ:** ໃຫ້ຂຽນຊື່ ບ້ານ ແລະໃສ່ລະຫັດບ້ານຕາມບັນຊີທີ່ ສູນສະຖິຕິໄດ້ກຳນົດ ໃຫ້.

**ເລກທີ່ຄົວເຮືອນ:** ແມ່ນໝາຍເຖິງເລກທີ່**ຄົວເຮືອນ**ຕົວແທນຊຶ່ງນັກເດີນສຳຫລວດໄດ້ຄັດເລືອກ ໂດຍໃຊ້ວິທີການເລືອກຕົວແທນ ຕາມການແນະນຳຂອງ ສູນສະຖິຕິແຫ່ງຊາດ, ຕາມປົກກະຕິແລ້ວບ້ານໜຶ່ງຈະມີ**ຄົວເຮືອນ**ຕົວແທນບໍ່ກາຍ10 ຄົວເຮືອນ, ສະນັ້ນ ເລກລຳດັບ**ຄົວເຮືອນ**ສູງສຸດຈະມີແຕ່ 01-10 ເທົ່ານັ້ນ.

**ເຂດສຳຫລວດ:** ຈະມີ 2 ປະເພດເຂດສຳຫລວດ, ເຂດຕົວເມືອງ ແລະຊົນນະບົດ. ໃຫ້ຂຽນລະຫັດ 1 ຖ້າບ້ານນັ້ນແມ່ນເຂດ ຕົວເມືອງ ແລະຂຽນລະຫັດ 2 ຖ້າບ້ານນັ້ນແມ່ນເຂດ ຊົນນະບົດ, ການກຳນົດເຂດຕົວເມືອງ ຫລືເຂດຊົນນະບົດ ແມ່ນໃຫ້ອີງໃສ່ນິຍາມທີ່ ສູນສະຖິຕິແຫ່ງຊາດໄດ້ກຳນົດໃຫ້ໃນປຶ້ມຄູ່ມື.

**ວັນທີ່ສຳພາດ:** ໃຫ້ຂຽນວັນທີ່ ເລີ້ມຕົ້ນສຳພາດເທື່ອທຳອິດ.

**ເດືອນສຳພາດ:** ໃຫ້ຂຽນເດືອນທີ່ທ່ານກຳລັງປະຕິບັດການສຳຫລວດຢູ່.

**ຊື່ຜູ້ຖືກສຳພາດ:** ໃຫ້ຂຽນຊື່ຜູ້ທີ່ທ່ານສຳພາດ, ຜູ້ທີ່ຖືກສຳພາດຈະຕ້ອງແມ່ນຫົວໜ້າ**ຄົວເຮືອນ** ຫລືຜູ້ໃຫຍ່ທີ່ກຳສະພາບຂອງ**ຄົວເຮືອນ**ໄດ້ ແລະສາມາດໃຫ້ຂໍ້ມູນຕ່າງໆກ່ຽວກັບຄົວເຮືອນໄດ້ຢ່າງຊັດເຈນ.

**ຊື່ນັກເດີນສຳຫຼວດ:** ໃຫ້ຂຽນຊື່ຂອງທ່ານ ໃນເວລາທ່ານສຳພາດຄັ້ງທຳອິດ.

ສຳລັບຊື່ນັກກວດກາຢູ່ພາກສະໜາມ ແລະນັກກວດກາຢູ່ຫ້ອງການ, ນັກກວດກາຈະເປັນຜູ້ຂຽນໃສ່ເອງໃນເວລາເຂົາເຈົ້າກວດກາແບບສອບຖາມ.

## ພາກທີ່ I: ສ່ວນປະກອບຂອງຄົວເຮືອນ.

ໃຫ້ຂຽນຊື່ຂອງສະມາຊິກທີ່ຢູ່ເປັນປົກກະຕິໃນ**ຄົວເຮືອນ** ໃສ່ຫລັງປົກຂອງແບບສອບຖາມທີ່ໄດ້ພັບໄວ້, ການຂຽນຊື່ແມ່ນໃຫ້ເລີ້ມຕົ້ນດ້ວຍຫົວໜ້າ**ຄົວເຮືອນ**ກ່ອນ ຫລັງຈາກນັ້ນໃຫ້ຂຽນຊື່ເມຍ/ຜົວຂອງຫົວໜ້າ**ຄົວເຮືອນ**, ຖັດມາໃຫ້ຂຽນຊື່ຜູ້ທີ່ມີອາຍຸຫລາຍກ່ອນ ແລະນ້ອຍລົງຕາມລຳດັບຕໍ່ໆໄປ.

**ເລກລຳດັບ:** ໃຫ້ຂຽນເລກລຳດັບຂອງສະມາຊິກທີ່ຢູ່ເປັນປົກກະຕິໃນ**ຄົວເຮືອນ** 1, 2, 3, ...
ຂຽນລາຍຊື່ສະມາຊິກທີ່ຢູ່ເປັນປົກກະຕິໃນຄົວເຮືອນ ໃຫ້ຂຽນຊື່ຫົວໜ້າຄົວເຮືອນກ່ອນ ແລະ ເປັນລຳດັບແຕ່ຜູ້ໃຫຍ່ຫາຜູ້ນ້ອຍ.

**ຄຳຖາມ 1:** ທ່ານມີສາຍພົວພັນແນວໃດກັບຫົວໜ້າ**ຄົວເຮືອນ** ?
ໃຫ້ທ່ານຂຽນເລກລະຫັດຂອງສະມາຊິກແຕ່ລະຄົນທີ່ມີສາຍພົວພັນກັບຫົວໜ້າ **ຄົວເຮືອນ** ຊຶ່ງມີຄຳຕອບໄວ້ໃຫ້ທ່ານເລືອກຕາມຄວາມເໝາະສົມ.

**ຄຳຖາມ 2:** ເພດ ?
**ໃຫ້ທ່ານຂຽນລະຫັດ 1 ຖ້າແມ່ນເພດຊາຍ ແລະຂຽນລະຫັດ 2 ຖ້າແມ່ນເພດຍິງ.**

**ຄຳຖາມ3:** ປັດຈຸບັນທ່ານອາຍຸໄດ້ຈັກປີ ?
**ໃຫ້ຂຽນອາຍຸເຕັມ, ຖ້າອາຍຸຕ່ຳກວ່າ 1 ປີ ໃຫ້ຂຽນ "00"999**

**ຄຳຖາມ4:** ທ່ານ ຢູ່ເປັນປະຈຳ ຫລື ບໍ່ເປັນປະຈຳ?(ນິຍາມໃນປື້ມຄູ່ມື)

**ຄຳຖາມ5:** ອາຊີບຕົ້ນຕໍຂອງທ່ານແມ່ນຫຍັງ?ໝາຍເຖິງວິຊາອາຊີບ,ວິຊາສະເພາະຕ່າງໆໃນການທຳມາຫາກິນ:ຕົວຢ່າງ:ທ້າວ ພູພັດ ລາວເປັນພະນັກງານ ຢູ່ສູນສະຖິຕິແຫ່ງຊາດ,ເວລາເລີກການລາວຂາຍເຄື່ອງຊ່ວຍຄອບຄົວທຸກມື້ ພໍ ເຖິງລະດູການຜະລິດລາວໄປເຮັດນາ.ໝາຍຄວາມວ່າອາຊີບຕົ້ນຕໍຂອງລາວແມ່ນນັກວິຊາການສະຖິຕິ(ໃຫ້ທ່ານເຂົ້າໃຈວ່າເວລາທີ່ໄດ້ໃຊ້ຫລາຍກວ່າໝູ່ນັ້ນລະຄືອາຊີບຕົ້ນຕໍ)
ຂໍ້ຫ້າມ; ຫ້າມນັກເດີນສຳຫລວດຂຽນອາຊີບບໍ່ລະອຽດເຊັ່ນ;ຄຳວ່າ ພະນັກງານລ້າໆ

ຄຳຖາມ6: ສະຖານທີ່ເຮັດວຽກຂອງທ້າວພູພັດ ແມ່ນລະຫັດ 3=ຢູ່ຕ່າງເມືອງ.

ຄຳຖາມ7: ຖາມເຖິງການໄປເຮັດວຽກຢູ່ບ່ອນອື່ນຂອງສະມາຊິກໃນຄົວເຮືອນຜູ້ທີ່ໄປຫາວຽກເຮັດງານທຳ.

ຄຳຖາມ8: ຖາມເຖິງເວລາການອອກໄປເຮັດວຽກນອກຄັ້ງສຸດທ້າຍ?ບາງຄົນອາດຈະຫງວມາຢາມບ້ານຫລາຍເທື່ອຕໍ່ປີ.

**ຄຳຖາມ9:** ວຽກທີ່ໄດ້ເຮັດຢູ່ບ່ອນອື່ນຄັ້ງສຸດທ້າຍ?ບາງຄົນອາດຈະປ່ຽນວຽກໃໝ່ເຮັດໄປເລື້ອຍໆກໍ່ມີ.

ຄຳຖາມ10: ສະຖານທີ່ລາວໄປເຮັດວຽກມີ5ຄຳຕອບ .ໃຫ້ເລືອກເອົາຄຳຕອບດຽວຕອນໄປເຮັດວຽກຄັ້ງສຸດທ້າຍ.

**ຄຳຖາມ11:** ການຕິດຕໍ່ພົວພັນແມ່ນມີຫລາຍກໍລະນີເຊັ່ນ:ທາງຈົດໝາຍ,ທາງໂທລະສັບ,ສັ່ງຄວາມນຳໝູ່ເພື່ອນ ຫລື ຍາດຕິພີ່ນ້ອງຕ່າງໆ.

**ຄຳຖາມ12:** ຖາມເຖິງການຝາກເງິນມາບ້ານຂອງສະມາຊິກໃນຄົວເຮືອນທີ່ໄປເຮັດວຽກຫລາຍເດືອນ ຫລື ຫລາຍປີ ສົ່ງມາ 1 ເທື່ອກໍຖືວ່າໄດ້ສົ່ງ.

**ພາກທີ II: ແຮງງານ**

**III:1. ແຮງງານໃນໄລຍະ 7 ມື້ ຜ່ານມາ.**

ໃຫ້ຂຽນຄືນສະເພາະຊື່ຂອງບຸກຄົນຜູ້ທີ່ມີອາຍຸ 10 ປີ ຂຶ້ນໄປໃສ່ຊ່ອງນີ້ແລ້ວຈົດເລກນຳເບີຂອງສະມາຊິກຈາກພາກທີ I ຜູ້ທີ່ຢູ່ເປັນປົກກະຕິໃນຄົວເຮືອນ .

**ຄຳຖາມ 1 :** ໃນໄລຍະ 7 ມື້ ຜ່ານມາ ທ່ານໄດ້ເຮັດວຽກທີ່ກ່ຽວຂ້ອງກັບການກະສິກຳໃຫ້ຕົນເອງ ຫລື ເຮັດໃຫ້ຜູ້ອື່ນຢູ່ໃນຄົວເຮືອນຂອງຕົນເອງ?(ການປູກຝັງ ແລະ ການລ້ຽງສັດຕ່າງໆ...) ຖ້າໄດ້ເຮັດຕົວຢ່າງ:ຄອບຄົວນາງສົມພັດລາວລ້ຽງສັດປີກເຖິງແມ່ນວ່າໃນ7ມື້ລາວບໍ່ໄດ້ມີເວລາໄດ້ລ້ຽງທຸກມື້ກໍຕາມ , ໃຫ້ບັນທຶກລະຫັດ “1” ຖ້າບໍ່ໄດ້ເຮັດໃຫ້ບັນທຶກລະຫັດ “2”.

**ຄຳຖາມ 2 :** **ຖາມເຖິງການເຮັດວຽກພາຍໃນ7ມື້ທີຜ່ານມາຂອງບຸກຄົນໃນຄົວເຮືອນ** ?
-ການເຮັດວຽກໃຫ້ຄົວເຮືອນຕົນເອງ ,ທຸລະກິດຂອງຕົນເອງ ທີ່ບໍ່ກ່ຽວຂ້ອງກັບການກະສິກຳ.ຕົວຢ່າງ: ທ້າວ ສີວິໄຊ ຍາມພັກການລາວໄດ້ສ້ອມແປງເຄື່ອງຄອມພິວເຕີຢູ່ກັບເຮືອນຂອງລາວເອງ ບັນທຶກລະຫັດ “1”,ຖ້າບໍ່ໄດ້ເຮັດໃຫ້ບັນທຶກລະຫັດ “2”.

**ຄຳຖາມ** 3: ໃນ 7 ມື້ຜ່ານມາທ່ານໄດ້ໄປເຮັດວຽກຫຍັງໃຫ້ຄົນອື່ນບໍ?(ໝາຍເຖິງການເຮັດວຽກໃດນຶ່ງທີ່ມີຄ່າຈ້າງ ຫລື ບໍ່ມີຄ່າຈ້າງ) ທຸກວຽກທີ່ໄດ້ເຮັດ ຕົວຢ່າງ:ນາງ ພິງວິໄລ ຍາມເລີກການ ຫລື ຍາມພັກການລາວໄປຊ່ວຍວຽກພີ່ນ້ອງຢູ່ບໍລິສັດຄອມພິວເຕີແຫ່ງນຶ່ງ.ແມ່ນຖືວ່າລາວໄດ້ເຮັດໃຫ້ບັນທຶກລະຫັດ 1.ຖ້າບໍ່ໄດ້ເຮັດຂຽນລະຫັດ 2.

ຄຳຖາມ4 : ກວດຄຳຕອບໃນຊ່ອງ 1, 2 ແລະ 3, ຖ້າມີຊ່ອງໃດໜຶ່ງ ຖືກບັນທຶກລະຫັດຄຳຕອບ “1” ໃຫ້ບັນທຶກລະຫັດ “1” ໃສ່ຊ່ອງນີ້ ແລ້ວຂ້າມໄປຫາພາກ III 2, ຖ້າທັງ 3 ຊ່ອງ (1,2,3) ມີລະຫັດຄຳຕອບ “2” ໃຫ້ບັນທຶກລະຫັດ “2” ໃສ່ຊ່ອງນີ້ ແລ້ວໃຫ້ຖາມຊ່ອງ 5.

**ຄຳຖາມ 5:** ທ່ານມີວຽກເຮັດງານທຳແບບຖາວອນບໍ່, ເຖິງແມ່ນວ່າໃນ 7 ມື້ ຜ່ານມາ ບໍ່ໄດ້ເຮັດວຽກກໍຕາມ ?ຕົວຢ່າງ:ທ້າວ ທອງດີ ລາວເປັນນາຍຊ່າງກໍ່ສ້າງໃນເວລາໄປສຳພາດຖືກຊ່ວງລາວຫວ່າງງານພໍດີ,ກໍຖືວ່າລາວມີວຽກເຮັດງານທຳແບບຖາວອນ ໃຫ້ບັນທຶກລະຫັດ “1” ແລ້ວຂ້າມໄປພາກII. , ຖ້າບໍ່ມີວຽກເຮັດງານທຳແບບຖາວອນ ໃຫ້ບັນທຶກລະຫັດ “2” ຖາມຕໍ່ຄຳຖາມ6.

**ຄຳຖາມ 6:** ໃນໄລຍະ 7 ມື້ ຜ່ານມາ ທ່ານໄປໄດ້ຊອກຫາວຽກເຮັດງານທຳບໍ່ ?

ຖ້າໄດ້ຊອກແມ່ນໃຫ້ບັນທຶກລະຫັດ "1"ແລ້ວຖາມຕໍ່ພາກIII ແລະ ບັນທຶກລະຫັດ "2" ຖ້າບໍ່ໄດ້ໄປຊອກ.ຖາມຕໍ່ຄຳຖາມ7.

**ຄຳຖາມ 7:** ຍ້ອນເຫດຜົນອັນໃດທ່ານຈຶ່ງບໍ່ໄດ້ເຮັດວຽກ ໃນໄລຍະ 7 ມື້ ຜ່ານມາ ?

ໃນຊ່ອງນີ້ມີ 8 ຄຳຕອບໃຫ້ເລືອກ, ຈຶ່ງບັນທຶກລະຫັດຄຳຕອບຕາມຄວາມເໝາະສົມ ຊຶ່ງມີໄວ້ໃຫ້ເລືອກໃນແບບສອບຖາມ.

## II 2. ການເຮັດວຽກໃນໄລຍະ 7 ມື້ ຜ່ານມາ.

ໃຫ້ຂຽນຄືນຊື່ຂອງຜູ້ທີ່ມີອາຍຸ 10 ປີ ຂຶ້ນໄປໃສ່ຊ່ອງນີ້ພ້ອມດ້ວຍເລກລະຫັດແຕ່ລະບຸກຄົນ.

ເລກລຳດັບຂອງສະມາຊິກທີ່ຢູ່ເປັນປົກກະຕິໃນຄົວເຮືອນ ທີ່ມີອາຍຸ10ຂື້ນໄປທີ່ຢູ່ເປັນປົກກະຕິໃນຄົວເຮືອນ, ເລກລຳດັບຂອງຄົນໜຶ່ງ ບາງທີອາດຈະໄດ້ຂຽນຢູ່ຫລາຍແຖວ ຖ້າວ່າໄດ້ເຮັດຫລາຍວຽກ ໃນໄລຍະ 7 ມື້ ຜ່ານມາ.ຕົວຢ່າງ: ທ້າວ ສຸລິສັກ ລາວເຮັດວຽກຢູ່ສູນສະຖິຕິແຫ່ງຊາດ(ນັກສະຖິຕິ),ເວລາເລີກການລາວຂາຍເຄື່ອງຊ່ວຍຄອບຄົວ, ແລະ ວັນພັກລາວໄປສວນປູກຜັກ-ໝາກໄມ້ຕ່າງໆ...

**ຄຳຖາມ 1:** ໃນໄລຍະ 7 ມື້ ຜ່ານມາ ທ່ານໄດ້ເຮັດວຽກຈັກມື້ ?

ໃຫ້ຂຽນວຽກທີ່ລາວໄດ້ເຮັດແຕ່ລະວຽກໃນໄລຍະ 7 ມື້ ທີ່ຜ່ານມາ ຢ່າງລະອຽດ, ແຖວໜຶ່ງແມ່ນໃຊ້ສຳລັບຂຽນວຽກໜຶ່ງ, ຖ້າເຮັດຫລາຍວຽກຕ້ອງໄດ້ໃຊ້ຫລາຍແຖວ. *ຕົວຢ່າງ:* ທ້າວ ສຸລິສັກ, ເລກລຳດັບ 1, ໃນ 7 ມື້ ຜ່ານມາ ລາວໄດ້ໄປຫ້ອງການ, ຂາຍເຄື່ອງຊ່ວຍຄອບຄົວ, ໄປສວນ. ວິທີຈົດກ່າຍເຂົ້າລາຍລະອຽດວຽກທີ່ໄດ້ເຮັດ:

| ເລກທີບຸກຄົນ | ລະອຽດວຽກທີ່ໄດ້ເຮັດ | ຂະແໜງເສດຖະກິດ |
|---|---|---|
| 1 | ໄປເຮັດວຽກຢູ່ຫ້ອງການ(ສະຖິຕິ) | 01 |
| 1 | ຂາຍເຄື່ອງຊ່ວຍຄອບຄົວ | 07 |
| 1 | ລາວໄປປູກຜັກຢູ່ສວນ | 06 |

ສຳລັບລະຫັດຂະແໜງເສດຖະກິດ ນັກເດີນສຳຫລວດບໍ່ຕ້ອງຂຽນຫຍັງໃສ່, ຈະມາໃສ່ຢູ່ທີ່ ສູນສະຖິຕິແຫ່ງຊາດ.

**ຄຳຖາມ 2:** ໃນໄລຍະ 7 ມື້ ຜ່ານມາ ທ່ານໄດ້ເຮັດວຽກນີ້ຈັກມື້ ?

ໃຫ້ບັນທຶກຈຳນວນມື້ ທີ່ໄດ້ເຮັດໃນແຕ່ລະວຽກໃນໄລຍະ 7 ມື້ ທີ່ຜ່ານມາ.ຕົວຢ່າງ:ທ້າວ ສຸລິສັກ ລາວເຮັດວຽກ 7 ມື້ ເຕັມ,ແລະ ເຮົາຄວນຄຳນວນລະອຽດເປັນຊົ່ວໂມງໃນຄຳຖາມ3ດັ່ງນີ້:

**ຄຳຖາມ 3:** ໃນໄລຍະ 7 ມື້ ຜ່ານມາ ທ່ານໄດ້ເຮັດວຽກນີ້ຈັກຊົ່ວໂມງ ?

ໃຫ້ບັນທຶກຈຳນວນຊົ່ວໂມງທີ່ໄດ້ເຮັດແຕ່ລະວຽກ ໃນໄລຍະ 7 ມື້ ທີ່ຜ່ານມາ.ຕົວຢ່າງ:ທ້າວ ສຸລິສັກ ລາວເຮັດການປົກກະຕິມື້ລະ 8 ຊົ່ວໂມງຕໍ່ມື້,ອາທິດນີ້ງລາວເຂົ້າການ 5ມື້=40ຊົ່ວໂມງ,ຂາຍເຄື່ອງຊ່ວຍຄອບຄົວທຸກມື້ໆລະ4ຊົ່ວໂມງ=28ຊົ່ວໂມງ,ລາວໄປສວນປູກເຄື່ອງປູກຂອງຝັງ ວັນເສົາ ແລະ ວັນອາທິດ ມື້ລະ 4 ຊົ່ວໂມງ=8ຊົ່ວໂມງ.

ຄຳຖາມ4: ສະຖານທີ່ເຮັດວຽກຂອງແຕ່ລະຄົນທີ່ມີອາຍຸ 10 ປີຂຶ້ນໄປຕາມລຳດັບ,ເພື່ອຢາກຮູ້ວ່າການໄປເຮັດວຽກຂອງສະມາຊິກນັ້ນແມ່ນເຮັດວຽກຢູ່ບ້ານຂອງຕົນອງ ຫລື ວ່າຢູ່ບ້ານອື່ນ.ມີ 5 ຄຳຕອບໃຫ້ເລືອກ .

ຕົວຢ່າງ:ຈາກຄຳຖາມ1 ທ້າວ ສຸລິສັກ ລາວໄປເຮັດວຽກຢູ່ສູນສະຖິຕິແຫ່ງຊາດ ເມືອງລາວຢູ່ແມ່ນເມືອງຈັນທະບູລີ=2,ແຕ່ລາວໄປເຮັດວຽກຢູ່ເມືອງສີໂຄດຕະບອງ=3.

## III : ກິດຈະກຳກໍ່ສ້າງໃນ 12 ເດືອນຜ່ານມາ

ກ. ສຳຫລັບພາກນີ້ແມ່ນຈະຖາມເຖິງກິດຈະກຳການກໍ່ສ້າງຕ່າງໆທີ່ຄົວເຮືອນນີ້ໄດ້ດຳເນີນໃນໄລຍະ 1ປີຜ່ານມາ, ນັບທັງການກໍ່ສ້າງໃໝ່, ສ້ອມແປງ ແລະ ຂະຫຍາຍ,ຢາກຮູ້ເຖິງແຮງງານ, ຄ່າຈ້າງ ແລະມູນຄ່າການກໍ່ສ້າງ.(ຖ້າມີຂີດວົງອ້ອມເອົາເລກ 1,ຖ້າບໍ່ມີຂີດວົງອ້ອມເອົາເລກ 2 ແລ້ວຂ້າມໄປພາກ ຂ.

### ພາກການກໍ່ສ້າງໃໝ່ ຫລື ຂະຫຍາຍເຮືອນ

ຄຳຖາມ1: ໃນ 12 ເດືອນຜ່ານມາສະມາຊິກຢູ່ໃນຄົວເຮືອນຂອງທ່ານ ແລະ ກຳມະກອນຜູ້ອື່ນໆໄດ້ເຮັດວຽກຕົວຈິງທັງໝົດຈັກມື້?ໃນການກໍ່ສ້າງ ແລະ ຂະຫຍາຍເຮືອນໃໝ່.

ໃຫ້ກຳນົດເອົາພຽງ 12 ເດືອນຜ່ານມາ.ຕົວຢ່າງ:ທ້າວ ໄຊຊະນະ ໄດ້ປຸກເຮືອນແຕ່ປີ 2001 ຍັງບໍ່ທັນແລ້ວລາວຢຸດເຊົາ,ຮອດເດືອນ 1 ຕົ້ນປີ 2003 ລາວເລີ້ມຕົ້ນສືບຕໍ່ປຸກສ້າງກໍແມ່ນໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເອົາຈຳນວນມື້ ແລະ ຈຳນວນແຮງງານຕົວຈິງ.

ຄຳຖາມ2: ຄຳຖາມ2ນີ້ເພື່ອຊອກຮູ້ອັດຕາຄ່າຈ້າງແຮງງານຈັກກີບຕໍ່ຫົວຄົນ?ໃນແຕ່ລະທ້ອງຖິ່ນ

ຄຳຖາມ3: ໃນ 12 ເດືອນຜ່ານມາທ່ານໄດ້ໄຊ້ຈ່າຍເຂົ້າໃນການກໍ່ສ້າງທັງໝົດຫລາຍປານໃດ?(ບໍ່ນັບຄ່າຈ້າງ)ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳ

ພາດເທົ່ານັ້ນ.ເຖິງແມ່ນວ່າມູນຄ່າການກໍ່ສ້າງຈະຈ່າຍໄປໃນແຕ່ລະປີຜ່ານມາແລ້ວກໍ່ຕາມບໍ່ໃຫ້ຈົດເອົາ.

ຄຳຖາມ4: ໃນ 12 ເດືອນຜ່ານມາທ່ານໄດ້ໃຊ້ຈ່າຍຄ່າແຮງງານທັງໝົດຫລາຍປານໃດ?ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ. ເຖິງແມ່ນວ່າການໃຊ້ຈ່າຍຄ່າແຮງງານຜ່ານມາແຕ່ລະປີກໍຕາມບໍ່ໃຫ້ຈົດເອົາ.

ຄຳຖາມ5: ຖ້າທ່ານຫາກບໍ່ສາມາດແຍກຄ່າວັດສະດຸກໍ່ສ້າງ ແລະ ຄ່າແຮງງານໄດ້ ແມ່ນໃສ່ມູນຄ່າລວມກັນເລີຍ. ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດ.

ພາກການສ້ອມແປງທີ່ພັກອາໃສ

ຄຳຖາມ6: ໃນ 12 ເດືອນຜ່ານມາສະມາຊິກຢູ່ໃນຄົວເຮືອນຂອງທ່ານ ແລະ ກຳມະກອນຜູ້ອື່ນໆໄດ້ເຮັດວຽກຕົວຈິງທັງໝົດຈັກມື້?ໃນການສ້ອມແປງທີ່ຢູ່ອາໃສ,ເວລາທ່ານໄປສຳພາດໃຫ້ຈົດນັບເອົາຈຳນວນມື້ ແລະ ຈຳນວນແຮງງານຕົວຈິງ.

ຄຳຖາມ7: ຄຳຖາມ2ນີ້ເພື່ອຊອກຮູ້ອັດຕາຄ່າຈ້າງແຮງງານຈັກກີບຕໍ່ຫົວຄົນ?ໃນແຕ່ລະທ້ອງຖິ່ນ

ຄຳຖາມ8: ໃນ 12 ເດືອນຜ່ານມາທ່ານໄດ້ໃຊ້ຈ່າຍເຂົ້າໃນການກໍ່ສ້າງທັງໝົດຫລາຍປານໃດ?(ບໍ່ນັບຄ່າຈ້າງ)ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ.ເຖິງແມ່ນວ່າມູນຄ່າການກໍ່ສ້າງຈະຈ່າຍໄປໃນແຕ່ລະປີຜ່ານມາແລ້ວກໍ່ຕາມບໍ່ໃຫ້ຈົດເອົາ.

ຄຳຖາມ9: ໃນ 12 ເດືອນຜ່ານມາທ່ານໄດ້ໃຊ້ຈ່າຍຄ່າແຮງງານທັງໝົດຫລາຍປານໃດ?ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ. ເຖິງແມ່ນວ່າການໃຊ້ຈ່າຍຄ່າແຮງງານຜ່ານມາແຕ່ລະປີກໍຕາມບໍ່ໃຫ້ຈົດເອົາ.

ຄຳຖາມ10: ຖ້າທ່ານຫາກບໍ່ສາມາດແຍກຄ່າວັດສະດຸກໍ່ສ້າງ ແລະ ຄ່າແຮງງານໄດ້ ແມ່ນໃສ່ມູນຄ່າລວມກັນເລີຍ. ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດ.

ຂ. ສຳຫລັບພາກນີ້ແມ່ນຈະຖາມເຖິງກິດຈະກຳການກໍ່ສ້າງສຳລັບການກະສິກຳ ຫລື ທຸລະກິດໃໝ່ ຫລື ຂະຫຍາຍ-ສ້ອມແປງອາຄານດັ່ງກ່າວ ໃນໄລຍະ 1ປີຜ່ານມາ, ນັບທັງການກໍ່ສ້າງໃໝ່, ສ້ອມແປງ ແລະ ຂະຫຍາຍ,ຢາກຮູ້ເຖິງແຮງງານ, ຄ່າຈ້າງ ແລະມູນຄ່າການກໍ່ສ້າງ.(ຖ້າມີຂີດວົງອ້ອມ

ເອົາເລກ 1,ຖ້າບໍ່ມີຂີດວົງອ້ອມເອົາເລກ 2 ແລ້ວຂ້າມໄປພາກ IV. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດ.

## ພາກການກໍ່ສ້າງໃໝ່ ຫລື ຂະຫຍາຍອາຄານທຸລະກິດ ,ອາຄານສຳລັບການກະສິກຳ.

ຄຳຖາມ1: ໃນ 12 ເດືອນຜ່ານມາສະມາຊິກຢູ່ໃນຄົວເຮືອນຂອງທ່ານ ແລະ ກຳມະກອນຜູ້ອື່ນໆໄດ້ເຮັດວຽກຕົວຈິງທັງໝົດຈັກມື້,ຈັກຄົນ?

ຄຳຖາມ2: ຄຳຖາມ2ນີ້ເພື່ອຊອກຮູ້ອັດຕາຄ່າຈ້າງແຮງງານຈັກກີບຕໍ່ຫົວຄົນ?ໃນແຕ່ລະທ້ອງຖິ່ນ

ຄຳຖາມ3: ໃນ 12 ເດືອນຜ່ານມາທ່ານໄດ້ໄຊ້ຈ່າຍເຂົ້າໃນການກໍ່ສ້າງທັງໝົດຫລາຍປານໃດ?(ບໍ່ນັບຄ່າຈ້າງ)ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ.ເຖິງແມ່ນວ່າມູນຄ່າການກໍ່ສ້າງຈະຈ່າຍໄປໃນແຕ່ລະປີຜ່ານມາແລ້ວກໍຕາມບໍ່ໃຫ້ຈົດເອົາ.

ຄຳຖາມ4: ໃນ 12 ເດືອນຜ່ານມາທ່ານໄດ້ໄຊ້ຈ່າຍຄ່າແຮງງານທັງໝົດຫລາຍປານໃດ?ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ. ເຖິງແມ່ນວ່າການໃຊ້ຈ່າຍຄ່າແຮງງານຜ່ານມາແຕ່ລະປີກໍຕາມບໍ່ໃຫ້ຈົດເອົາ.

ຄຳຖາມ5: ຖ້າທ່ານຫາກບໍ່ສາມາດແຍກຄ່າວັດສະດຸກໍ່ສ້າງ ແລະ ຄ່າແຮງງານໄດ້ແມ່ນໃສ່ມູນຄ່າລວມກັນເລີຍ. ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດ.

## ພາກການສ້ອມແປງອາຄານກະສິກຳ ຫລື ອາຄານທຸລະກິດ.

ຄຳຖາມ6: ໃນ 12 ເດືອນຜ່ານມາສະມາຊິກຢູ່ໃນຄົວເຮືອນຂອງທ່ານ ແລະ ກຳມະກອນຜູ້ອື່ນໆໄດ້ເຮັດວຽກຕົວຈິງທັງໝົດຈັກມື້,ຈັກຄົນ?

ຄຳຖາມ7: ຄຳຖາມ2ນີ້ເພື່ອຊອກຮູ້ອັດຕາຄ່າຈ້າງແຮງງານຈັກກີບຕໍ່ຫົວຄົນ?ໃນແຕ່ລະທ້ອງຖິ່ນ

ຄຳຖາມ8: ໃນ 12 ເດືອນຜ່ານມາທ່ານໄດ້ໄຊ້ຈ່າຍເຂົ້າໃນການກໍ່ສ້າງທັງໝົດຫລາຍປານໃດ?(ບໍ່ນັບຄ່າຈ້າງ)ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ.ເຖິງແມ່ນວ່າມູນຄ່າການກໍ່ສ້າງຈະຈ່າຍໄປໃນແຕ່ລະປີຜ່ານມາແລ້ວກໍຕາມບໍ່ໃຫ້ຈົດເອົາ.

ຄຳຖາມ9: ໃນ 12 ເດືອນຜ່ານມາທ່ານໄດ້ໄຊ້ຈ່າຍຄ່າແຮງງານທັງໝົດຫລາຍປານໃດ?ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບ

ເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ. ເຖິງແມ່ນວ່າການໃຊ້ຈ່າຍຄ່າແຮງງານຜ່ານມາແຕ່ລະປີກໍຕາມບໍ່ໃຫ້ຈົດເອົາ.

ຄຳຖາມ10: ຖ້າທ່ານຫາກບໍ່ສາມາດແຍກຄ່າວັດສະດຸກໍ່ສ້າງ ແລະ ຄ່າແຮງງານໄດ້ແມ່ນໃສ່ມູນຄ່າລວມກັນເລີຍ. ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດ.

## IV ທຸລະກິດຂອງຄົວເຮືອນ

**ຫົວໜ່ວຍທຸລະກິດນີ້ແມ່ນການດຳເນີນທຸລະກິດຕ່າງໆ(ໝາຍເຖິງການຊື້-ການຄ້າຂາຍ,ການບໍລິການ,ການຜະລິດຕ່າງໆທີ່ບໍ່ກ່ຽວຂ້ອງກັບການກຳສິກຳປູກຝັງ-ລ້ຽງສັດ-ການປະມົງ ແລະ ປ່າໄມ້)**

ຄຳຖາມ 1. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງ ທ່ານ ໄດ້ດຳເນີນທຸລະກິດ ໃດໜຶ່ງບໍ ທີ່ບໍ່ ແມ່ນທຸລະກິດກະສິກຳ ?

ໝາຍເຖິງທຸລະກິດທີ່ບໍ່ແມ່ນທຸລະກິດກະສິກຳ ;ເຊັ່ນບໍລິສັດກໍ່ສ້າງ-ສ້ອມແປງຕ່າງໆການຄ້າຂາຍເຫລົ່ານີ້ເປັນຕົ້ນ ການຂຽນຄຳຕອບແມ່ນໃຫ້ຂີດວົງອ້ອມເອົາລເກ 1 ຖ້າໄດ້ເຮັດ, ເລກ 2 ຖ້າບໍ່ໄດ້ເຮັດ ແລ້ວຂ້າມໄປພາກVI.

ຄຳຖາມ 2. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງ ທ່ານ ໄດ້ດຳເນີນທຸລະກິດ ຫຍັງແດ່ ? ນີ້ໝາຍເຖິງທຸລະກິດທີ່ກຳລັງເຮັດຢູ່ເຊິ່ງບໍ່ແມ່ນທຸລະກິດ ກະສິກຳ, ໃຫ້ຂຽນຊື່ຂອງທຸລະກິດທີ່ເຮັດຢູ່ນັ້ນ ຕົວຢ່າງ : (ຖ້າຫາກມີຫລາຍຫົວໜ່ວຍທຸລະກິດ)

| ເລກລຳດັບ | ຊື່ຫົວໜ່ວຍທຸລະກິດ |
|---|---|
| 1. | ບໍລິສັດກໍ່ສ້າງ |
| 2. | ໂຮງງານນ້ຳດື່ມບໍລິສຸດ |
| 3. | ຂາຍເຄື່ອງຫຍ່ອຍຢູ່ກັບເຮືອນ |
| 4. | ຕ່ຳຫູກທໍໄໝ |

ນອກຈາກນີ້ຍັງມີນັ່ງຂາຍຜັກ-ຂາຍປູປາ-(ການຂາຍຜັກ-ຂາຍປູປາແມ່ນສະເພາະຊາວຄ້າຂາຍທີ່ບໍ່ໄດ້ເອົາຜະລິດຕະພັນຂອງຕົນເອງມາຂາຍ,ການລັດຊື້ຂາຍຕໍ່ມີກັນ) ຂາຍເຄື່ອງຂອງຢູ່ຕະຫລາດ,ຍູ້ລໍ້ຮັບຊື້ ຫລື ຂາຍເສດແກ້ວເສດເຫລັກຕ່າງໆ...(ລະຫັດຂະແໜງເສດຖະກິດສູນສະຖິຕິແຫ່ງຊາດໃສ່)

ຄຳຖາມ 3. ປັດຈຸບັນນີ້ສະມາຊິກໃນຄົວເຮືອນຂອງທ່ານທີ່ຍັງດຳເນີນທຸລະກິດເປັນປົກກະຕິມີຈັກຄົນ?ໃຫ້ຂຽນລົງໃສ່ຊ່ອງພຽງແຕ່ຕົວເລກ.

ຄຳຖາມ4: ໃນຄົວເຮືອນຂອງທ່ານໄດ້ເບີກເງິນໃຫ້ໃຜຜູ້ນຶ່ງຫລື ຄ່າແຮງງານຈາກທຸລະກິດໃດນຶ່ງໃຫ້ສະມາຊິກໃນຄົວເຮືອນຕົນເອງບໍ?ຕົວຢ່າງ:ມີບໍລິສັດກໍ່ສ້າງແຫ່ງນຶ່ງມີພໍ່ເຖົ້າເປັນອຳນວຍການ,ລູກເຂີຍ,ລູກສາວ ຫລື ຫລານຕ່າງໆທີ່ດຳລົງຊີວິດຮ່ວມກັນໃນຄົວເຮືອນນັ້ນໄດ້ເຮັດວຽກຕາມການມອບໝາຍຕາມໜ້າວຽກມີເງິນເດືອນກິນຄືກັນກັບກຳມະກອນຜູ້ອື່ນໆ.ຖ້າມີຂຽນເລກ 1 ລົງ,ຖ້າບໍ່ມີຂຽນເລກ 2.

ຄຳຖາມ5: ປັດຈຸບັນນີ້ມີຈຳນວນກຳມະກອນທັງໝົດຫລາຍປານໃດ?ທີ່ເຮັດວຽກເຫລົ່ານີ້,ບໍ່ນັບສະມາຊິກໃນຄົວເຮືອນ.(ຈ້າງແຮງງານນອກ)

ຄຳຖາມ6: ໃນ 1 ເດືອນຜ່ານມາໄດ້ເບີກເງິນເດືອນໃຫ້ພະນັກນັກງານກຳມະກອນຫລາຍປານໃດ,ນັບທັງສະມາຊິກໃນຄົວເຮືອນທີ່ມີອັດຕາເງິນເດືອນ(ຖ້າເປັນວັດຖຸ ຫລື ຂອງຂວັນຕ່າງໆໃຫ້ຕີລາຄາເປັນເງິນສົດ,ຖ້າເປັນເງິນຕຣາກໍໃຫ້ປ່ຽນເປັນເງິນກີບ).

ຄຳຖາມ7: ໃນ 1 ເດືອນຜ່ານມາການເບີກຈ່າຍເງິນເດືອນ,ເງິນແຮງງານຕ່າງໆໂດຍການສະເລ່ຍຕໍ່ຫົວຄົນ,ຜູ້ນຶ່ງໄດ້ຮັບຫລາຍປານໃດ?(ໂດຍການຄິດໄລ່ຕໍ່ເນື່ອງມາຈາກຄຳຖາມຊ່ອງ6 ເອົາຈຳນວນເງິນເດືອນທີ່ໄດ້ເບີກທັງໝົດມາຫານໃຫ້ຈຳນວນລູກຈ້າງທັງໝົດ)

ຄຳຖາມ8: ໃນ 1 ເດືອນຜ່ານມາລວມຍອດລາຍຮັບຈາກທຸລະກິດຂອງທ່ານແຕ່ລະຫົວໜ່ວຍມີລາຍຮັບຫລາຍປານໃດ?ໃຫ້ແຍກອອກຈາກກັນຖ້າມີຫລາຍຫົວໜ່ວຍທຸລະກິດ. ຕົວຢ່າງ:ຄອບຄົວທ່ານບຸນລວຍມີ 2 ຫົວໜ່ວຍທຸລະກິດ.ເມຍຂອງລາວຂາຍເຄື່ອງອຸປະໂພກ-ບໍລິໂພກຢູ່ຕະຫລາດ1ເດືອນຜ່ານມາຂາຍໄດ້ 10.000.000 ກີບ,ສ່ວນທ້າວບຸນລວຍ ແລ່ນລົດໂດຍສານໄດ້ 5.000.000 ກີບ.

ຄຳຖາມ9: ໂດຍສະເລ່ຍແລ້ວໃນແຕ່ລະເດືອນທ່ານສາມາດມີລາຍໄດ້ຈາກແຕ່ລະຫົວໜ່ວຍທຸລະກິດຫລາຍປານໃດ?(ໂດຍເອົາລາຍຮັບໝົດປີຂອງຫົວໜ່ວຍທຸລະກິດໃຜລາວມາຫານໃຫ້12ເດືອນ)

ຄຳຖາມ10: ສະຖານທີ່ຕັ້ງການດຳເນີນທຸລະກິດຂອງທ່ານຢູ່ໃສ?ມີ 5 ຄຳຕອບໃຫ້ເລືອກຕົວຢ່າງ:ຄອບຄົວທ່ານບຸນລວຍເມຍຂອງລາວຂາຍເຄື່ອງຢູ່ຕະຫລາດໝາຍເລກ 2,ສ່ວນທ່ານບຸນລວຍເອງແມ່ນ ໝາຍເລກ5ແລ່ນລົດໂດຍສານສາຍເໜືອໃສ່ຊ່ອງຫົວໜ່ວຍທຸລະກິດນັ້ນ.(3 ໝາຍເຖິງການຫາບຂາຍ,ຍູ້ລໍ້ຂາຍ,ໃສ່ລົດຂາຍ ການຂາຍແບບເຄື່ອນທີ່..(4 ໝາຍເຖິງການຂາຍເປັນຊ່ວງເປັນເວລາໃນງານບຸນຕ່າງໆ ຫລື ການຂາຍແບບເຊົ່າສະຖານທີ່ຕ່າງໆເຊັ່ນ:ຊາວຄ້າຂາຍຕາມແຄມຂອງ ເຫລົ່ານີ້ເປັນຕົ້ນ.ກໍລະນີເຮືອນຢູ່ກັບຕະຫລາດໃຫ້ໃສ່ລະຫັດ 1 ຢູ່ກັບເຮືອນ).

## V. ການກະສິກຳ.

**ຄຳຖາມນີ້**ຖາມເຈາະຈົ້ມສະເພາະແຕ່ດິນປູກຝັງທີ່ເປັນກຳມະສິດຂອງຕົນເອງທີ່ໃຜຜູ້ນຶ່ງຂອງສະມາຊິກໃນຄົວເຮືອນໄດ້ທຳການຜະລິດກະສິກຳໃດນຶ່ງທີ່ມີເນື້ອທີ່ແຕ່ 0.02ເຮັກຕາຂຶ້ນໄປ ຫລື ເທົ່າກັບ 200 ຕາແມັດມົນທົນ)ໃຫ້ຂີດວົງອ້ອມເອົາ 1 ຖ້າໄດ້ເຮັດ ແລະ ຂີດວົງອ້ອມເອົາ 2 ຖ້າບໍ່ໄດ້ເຮັດແລ້ວຂ້າມໄປຫາ VI.2.

### V.1. ການປູກພືດ ແລະ ການເກັບກ່ຽວຜົນຜະລິດໃນ 12 ເດືອນຜ່ານມາ.

**ໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ທຳການປູກພືດຫຍັງແດ່?**

ຄຳຖາມ1: ໃຫ້ບັນທຶກລະຫັດຂອງພືດໝົດທຸກຊະນິດພືດທີ່ຄົວເຮືອນຂອງທ່ານໄດ້ທຳການປູກຝັງລົງໃສ່ແຕ່ລະແຖວ,ເຖິງວ່າຈະມີພືດຫລາຍຊະນິດປູກປະປົນກັນກໍຕາມ.(ໃຫ້ຖາມຄຳຖາມ 2ກ່ອນເພື່ອຈະໄດ້ລາຍຊື່ຂອງພືດຈາກນັ້ນຈຶ່ງໃສ່ລະຫັດຂອງພືດ)

ຄຳຖາມ2: ຂຽນລາຍຊື່ຂອງພືດທີ່ໄດ້ປູກແຕ່ລະຢ່າງລົງເປັນແຖວ

ຕົວຢ່າງ :

| ເລກລະຫັດຂອງພືດ | ຊື່ຂອງພືດທີ່ໄດ້ປູກ |
|---|---|
| 1 | ເຂົ້າໜຽວ |
| 2 | ເຂົ້າຈ້າວ |
| 38 | ໝາກຫຸ່ງ |
| 69... | ຜັກສະຫລັດ... |

ຄຳຖາມ3: ພືດທີ່ໄດ້ປູກຢູ່ໃນຄົວເຮືອນຂອງທ່ານແມ່ນເພື່ອຈຸດປະສົງຫຍັງ?ມີ 3 ຄຳຕອບໃຫ້ເລືອກໃນປຶ້ມແບບສອບຖາມ,ໃຫ້ເລືອກເອົາ 1 ຄຳຕອບທີ່ເໝາະສົມແລ້ວຂຽນຕົວເລກນັ້ນລົງໃສ່ຕາມແຕ່ລະແຖວ.

ຄຳຖາມ4: ຖ້າຕອບລະຫັດ=3 ເປັນລະຫັດການຊົມໃຊ້ແດ່ຂາຍນຳ ແມ່ນໃຫ້ຄິດໄລ່ອັດຕາສ່ວນຂອງການຊົມໃຊ້ເປັນເປີເຊັນ.

ຄຳຖາມ5: ໝາກຜົນຂອງຜົນຜະລິດກໍຄືການເກັບກ່ຽວທີ່ໄດ້ຮັບໄລຍະ 12 ເດືອນຜ່ານມາ ຕົວຢ່າງ:ປະລິມານການຄາດຄະເນ ຫລື ຕົວຈິງ,ຫ້ອງຫົວໜ່ວຍພະຍາຍາມໃຫ້ຄິດໄລ່ເປັນກິໂລກຣາມ ຫລື ເປັນໂຕນ.ກໍລະນີບາງຈຳພວກພືດທີ່ຂາຍບໍ່ສາມາດເກັບກຳເປັນຫົວໜ່ວຍໄດ້ກໍໃຫ້ເອົາລາຄາລວມຈາກການຂາຍຂອງພືດຊະນິດນັ້ນ.

ຄຳຖາມ6: ກໍລະນີໄດ້ຂາຍ ຫລື ແລກປ່ຽນໃນ 12 ເດືອນຜ່ານມາ,ການຂາຍ ຫລື ການແລກປ່ຽນມີຈຳນວນເທົ່າໃດ ແລະ ມູນຄ່າຂອງພືດເຫລົ່ານັ້ນຄິດເປັນເງິນຈັກກີບ?ຖ້າບໍ່ໄດ້ຂາຍ ຫລື ແລກປ່ຽນໃຫ້ຂຽນ ເລກ 0 ໃສ່.ຕົວຢ່າງ: ເອົາເຂົ້າຈ້າວ 5 ກິໂລແລກປ່ຽນກັບໄກ່ 1 ໂຕມີມູນຄ່າ25.000ກີບ.

## V.2. ການປະມົງ

ຄຳຖາມ 1. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ລ້ຽງປາ ຫລື ຫາປາຈາກທຳມະຊາດບໍ ? : ຂີດວົງອ້ອມເອົາຄຳຕອບທີ່ຖືກຕ້ອງ
1 =ໄດ້ລ້ຽງ/ໄດ້ຫາ; 2 = ບໍ່ໄດ້ລ້ຽງ/ບໍ່ໄດ້ຫາ ແລ້ວຂ້າມໄປຖາມພາກV.3.

ຄຳຖາມ 2. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ມີລາຍໄດ້ຈາກການຂາຍ ຫລື ການແລກປ່ຽນຈາກຜລິດຕະພັນປາບໍ?( 1.ຈາກປາທຳມະຊາດຈັກກີບ;2.ຈາກປາລ້ຽງເອງຈັກກີບ?,ຖ້າບໍ່ມີໃຫ້ຂຽນ 0).

ຄຳຖາມ3: ການນຳປາຈາກທຳມະຊາດ ແລະ ປາລ້ຽງ ມາເປັນອາຫານໃນຄົວເຮືອນຂອງທ່ານຕາມປົກກະຕິປາຈາກທຳມະຊາດ ແລະ ປາລ້ຽງເອງອາທິດລະຈັກກິໂລ? ໃຫ້ຂຽນລົງພຽງແຕ່ຕົວເລກ.

## V.3.ການປ່າໄມ້

ຄຳຖາມ 1. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ນຳເອົາໄມ້ຈາກປ່າແຫ່ງອື່ນໆ ຫລື ຈາກປ່າຂອງຕົນເອງມານຳໃຊ້ເຂົ້າໃນວຽກງານໃດໜຶ່ງບໍ?ຕົວຢ່າງ:ການຈັກສານ,ການລ້ອມຮົ້ວ,ເຮັດວົງກົບ-ບານປະຕູ...
1 = ໄດ້ເອົາ, 2 = ບໍ່ໄດ້ເອົາ ແລ້ວໄປ ຖາມຂໍ້4.

ຄຳຖາມ2 . ໃນຄົວເຮືອນຂອງທ່ານໄດ້ເກັບຜລິດຕະພັນຈາກປ່າມາເພື່ອຊົມໃຊ້ ໃນ 1 ເດືອນມີມູນຄ່າຫລາຍປານໃດ?
ເຊັ່ນ : ໄມ້ທ່ອນ,ໄມ້ຟືນ/ຖ່ານດັງໄຟ,ໄມ້ໄຜ່,ໄມ້ປຸກສ້າງ,ໄມ້ແບບ,ໄມ້ຫລັກຮົ້ວ,ປະເພດໜໍ່ໄມ້ ,ໜໍ່ຫວາຍ,ໜໍ່ແຍ້ຕ່າງໆ ແລະ ຜັກທຳມະຊາດອື່ນໆທີ່ນຳມາຈາກປ່າ.ໃຫ້ຂຽນແຕ່ຈຳນວນຕົວເລກໃສ່ເປັນເງິນກີບ.

**<u>ລະຫັດ ແລະ ລາຍການປ່າໄມ້ຕ່າງໆ☺ເພື່ອການຊົມໃຊ້:</u>**

| ລະຫັດ | ລາຍການ | ຄຳອະທິບາຍ | ຕົວຢ່າງ ແລະ ຈຸດປະສົງການນຳໄຊ້ |
|---|---|---|---|
| 135 | ປະເພດ ໜໍ່ | ໜໍ່ໄມ້ທຸກຊະນິດ | ໜໍ່ແຍ້,ໜໍ່ຫວາຍ,ໜໍ່ບຸ່ນ,ໜໍ່ພ້າວ,ໜໍ່ຕາວ... |
| 1351 | ຜັກອື່ນໆຈາກປ່າ | ຜັກປ່າທຸກຊະນິດ | ຜັກຕິ້ວ,ສະເມັກ,ເຫັດ,ໝາກແຄນ,ໝາກໝາດ... |
| 1352 | ອື່ນໆຈາກປ່າໄມ້ | ເຄື່ອງປ່າຂອງດົງ | ຄັ່ງ,ຂີ້ຊີ,ຫວາຍ,ຢາພື້ນເມືອງ.. |
| 199 | ໄມ້ຟືນ/ຖ່ານດັງໄຟ | | |
| 1991 | ໄມ້ທ່ອນ | ສາມາດນຳມາແປຮູບ | ໄມ້ວົງກົບ,ບານປະຕູ ຫລື ເຟີເນີເຈີຕ່າງໆ... |
| 1992 | ໄມ້ປ່ອງ | ໄມ້ໄຜ່ທຸກຊະນິດ | ການຈັກສານ ແລະ ເຮັດຮາວຮົ້ວຕ່າງໆ...(ຂຶ້ນກັບຈຸດປະສົງນຳໄຊ້) |
| 1993 | ໄມ້ປຸກສ້າງ | ໄມ້ກົມນ້ອຍ | ໄມ້ເສົາເຮືອນ,ໄມ້ຄ້ຳແບບຕ່າງໆ... |
| 1994 | ໄມ້ຫລັກຮົ້ວ | ໄມ້ໄຜ່ ຫລື ໄມ້ກົມນ້ອຍ | ຫລັກຮົ້ວອ້ອມບ້ານ ຫລື ອອ້ມສວນ... |

ຄຳຖາມ3 . ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ຂາຍ ຫລື ແລກປ່ຽນຜະລິດຕະພັນຈາກປ່າແຫ່ງອື່ນໆ ຫລື ຈາກປ່າໄມ້ຂອງຕົນເອງຫລາຍປານໃດ?. ເຊັ່ນ : ໄມ້ທ່ອນ,ໄມ້ຟືນ/ຖ່ານດັງໄຟ,ໄມ້ໄຜ່,ໄມ້ປຸກສ້າງ,ໄມ້ແບບ,ໄມ້ຫລັກຮົ້ວ,ປະເພດໜໍ່ ແລະ ຜັກທຳມະຊາດອື່ນໆທີ່ນຳມາຈາກປ່າ.ໃຫ້ຂຽນແຕ່ຈຳນວນຕົວເລກເປັນເງິນກີບໃສ່ .

**<u>ລະຫັດ ແລະ ລາຍການປ່າໄມ້ຕ່າງໆ⊗ເພື່ອການຂາຍ ແລະ ແລກປ່ຽນ:</u>**

| ລະຫັດ | ລາຍການ | ຄຳອະທິບາຍ | ຕົວຢ່າງ ແລະ ຈຸດປະສົງການນຳໃຊ້ |
|---|---|---|---|
| 408 | ປະເພດ ໜໍ່ | ໜໍ່ໄມ້ທຸກຊະນິດ | ໜໍ່ແຍ້,ໜໍ່ຫວາຍ,ໜໍ່ບຸ່ນ,ໜໍ່ພ້າວ,ໜໍ່ຕາວ... |
| 4081 | ຜັກອື່ນໆຈາກປ່າ | ຜັກປ່າທຸກຊະນິດ | ຜັກຕິ້ວ,ສະເມັກ,ເຫັດ,ໝາກແຄນ,ໝາກໝາດ... |
| 4082 | ອື່ນໆຈາກປ່າໄມ້ | ເຄື່ອງປ່າຂອງດົງ | ຄັ່ງ,ຂີ້ຊີ,ຫວາຍ,ຢາພື້ນເມືອງ... |
| 418 | ໄມ້ຟືນ/ຖ່ານດັງໄຟ | | |
| 4181 | ໄມ້ທ່ອນ | ສາມາດນຳມາແປຮູບ | ໄມ້ວົງກົບ,ບານປະຕູ ຫລື ເຟີເນີເຈີຕ່າງໆ... |
| 4182 | ໄມ້ປ່ອງ | ໄມ້ໄຜ່ທຸກຊະນິດ | ການຈັກສານ ແລະ ເຮັດຮາວຮົ້ວຕ່າງໆ...(ຂື້ນກັບຈຸດປະສົງນຳໃຊ້) |
| 4183 | ໄມ້ປຸກສ້າງ | ໄມ້ກົມນ້ອຍ | ໄມ້ເສົາເຮືອນ,ໄມ້ຄ້ຳແບບຕ່າງໆ... |
| 4184 | ໄມ້ຫລັກຮົ້ວ | ໄມ້ໄຜ່ ຫລື ໄມ້ກົມນ້ອຍ | ຫລັກຮົ້ວອ້ອມບ້ານ ຫລື ອອ້ມສວນ... |

ຄຳຖາມ 4. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານມີໃຜຜູ້ນຶ່ງໄດ້ປູກຕົ້ນໄມ້ທີ່ສາມາດນຳໃຊ້ເຂົ້າໃນວຽກງານການອຸດສະຫະກຳບໍ?ເຊັ່ນ:ໄມ້ສັກ,ໄມ້ວິກ,ໄມ້ດູ່...

1=ໄດ້ປູກ 2=-ບໍ່ໄດ້ປູກ ຂ້າມໄປຂໍ້6

ຄຳຖາມ5. ຖ້າໄດ້ປູກຈັກຕົ້ນ?(ລວມທັງປູກລວມໝູ່ ແລະ ປູກໃຫ້ຄົວເຮືອນຕົນເອງ)

ຄຳຖາມ 6. ໃນ12ເດືອນຜ່ານມາຄົວເຮືອນຂອງທ່ານມີໃຜຜູ້ນຶ່ງໄດ້ປູກຕົ້ນໄມ້ກິນໝາກບໍ? 1=ໄດ້ປູກ 2=-ບໍ່ໄດ້ປູກ ຂ້າມໄປຂໍ້V.4

ຄຳຖາມ7: ຖ້າໄດ້ປູກຈັກຕົ້ນ? (ລວມທັງປູກລວມໝູ່ ແລະ ປູກໃຫ້ຄົວເຮືອນຕົນເອງ)

## V.4 ການລ້ຽງສັດ

ໃນ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ລ້ຽງ ຫລື ຄອບຄອງສັດຊະນິດໃດນຶ່ງບໍ?

ໃຫ້ຂີດວົງອ້ອມເອົາ 1=ໄດ້ລ້ຽງ 2=ບໍ່ໄດ້ລ້ຽງ ຖາມພາກVI.5.

ຄຳຖາມ 1. ປັດຈຸບັນຄົວເຮືອນຂອງທ່ານລ້ຽງສັດປະເພດນີ້ ຈັກໂຕ ?ນັບທັງໂຕໃຫຍ່ແລະນ້ອຍເຊັ່ນ : ງົວ, ຄວາຍ, ໝູລາດ, ໝູພັນ, ແບ້, ແກະ, ຊ້າງ, ມ້າ, ສັດອື່ນ ໆ.(ແຕ່ລະແຖວຖ້າບໍ່ໄດ້ລ້ຽງໃຫ້ຂຽນ 0)

ຄຳຖາມ 2. ສັດລ້ຽງເຫລົ່ານີ້ມີມູນຄ່າຫຼາຍປານໃດ ?ລວມແຕ່ລະປະເພດ(ລາຄາໃນປັດຈຸບັນ)

ຕົວຢ່າງ :

| ລ/ດ | ຊື່ສັດລ້ຽງ | ຄຳຖາມ 2 |
|---|---|---|
| 1. | ງົວ | 5.500.000 ກີບ |

ຄຳຖາມ3: ໃນ 12 ເດືອນຜ່ານມາທ່ານມີສັດລ້ຽງເປັນຂອງຕົນເອງແຕ່ລະຊະນິດຈັກໂຕ?.(ແຕ່ລະແຖວຖ້າບໍ່ໄດ້ລ້ຽງໃຫ້ຂຽນ 0)

| ລ/ດ | ຊື່ສັດລ້ຽງ | ຄຳຖາມ1 | ຄຳຖາມ3 |
|---|---|---|---|
| 1. | ງົວ | 20 | 10 |

ຄຳຖາມ4. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ ຂາຍສັດລ້ຽງແຕ່ລະຊະນິດຈັກໂຕ ? .(ແຕ່ລະແຖວຖ້າບໍ່ໄດ້ຂາຍໃຫ້ຂຽນ 0)

ຕົວຢ່າງ:

| ລ/ດ | ຊື່ສັດລ້ຽງ | ຄຳຖາມ 4 |
|---|---|---|
| 1 | ງົວ | 2 ໂຕ |

ຄຳຖາມ5. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ຂາຍສັດລ້ຽງແຕ່ລະຊະນິດ ທັງໝົດມູນຄ່າເທົ່າໃດ ?

ຕົວຢ່າງ:

| ລ/ດ | ຊື່ສັດລ້ຽງ | ຄຳຖາມ 4 | ຄຳຖາມ 5 |
|---|---|---|---|
| 1 | ງົວ | 2 ໂຕ | 2.500.000 ກີບ |

ຄຳຖາມ6. ໃນໄລຍະ 12 ເດືອນຜ່ານມາ ສັດລ້ຽງແຕ່ລະຊະນິດໃນຄົວເຮືອນຂອງທ່ານຖືກເສຍ-ຕາຍພາກ ຫລື ເອົາໃຫ້ຄົນອື່ນຈັກໂຕ?(ຖ້າບໍ່ມີໃຫ້ຂຽນ 0 ໃສ່)

ຄຳຖາມ7. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ນຳເອົາສັດລ້ຽງຂອງຕົນເອງມາຂ້າໃຊ້ກິນເປັນອາຫານຈັກໂຕ?(ຖ້າບໍ່ມີໃຫ້ຂຽນ 0 ໃສ່).

## VI.5 ສັດປີກ

ໃນໄລຍະ 4ອາທິດຜ່ານມາຄົວເຮືອນຂອງທ່ານໄດ້ລ້ຽງສັດປີກຊະນິດໃດຊະນິດນຶ່ງບໍ?

ຄຳຕອບວ່າ ໄດ້ລ້ຽງ ໃຫ້ຂີດວົງອ້ອມເອົາເລກ 1= ໄດ້ລ້ຽງ , ຖ້າຄຳຕອບວ່າ ບໍ່ໄດ້ ລ້ຽງໃຫ້ຂີດວົງມົນເອົາເລກ 2 = ບໍ່ໄດ້ລ້ຽງ ແລ້ວຂ້າມໄປຖາມ ພາກ V.6.

ຄຳຖາມ1: ປັດຈຸບັນຄົວເຮືອນຂອງທ່ານໄດ້ລ້ຽງສັດແຕ່ລະປະເພດຈັກໂຕ?

ຄຳຖາມ 2. ໃນໄລຍະ 4ອາທິດຜ່ານມາຄົວເຮືອນຂອງທ່ານໄດ້ຂາຍສັດປີກຊະນິດໃດແດ່ ແລະ ຈຳນວນເທົ່າໃດໂຕ?

**ລະຫັດສັດປີກ:**

| ລະຫັດ | ຊື່ສັດປີກ | ໝາຍເຫດ |
|---|---|---|
| 4560 | Chicken | Nun farm and farm chicken |
| 4561 | ທ່ານ-ໄກ່ຕ໊ອກ | ໃສ່ຮ່ວມກັນຍ້ອນມີສ່ວນນ້ອຍ |
| 4562 | Duck | Duck any kind |
| 4563 | Turkic | |
| 4564 | Bird any kind | |
| 4565 | Other poultry | Specify |

ຄຳຖາມ3. ສັດປີກທີ່ໄດ້ຂາຍແຕ່ລະຊະນິດມີມູນຄ່າລວມຫຼາຍປານໃດ ?

ຄຳຖາມ 4. ໃນໄລຍະ 4ອາທິດຜ່ານມາຄົວເຮືອນຂອງທ່ານ ໄດ້ເອົາສັດປີກຂອງຕົນມາບໍລິໂພກ ແລກປ່ຽນ ຫລື ເອົາໃຫ້ຄົນອື່ນເທົ່າໃດໂຕ?

## VI.6. ລາຍການອື່ນໆ

ໃນໄລຍະ 4 ອາທິດທີ່ຜ່ານມາ ຄົວເຮືອນຂອງທ່ານໄດ້ຂາຍຜະລິດຕະພັນກະສິກຳອັນອື່ນອີກບໍເຊັ່ນ:(ໄຂ່ເປັດ,ໄຂ່ໄກ່,ໄຂ່ນົກ,ດອກໄມ້,ນ້ຳເຜີ້ງ,ກົບ,ຂຽດ,ໄຂ່ມົດແດງ...,ຫລື ຜະລິດຕະພັນຈາກການລ່າເນື້ອ ແລະ ຜະລິດຕະພັນຈາກປ່າໄມ້ (ເຄື່ອງປ່າຂອງນາ)ເປັນເງິນເທົ່າໃດກີບໃນແຕ່ລະຜະລິດຕະພັນ?.

**ຕົວຢ່າງ:ລະຫັດຜະລິດຕະພັນກະສິກຳ ຫລື ຈາກການລ່າເນື້ອ.**

| Code | Item | Remark |
|---|---|---|
| 4130 | Milk | Cows |
| 4140 | Egg | Duck egg |
| 4141 | Egg | Chicken egg |
| 4060 | Food | Food for Pig |
| 4061 | ເຂົ້າປາຍ-ເຂົ້າປຽນ | ເຂົ້າມຸ່ນສຳລັບເກືອສັດ |
| 4070 | Tobacco | ໃບຢາສູບ |
| 4071 | Sugar can | With water or stone |
| 4072 | Cotton | Make for Mastar |
| 4073 | tee | For drink |

| | | |
|---|---|---|
| 4150 | Fogs | Animal living in water |
| 4151 | Ant egg | Can make for food |
| 4152 | Kind of bird | |
| 4153 | Snake | Any of snake |
| 4154 | ກວາງ | |
| 4155 | ຟານ | |
| 4156 | Forest pig | |
| 4157 | ໜັງສັດ-ເຂົາ-ດູກ | ນັບທັງສັດປ່າ |
| 4158 | Kind of animalຮອກ-ກະແຕ-ເຫງັນ-ບ່າງ | ແລະ ຈຳພວກສັດທີ່ຄ້າຍຄື |
| 4159 | Other | Specify |

## VI. ການຊື້ ແລະຂາຍເຄື່ອງໃຊ້ຍາວນານຂອງຄົວເຮືອນ ໃນໄລຍະ 12 ເດືອນ ຜ່ານມາ.

ໄລະຫັດການຊື້ ແລະ ການຂາຍເຄື່ອງໃຊ້ຍາວນານໃນ12ເດືອນຜ່ານມາ:

**ເຟີນີເຈີ ແລະ ເຄື່ອງຕົບແຕ່ງເຮືອນ.**

| Code | Item | ຄຳອະທິບາຍ | ຕົວຢ່າງ |
|---|---|---|---|
| 201 | Bed | ຕຽງໄມ້,ຕຽງເຫລັກ,ຕຽງສະແນນ | ຕຽງສະແນນນັ່ງຫລິ້ນ ຫລືແມ່ຢູ່ກຳໃຊ້ |
| 202 | ຕູ້ໄຊ | ຕູ້ໃຫຍ່(ຕູ້ເຟີນີເຈີ) | ຕູ້ໃສ່ເສື້ອຜ້າ,ຕູ້ສອງຖ້ານ(ຖ້ານເທິງອາດຈະໃສ່ປື້ມວາລະສານ ຫລື ຕັ້ງເທັບໂທລະທັດຕ່າງໆ...ຖ້ານລຸ່ມຈະໄຊວັດຖຸຕ່າງໆ) |
| 203 | ຕູ້ໃສ່ຈອກ | ເປັນຕູ້ໃສ່ຈອກໂດຍສະເພາະ | ຕູ້ໃສ່ຈອກແກ້ວ,ຈອກດິນ,ຖ້ວຍ-ຈານ... |
| 204 | Food table ຊຸດໂຕະອາຫານ | ຊຸດໂຕະໄມ້,ຊຸດໂຕະເຫລັກ/ຢາງ | ຊຸດໂຕະກິນເຂົ້າ |
| 205 | Sofa ຊຸດຊາລົງ | ໂຊຟາ(ຜະລິດດ້ວຍໄມ້,ຫວາຍ,ໜັງ...) | ຢູ່ໃນຫ້ອງຮັບຮອງແຂກ |
| 206 | ໂຕະ,ຕູ້ກັບເຂົ້າ | ໂຕະ,ຕູ້ໃສ່ຖ້ວຍຊາມໃນຫ້ອງກິນເຂົ້າ | ຫລື ຢູ່ໃນເຮືອນຄົວ |
| 207 | ຕັ່ງ,ມ້ານັ່ງ | ຕັ່ງເກົ້າອີ້,ຕັ່ງມ້າຍາວ... | ຕັ່ງນັ່ງເຮັດວຽກຫ້ອງການ,ຕັ່ງຍາວນັກຮຽນ |
| 208 | ອື່ນໆ | | |
| 209 | ຄ່າສ້ອມແປງ | ການສ້ອມແປງເຄື່ອງເຟີນີເຈີ | ສ້ອມແປງຕູ້,ໂຕະ-ຕັ່ງຕ່າງໆ... |
| 210 | ສາດປູ | ສາດຢາງ ຫລື ສາດຜື | ສາດຢາງປູເຮືອນ |
| 211 | ຜ້າປູບ່ອນ | ຜ້າເຊື່ອ,ຜ້າປູບ່ອນ,ໝອນ | ເຊື່ອຟອງນ້ຳປູນອນ |
| 212 | ຜ້າຮົ່ມ/ມຸ້ງ | ຜ້າຮົ່ມນອນທຸກຊະນິດ/ມຸ້ງກາງນອນ | ຜ້າຮົ່ມໂຕງ... |
| 213 | ຜ້າເຊັດ | ຜ້າເຊັດໂຕ,ຜ້າເຊັດໜ້າ | ຜ້າເຊັດຈາກໂຮງງານ ຫລື ຜ້າແພອີໂປ້ |
| 214 | ຜ້າກັ້ງ | ຜ້າກັ້ງປ່ອງຢ້ຽມ | ຜ້າກັ້ງໄຊໃນຫ້ອງນອນ ຫລື ຫ້ອງຮັບແຂກ |
| 215 | ຜ້າປູ | ໃຊ້ສຳລັບເວລາກິນອອອາຫານຕ່າງໆ | ປູໂຕະ,ຜ້າເຊັດມື,ຜ້າເຊັດປາກ |

| | | | |
|---|---|---|---|
| 216 | ຜ້າອື່ນໆ | | |
| 217 | ຄ່າສ້ອມແຊມ | ນັບແຕ່ລະທັດ 210-216 | ການສ້ອມແຊມຜ້າ |
| 218 | ຜ້າພົມ | ພົມປູພື້ນເຮືອນ | ຜ້າພົມປູຢູ່ຫ້ອງນອນ ຫລື ຫ້ອງຮັບແຂກ |
| 219 | ກະຕ່າ | ກະຕ່າທຸກຊະນິດ | ກະຕ່າຖືໄປຕະຫລາດ,ກະຕ່າໃສ່ຂີ້ເຫຍື້ອ.. |
| 220 | ໂຖດອກໄມ້ | ໂຖປູກດອກໄມ້ | ໂຖປູກດອກເສດຖີ |
| 221 | ດອກໄມ້ | ດອກໄມ້ປະດັບ/ໂຖໃສ່ແຈກັນ | ສ່ວນຫລາຍໂຊໄວ້ທີ່ຫ້ອງຮັບຮອງແຂກ |
| 222 | ຄ່າສ້ອມແປງ | ນັບແຕ່ລະທັດ  218-222 | ສ້ອມແປງສິ່ງຂອງດັ່ງກ່າວ |
| 223 | ດອກໄຟ | ດອກໄຟທຸກຊະນິດ ແລະ ຮູບພາບຕິດຝາເຮືອນ | |
| 224 | ອື່ນໆ | | |
| 225 | ໝໍ້ | ໝໍ້ໜຶ້ງເຂົ້າ,ໝໍ້ແຕ່ງກິນ | ໝໍ້ໂລ ຫລື ໝໍ້ດິນ |
| 226 | ໝໍ້ຫຸງເຂົ້າໄຟຟ້າ | | |
| 227 | ໝໍ້ຕົ້ມນ້ຳໄຟຟ້າ | | |
| 228 | ແອບເຂົ້າ | | |
| 229 | ຄຸຕັກນ້ຳ | | |
| 230 | ເຕົາໄຟ | ເຕົາໄຟໃຊ້ຖ່ານ,ໃຊ້ໄຟຟ້າ,ເຕົາແກ໊ດ | ເຕົາໄຟທີ່ບໍ່ມີເຕົາອົບ |
| 231 | ຕູ້ເຢັນ/ຕູ້ນ້ຳກ້ອນ | | |
| 232 | ເຕົາລີດ/ໂຕະລີດຜ້າ | ເຕົາລີດໃຊ້ໄຟຟ້າ ຫລື ໃຊ້ຖ່ານ | |
| 233 | ແອເຢັນ | | |
| 234 | ພັດລົມ | ພັດລົມທຸກຊະນິດ | ພັດລົມດູດອາກາດ |
| 235 | ຈັກຫຍິບເຄື່ອງ | ຈັກຫຍິບໄຟຟ້າ/ຈັກຫຍິບບໍ່ໃຊ້ໄຟຟ້າ | |
| 236 | ຈັກຊັກຜ້າ | | |
| 237 | ອື່ນໆ | ບອກແຈ້ງ | |
| 238 | ຄ່າສ້ອມແປງ | ແຕ່ລະທັດທີ 225-238 | ເຄື່ອງໃຊ້ຄົວເຮືອນ |
| 269 | ລົດໃຫຍ່ | ລົດເກັ໋ງ,ລົດຕູ້,ລົດກະບະ,ລົດບັນທຸກ... | |
| 270 | ລົດຈັກ | | |
| 271 | ລົດຖີບ | ລວມເອົາທັງລົດຖີບເດັກນ້ອຍ | |
| 272 | ອື່ນໆ | ໃຫ້ເວົ້າແຈ້ງ | ລົດຕ໊ອກໆ,ເຮືອ... |
| 292 | ວິທະຍຸ/ເທັບ | ວີຊີດີ/ດີວີດີ | |
| 293 | ໂທລະພາບ | | |
| 294 | ຫລັກອັງແຕນ | ຈານດາວທຽມ | |
| 295 | ເຄື່ອງຫລິ້ນວີດີໂອ | | |
| 296 | ກ້ອງຖ່າຍຮູບ | ກ້ອງຖ່າຍທຳວີດີໂອ | |
| 297 | ເຄື່ອງຫລິ້ນດົນຕຣີ | ນັບທັງອຸປະກອນການຫລິ້ນທຸກຊະນິດ | ກີຕາ,ສີຊໍ,ແຄນ,ກອງຫາງ-ກອງຊຸມ... |
| 298 | ໂທລະສັບ | ຕັ້ງໂຕະ/ໂຟນີ | |
| 299 | ໂທລະສັບ | ມືຖື | |

| | | | |
|---|---|---|---|
| 300 | ຄອມພິວເຕີ | ພ້ອມອຸປະກອນເປັນຊຸດ | |
| 301 | ຄ່າສອ້ມແປງ | ແຕ່ລະຫັດທີ 292-300 | |
| 342 | ໂມງ | ໂມງທຸກຊະນິດ | |
| 343 | ເຄື່ອງເອ້ | ເພັດພອຍ,ສ້ອຍແຫວນ,ປະລັກແຂນ... | ບ້ວງຫູ-ຕຸ້ມຫູ |
| 344 | ການສ້ອມແປງ | ແຕ່ລະຫັດ342-343 | ວັດຖຸມີຄ່າທຸກຊະນິດ |

## .VII ລາຍຮັບ ແລະ ການໂອນ

ຄຳຖາມ1. ໃນໄລຍະ 1 ເດືອນຜ່ານມາ ໃນຄົວເຮືອນ ຂອງ ທ່ານມີໃຜແດ່ທີ່ມີລາຍຮັບ ຫຼື ໄດ້ຮັບຂອງຂ້ວນ ເປັນເງິນສົດ ຫຼືເປັນວັດຖຸ ?

ໃນຄຳຖາມນີ້ມີຄຳຕອບໃຫ້ເລືອກ ຄື : ລາຍຮັບຕົ້ນຕໍ , ລາຍຮັບຈາກຊັບສົມບັດ, ການໂອນ ແລະລາຍຮັບອື່ນໆ ທີ່ໄດ້ຮັບ .ການຈົດກ່າຍໃຫ້ຈົດເລກທີ່ບຸກຄົນຄືກັບໜ້າທີ່ 1 .

ຕົວຢ່າງ :ລາຍຮັບຕົ້ນຕໍ1 ບຸກຄົນທີ່01 ບຸກຄົນທີ່ 04

- ຄ່າແຮງງານແລະເງິນເດືອນເປັນເງິນສົດ 180000 ກີບ
- ຄ່າປະກັນໄພ............
- ຄ່າແຮງງານ ............. 200000 ກີບ

ຕົວຢ່າງ:ລາຍຮັບຈາກຊັບສົມບັດ 2 ບຸກຄົນທີ01 ບຸກຄົນທີ02

-ດອກເບ້ຍ 250.000 ກີບ 150.000 ກີບ

- ເງິນປັນຜົນ(ໝາຍເຖິງເງິນແບ່ງປັນກຳໄລຈາກການຄ້າ-ການລົງທຶນຮ່ວມກັນ)
- ຄ່າເຊົ່າອື່ນໆ(ໝາຍເຖິງລາຍຮັບຈາກຄ່າເຊົ່າລົດ,ຄ່າເຊົ່າເຮືອນ ແລະ ຄ່າເຊົ່າອື່ນໆ ນອກຈາກຄ່າເຊົ່າດິນ).
- ຄ່າເຊົ່າດິນ ເລກທີບຸກຄົນ...

(ໃນກໍລະນີຄ່າເຊົ່າເປັນປີແມ່ນໃຫ້ມາຫານໃຫ້ 12 ເດືອນ)

**ຕົວຢ່າງ:ການໂອນ ແລະ ລາຍຮັບອື່ນໆ3**

- ບຳນານ-ບຳເນັດ/ປະກັນໄພຊີວິດ(ແມ່ນລາຍຮັບຈາກການເຮັດໜ້າທີ່ການງານໃດນຶ່ງເມື່ອຮອດອາຍຸການແລ້ວ)
- ຂອງຂວັນທີ່ໄດ້ຮັບເປັນເງິນສົດຈາກລາວ(ອາດຈະແມ່ນເງິນຍ້ອງຍໍຊົມເຊີຍຕໍ່ຜົນງານໃດນຶ່ງທີ່ທ່ານໄດ້ສ້າງຄຸນງາມຄວາມດີ...)
- ຂອງຂວັນທີ່ໄດ້ຮັບເປັນເງິນສົດຈາກຕ່າງປະເທດ(ໃຫ້ປ່ຽນເປັນເງິນກີບສ່ວນຫລາຍຈະເປັນເງິນທີ່ໄດ້ຮັບຈາກຍາດຕິພີ່ນ້ອງ ຫລື ໝູ່ເພື່ອນ,ຜູ້ອຸປະຖຳໃດນຶ່ງ...)

- ຂອງຂວັນທີ່ໄດ້ຮັບເປັນວັດຖຸຈາກລາວ(ອາດຈະແມ່ນຂອງຂວັນຍ້ອງຍໍຊົມເຊີຍຕໍ່ຜົນງານໃດນຶ່ງທີ່ທ່ານໄດ້ສ້າງຄຸນງາມຄວາມດີ...ໃຫ້ຕີລາຄາເປັນເງິນສົດ)
- ຂອງຂວັນທີ່ໄດ້ຮັບເປັນວັດຖຸຈາກຕ່າງປະເທດ(ໃຫ້ຕີລາຄາວັດຖຸນັ້ນເປັນເງິນກີບສ່ວນຫລາຍຈະເປັນຂອງຂັວນທີ່ໄດ້ຮັບຈາກຍາດຕິພີ່ນ້ອງ ຫລື ໝູ່ເພື່ອນ,ຜູ້ອຸປະຖຳໃດນຶ່ງ...)
- ໄດ້ຮັບຈາກບ້ານ/ວັດ/ມູນນິທິອື່ນໆຕົວຢ່າງ: ລູກສາວຂອງທ່ານ ບຸນລວຍ ໄດ້ຮັບທຶນການສຶກສາຈາກສະມາຄົມ ຫລື ຈາກອົງການຊ່ວຍເຫລືອໃດນຶ່ງ.
- ໄດ້ຮັບຈາກການໂອນອື່ນໆ(ການໂອນມໍລະດົກ ຫລື ການໂອນຊັບສິນອື່ນໆ, ແມ່ນຈົດກ່າຍເລກທີຕາມມນຳ້ເບີບຸກຄົນທີ່ໄດ້ຮັບແລະ ຕີມູນຄ່າເປັນເງິນກີບ)

ຕົວຢ່າງການໃຊ້ຈ່າຍຢູ່ຕ່າງປະເທດໃນ 12 ເດືອນຜ່ານມາ

-ສຳລັບຄຳຖາມນີ້ແມ່ນຖາມໃນກໍລະນີທີ່ມີໃຜຜູ້ນຶ່ງ ຫລື ທັງສະມາຊິກໃນຄົວເຮືອນໄປຕ່າງປະເທດ,ຖ້າຫາກຮູ້ລາຍຈ່າຍຂອງແຕ່ລະຄົນແມ່ນບັນທຶກລົງຕາມລຳດັບ,ແຕ່ຖ້າບໍ່ຮູ້ໃຫ້ຈົດເອົາມູນຄ່າການໃຊ້ຈ່າຍລວມທັງໝົດຂອງການຈ່າຍ.

ຕົວຢ່າງ: ຄອບຄົວທ່ານ ທົບສະຫວັນເດີນທາງໄປໜອງຄາຍ,ທຸກການໃຊ້ຈ່າຍຂອງລາວເອງຂອງເມຍ ແລະ ຂອງລູກແມ່ນຈຳບໍ່ໄດ້ວ່າຈ່າຍໃຫ້ແຕ່ລະຄົນໝົດຫລາຍປານໃດ,ເພາະວ່າເມຍເປັນຜູ້ຈ່າຍທັງໝົດ.ສະແດງວ່າຈຳນວນເງິນທີ່ໄດ້ຈ່າຍແມ່ນຈະຕົກຢູ່ຊ່ອງຂອງເມຍ.

**ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານທີ່ໃຫ້ຄວາມສົນໃຈອ່ານ ແລະ ສຶກສາແຕ່ຕົ້ນຕະຫລອດປາຍ.**

# ໂຊກດີ!